# ບົດແນະນຳ
# ສຳລັບການອຳນວຍຄວາມສະດວກການຜະລິດກະສິກຳ
# ເປັນສິນຄ້າແບບມີສັນຍາ

**National Agriculture and Forestry Extension Services (NAFES)**

**Supported by: Laos Extension for Agriculture Project (LEAP)**

## June 2012

## ສາລະບານ

ພາກທີ 1: ພາກສະເໜີ ........ 4

1.1 ປະຫວັດຄວາມເປັນມາ ........ 4

1.2 ຈຸດປະສົງຂອງບົດແນະນຳ ........ 4

1.3 ວິທີການ ແລະ ຂະບວນການພັດທະນາບົດແນະນຳ ........ 4

1.4 ໂຄງສ້າງຂອງບົດແນະນຳ ........ 5

ພາກທີ 2: ນຳສະເໜີກ່ຽວກັບການຜະລິດກະສິກຳເປັນສິນຄ້າແບບມີສັນຍາ ........ 6

2.1 ນິຍາມ ........ 6

2.2 ຮູບແບບຂອງການຜະລິດເປັນສິນຄ້າແບບມີສັນຍາ ........ 6

2.4 ລັກສະນະຂອງການຜະລິດເປັນສິນຄ້າແບບມີສັນຍາ ........ 10

2.5 ຜູ້ມີສ່ວນຮ່ວມຫຼັກ ແລະ ພາລະບົດບາດ ........ 14

2.6 ຂໍ້ດີ ແລະ ຂໍ້ເສຍ ຂອງການຜະລິດກະສິກຳເປັນສິນຄ້າແບບມີສັນຍາ ........ 18

2.7 ບົດຮຽນທີ່ຖອດຖອນໄດ້ຈາກການຜະລິດກະສິກຳເປັນສິນຄ້າແບບມີສັນຍາ ........ 19

2.7.1 ບັນດາປັດໃຈທີ່ພົວພັນ ແລະ ກໍ່ໃຫ້ເກີດຜົນສຳເລັດ ........ 19

2.7.2 ປັດໃຈທີ່ກໍ່ໃຫ້ເກີດບັນຫາ ຫຼື ບໍ່ປະສົບຜົນສຳເລັດ ........ 21

ພາກທີ 3: ການອຳນວຍຄວາມສະດວກການຜະລິດເປັນສິນຄ້າແບບມີສັນຍາ ........ 21

3.1 ຈຸດປະສົງ ແລະ ບົດບາດຂອງຜູ້ອຳນວຍຄວາມສະດວກ ........ 22

3.2 ຈຸດຢືນຂອງຜູ້ອຳນວຍຄວາມສະດວກ ........ 23

3.3 ຂະບວນການ ການຜະລິດກະສິກຳເປັນສິນຄ້າແບບມີສັນຍາ ແລະ ການອຳນວຍຄວາມສະດວກໃນແຕ່ລະຂັ້ນຕອນ ........ 24

3.3.1 ຂັ້ນຕອນທີ 1: ການສະເໜີ ແລະ ຂໍອະນຸມັດການລົງທຶນ ........ 25

3.3.2 ຂັ້ນຕອນທີ 2: ການພົບປະເບື້ອງຕົ້ນ ແລະ ການກຳນົດກອບຄວາມຄິດ 27

3.3.3 ຂັ້ນຕອນທີ 3: ກຳນົດພື້ນທີ່ການຜະລິດ ແລະ ຊາວກະສິກອນ ເບື້ອງຕົ້ນ 27
3.3.4 ຂັ້ນຕອນທີ 4: ປະເມີນຄວາມເປັນໄປໄດ້ 28
3.3.5 ຂັ້ນຕອນທີ 5: ການຕັດສິນໃຈກ່ຽວກັບພື້ນທີ່ ແລະ ຊາວກະສິກອນ 29
3.3.6 ຂັ້ນຕອນທີ 6: ການພັດທະນາສັນຍາ 30
3.3.7 ຂັ້ນຕອນທີ 7: ການເຈລະຈາ ແລະ ຕົກລົງເອກະພາບກ່ຽວກັບສັນຍາ 33
3.3.8 ຂັ້ນຕອນທີ 8: ການຕົກລົງ ແລະ ເຊັນສັນຍາ 37
3.3.9 ຂັ້ນຕອນທີ 9: ການຈັດຕັ້ງປະຕິບັດສັນຍາ 39
3.3.10 ຂັ້ນຕອນທີ 10: ການຕິດຕາມກວດກາ, ການປະເມີນຜົນ ແລະ ງົບປະມານ 39
3.4 ຄວາມສຳຄັນທາງດ້ານກົດໝາຍຕໍ່ການຜະລິດກະສິກຳເປັນສິນຄ້າແບບມີສັນຍາ 41
ເອກະສານອ້າງອີງ 44

## ພາກທີ 1: ພາກສະເໜີ

### 1.1 ປະຫວັດຄວາມເປັນມາ

ໃນ ສ ປ ປ ລາວ ການຜະລິດກະສິກຳເປັນສິນຄ້າແບບມີຂໍ້ຜູກພັນໃນສັນຍາ ກຳລັງຂະຫຍາຍຕົວ ຊຶ່ງເປັນສ່ວນໜຶ່ງຂອງການສົ່ງເສີມການຜະລິດກະສິກຳ ໃຫ້ກາຍເປັນສິນຄ້າ. ລັດຖະບານໄດ້ມີການສົ່ງເສີມການມີສ່ວນຮ່ວມຂອງຊາວກະສິກອນ ແລະ ຜູ້ລົງທຶນ ໃນລະບົບການຜະລິດດັ່ງກ່າວ ທາງກົງ ແລະ ທາງອ້ອມ; ແລະ ສ່ວນໃຫຍ່ແມ່ນຈັດຕັ້ງປະຕິບັດໃນຮູບແບບ “2+3” ຫຼື ຊາວກະສິກອນປະກອບສ່ວນແຮງງານ ແລະ ທີ່ດິນ ສ່ວນນັກລົງທຶນແມ່ນຮັບຜິດຊອບທາງດ້ານທຶນຮອນ, ເທັກໂນໂລຊີ ແລະ ການຕະຫຼາດ. ແນວໃດກໍ່ຕາມ ຜົນຂອງການຈັດຕັ້ງປະຕິບັດທີ່ຜ່ານມາເຫັນວ່າມີທັງ ຜົນບວກ ແລະ ລົບ ສັບປົນກັນ.

ໂຄງການ ສົ່ງເສີມກະສິກຳ (LEAP) ໄດ້ໃຫ້ການສະໜັບສະໜູນ ກອງສົ່ງເສີມກະສິກຳ-ປ່າໄມ້ (NAFES) ໃນ ການຈັດຕັ້ງປະຕິບັດໂຄງການສົ່ງເສີມກະສິກຳ (LEA+) ໃນ 5 ເມືອງ ຂອງ 5 ແຂວງໃນພາກເໜືອ ຄື: ຜົ້ງສາລີ, ອຸດົມໄຊ, ຊຽງຂວາງ, ຫົວພັນ ແລະ ຫຼວງພະບາງ. ໃນບັນດາແຂວງເຫຼົ່ານີ້ ພາກລັດ ແລະ ເອກະຊົນ ກຳລັງ ສົ່ງເສີມ ແລະ ລິເລີ່ມການຜະລິດເປັນສິນຄ້າແບບມີສັນຍາ ແລະມີຫຼາຍກໍລະນີ ແລະ ຮູບແບບ ທີ່ເຈົ້າໜ້າທີ່ຂອງລັດໄດ້ອຳນວຍຄວາມສະດວກ. ແນວໃດກໍ່ຕາມ, ການຈັດຕັ້ງປະຕິບັດແມ່ນແຕກຕ່າງກັນໃນແຕ່ລະເມືອງ ແລະ ກໍ່ມີ ຜົນສຳເລັດ ແລະ ບໍ່ສຳເລັດ ສັບປົນກັນຢູ່. ນອກນັ້ນ ຫຼາຍພາກສ່ວນທີ່ກ່ຽວຂ້ອງທີ່ມີສ່ວນຮ່ວມ ຍັງບໍ່ຮູ້ ພາລະບົດບາດ ແລະ ຄວາມຮັບຜິດຊອບຂອງຕົນຢ່າງຈະແຈ້ງແລະ ການຊ່ວຍເຫຼືອ ໃນການອຳນວຍຄວາມສະດວກ ຂອງພະນັກງານສົ່ງເສີມກະສິກຳ ຍັງຈຳກັດ. ດ້ວຍເຫດນີ້ ຈຶ່ງເຫັນວ່າ ມັນມີຄວາມຈຳເປັນ ທີ່ຕ້ອງໄດ້ພັດທະນາ ປຶດແນະນຳ ສຳລັບພະນັກງານສົ່ງເສີມ ເພື່ອ ເປັນບ່ອນອີງ ໃນການອຳນວຍຄວາມສະດວກ ການຜະລິດເປັນສິນຄ້າແບບມີສັນຍາ ຢ່າງເປັນທຳ ແລະ ມີຄວາມສະເໝີພາບກັນ. ປຶດແນະນຳນີ້ ຖືກພັດທະນາຂຶ້ນ ໂດຍການເກັບກຳເອົາບັນດາບົດຮຽນ ແລະ ປະສົບການ ຂອງຜູ້ຈັດຕັ້ງປະຕິບັດຕົວຈິງ ໃນພາກສະໜາມ, ບົດຮຽນທີ່ດີຈາກກໍລະນີທີ່ປະສົບຜົນສຳເລັດ ແລະ ຖອດຖອນບົດຮຽນ ສຳລັບກໍລະນີທີ່ຫຼົ້ມເຫຼວກ່ຽວກັບການດຳເນີນການຜະລິດເປັນສິນຄ້າແບບມີສັນຍາໃນເຂດຕ່າງໃນລາວ ມາຮີບໂຮມ ສັງລວມ, ສັບຊ້ອນ ແລະ ພະຍາຍາມດັດປັບໃຫ້ເໝາະສົມ ແລະ ສາມາດນຳໃຊ້ໄດ້ໃນຂອບເຂດທົ່ວປະເທດ.

### 1.2 ຈຸດປະສົງຂອງປຶດແນະນຳ

ປຶດແນະນຳນີ້ຜະລິດຂຶ້ນມາແມ່ນເພື່ອເປັນບ່ອນອີງໜຶ່ງສຳລັບພະນັກງານສົ່ງເສີມໃນການອຳ ນວຍຄວາມສະ ດວກໃນການຜະລິດເປັນສິນຄ້າແບບມີສັນຍາຢ່າງມີປະສິດທິຜົນ, ຍຸດຕິທຳ ແລະ ຍືນຍົງ. ປຶດແນະນຳນີ້ຈະເປັນເຄື່ອງມື, ບ່ອນອີງ, ໃຫ້ຂໍ້ແນະນຳ, ຕົວຢ່າງ ຫຼື ແບບຢ່າງໃນການອຳນວຍຄວາມສະດວກ ການຜະລິດເປັນສິນຄ້າແບບມີສັນຍາ ໃຫ້ມີຄວາມເປັນທຳ, ສະເໝີພາບ ແລະ ໃນທາງທີ່ມີປະສິດທິພາບ ແລະ ໂປ່ງໃສ ສຳລັບ ຊາວກະສິກອນ ແລະ ນັກລົງທຶນ ເພີ່ມຂຶ້ນ.

### 1.3 ວິທີການ ແລະ ຂະບວນການພັດທະນາປຶດແນະນຳ

ວິທີການຕົ້ນຕໍ ຂອງການພັດທະນາປຶດແນະນຳສະບັບນີ້ ແມ່ນການ ສຶກສາ ແລະ ສັງລວມ ຜົນ, ບົດຮຽນ ແລະ ປະສົບການຕົວຈິງ ກ່ຽວກັບ ການຜະລິດເປັນສິນຄ້າແບບມີສັນຍາ ມາດັດປັບ ເພື່ອໃຫ້ສາມາດໃຊ້ໄດ້ໃນເຂດຕ່າງໆ

ໃນທົ່ວປະເທດ ເທົ່າທີ່ເປັນໄປໄດ້. ໃນນັ້ນ, ໄດ້ຜ່ານຂະບວນການທົບທວນ ແລະ ສຶກສາ ສະພາບ ການຜະລິດເປັນສິນຄ້າແບບມີສັນຍາໃນ ແຂວງຕ່າງໆ ໃນລາວ; ພັດທະນາຮ່າງບົດແນະນຳເບື້ອງຕົ້ນ ແລະ ຜ່ານກອງປະຊຸມຄະນະວິຊາການ; ປັບປຸງ ແລະ ນຳເອົາຮ່າງເບື້ອງຕົ້ນໄປທົດສອບການນຳໃຊ້ ລວມທັງ ກວດຄືນບັນດາຂໍ້ມູນ ແລະ ເນື້ອໃນຂອງຮ່າງສະບັບຕົ້ນໃນພາກສະໜາມ ໂດຍສະເພາະໃນແຂວງທີ່ມີການເຮັດການຜະລິດເປັນສິນຄ້າແບບມີສັນຍາ; ຫຼັງຈາກນັ້ນ ນຳເອົາຜົນຮັບຈາກການທົດສອບມາປັບປຸງ, ສະເໜີຜ່ານກອງປະຊຸມ ປຶກສາຫາລື ແລະ ເອກະພາບກັບບັນດາຜູ້ມີສ່ວນຮ່ວມຕ່າງໆ.

ການທົບທວນ ແລະ ສຶກສາພາກສະໜາມແມ່ນເພື່ອເຂົ້າໃຈເຖິງສະພາບຄວາມເປັນຈິງການຈັດຕັ້ງປະຕິບັດ, ບັນຫາຕ່າງໆ ກ່ຽວກັບ ການຜະລິດກະສິກຳເປັນສິນຄ້າແບບມີສັນຍາໃນລາວ.ການສຶກສາເບື້ອງຕົ້ນ ເນັ້ນໃສ່ ການເກັບກຳຂໍ້ມູນໃນແຂວງທີ່ເປັນຕົວແທນໃນເຂດພາກກາງ ແລະ ພາກໃຕ້ຂອງລາວ ໂດຍສະເພາະແມ່ນແຂວງ ບໍລິຄຳໄຊ, ຈຳປາສັກ, ແລະ ແຂວງເຊກອງ.ການສຶກສາຄັ້ງຕໍ່ມາແມ່ນເນັ້ນໃສ່ ເຂດພາກເໜືອ ໂດຍສະເພາະແມ່ນແຂວງ ບໍ່ແກ້ວ, ອຸດົມໄຊ, ຫຼວງພະບາງ, ຫຼວງນ້ຳທາ ແລະ ຜົ້ງສາລີ ຊຶ່ງການເກັບກຳຂໍ້ມູນບໍ່ເນັ້ນໃສ່ສະເພາະສະພາບ ແຕ່ ຍັງສຸມໃສ່ ການສຶກສາ ບັນດາກໍລະນີ ແລະ ບັນດາປັດໃຈທີ່ພາໃຫ້ການຜະລິດເປັນສິນຄ້າແບບມີສັນຍາໄດ້ຮັບຜົນສຳເລັດ. ຂໍ້ມູນທີ່ສຳຄັນຕ່າງໆ ທີ່ໄດ້ມາ ໄດ້ຖືກປັບປຸງ ແລະ ສັບຊ້ອນ ເປັນອົງປະກອບຕ່າງໆ ຂອງບົດແນະນຳ.

ພາຍຫຼັງ ທີ່ ຮ່າງບົດແນະນຳເບື້ອງຕົ້ນ ພ້ອມດ້ວຍຂໍ້ແນະນຳ ໄດ້ຖືກພັດທະນາຂຶ້ນມາ ແລະ ສະເໜີ ຜ່ານກອງປະຊຸມຄະນະວິຊາການ (ທີ່ມີລາຍຊື່ໃນເອກະສານຄັດຕິດ 1) ເພື່ອປະກອບຄຳຄິດເຫັນ ແລະ ປັບປຸງໃຫ້ແທດເໝາະກັບສະພາບພື້ນທີ່. ຕໍ່ມາຮ່າງບົດແນະນຳເບື້ອງຕົ້ນ ໄດ້ນຳມາທົດສອບ ໃນຊ່ວງການລົງພາກສະໜາມຄັ້ງຕໍ່ມາ ເພື່ອກວດກາຄືນ ຂໍ້ມູນ, ເນື້ອໃນ ແລະ ຂໍ້ແນະນຳ ກັບຜູ້ປະຕິບ◌ັດຕົວຈິງໃນພາກສະໜາມ (ທີ່ມີລາຍຊື່ໃນເອກະສານຄັດຕິດ 2).

ສຸດທ້າຍ ເປັນກອງປະຊຸມປຶກສາຫາລື ປະກອບຄຳຄິດເຫັນ ເພື່ອປັບປຸງຮ່າງບົດແນະນຳ ດັ່ງກ່າວ ຮ່ວມກັບພະນັກງານສົ່ງເສີມກະສິກຳໃນພາກສະໜາມໃນ 5 ເມືອງທີ່ກ່າວມາ; ຕໍ່ມາຈຶ່ງໄດ້ ແລະ ປັບປຸງ ແລະ ຮັບຮອງບົດແນະນຳດັ່ງກ່າວຕາມລຳດັບ. ລາຍຊື່ ຂອງຜູ້ມີສ່ວນຮ່ວມໃນການສ້າງ ບົດແນະນຳ ນີ້ໄດ້ຄັດຕິດໃນເອກະສານ 1.

## 1.4 ໂຄງສ້າງຂອງບົດແນະນຳ

ບົດແນະນຳນີ້ປະກອບດ້ວຍ 3 ພາກຄື: **ພາກທີ 1** ນຳສະເໜີປະຫວັດຄວາມເປັນມາ, ເຫດຜົນ; ຈຸດປະສົງ, ວິທີການ ແລະ ຂະບວນການໃນການສ້າງບົດແນະນຳ; **ພາກທີ 2** ໃຫ້ຂໍ້ມູນ, ນຳສະເໜີ ແລະ ໃຫ້ຄວາມເຂົ້າໃຈກ່ຽວກັບການຜະລິດກະສິກຳເປັນສິນຄ້າແບບມີສັນຍາ, ຮູບແບບ, ລັກສະນະຂອງການຜະລິດກະສິກຳເປັນສິນຄ້າແບບມີສັນຍາ, ຂໍ້ດີ, ຂໍ້ເສຍ, ບົດຮຽນທີ່ຖອດຖອນໄດ້ຈາກພາກສະໜາມ ໃນລາວ; **ພາກທີ 3** ໃຫ້ຂໍ້ແນະນຳ ແລະ ບ່ອນອີງສຳລັບພະນັກງານສົ່ງເສີມໃນການອຳນວຍຄວາມສະດວກການຜະລິດກະສິກຳເປັນສິນຄ້າແບບມີສັນຍາ.

### ພາກທີ 2: ນຳສະເໜີກ່ຽວກັບການຜະລິດກະສິກຳເປັນສິນຄ້າແບບມີສັນຍາ

ເຂົ້າໃຈກ່ຽວກັບການຜະລິດກະສິກຳເປັນສິນຄ້າແບບມີສັນຍາເປັນອຽກບຸລິມະສິດ ສຳລັບການອຳນວຍຄວາມສະດວກການຜະລິດກະສິກຳເປັນສິນຄ້າແບບມີສັນຍາ. ພາກນີ້ໃຫ້ຂໍ້ມູນກ່ຽວກັບ ພາບລວມ ການຜະ ລິດກະສິກຳເປັນສິນຄ້າແບບມີສັນຍາໃນເງື່ອນໄຂຂອງລາວ ໂດຍສະເພາະແມ່ນ ນິຍາມ, ຮູບແບບ, ປະເພດ ແລະ ລັກສະນະການຜະລິດກະສິກຳເປັນສິນຄ້າແບບມີສັນຍາ, ຜູ້ມີສ່ວນຮ່ວມ, ບົດບາດ ແລະ ຄວາມຮັບຜິດຊອບ, ຂໍ້ດີ, ຂໍ້ເສຍ ຫຼື ຄວາມສ່ຽງ ແລະ ຂໍ້ຫຍຸ້ງຍາກໃນການການຜະລິດກະສິກຳເປັນສິນຄ້າແບບມີສັນຍາ.

#### 2.1 ນິຍາມ

ມີຫຼາຍການສຶກສາໄດ້ໃຫ້ຄຳນິຍາມກ່ຽວກັບການຜະລິດກະສິກຳເປັນສິນຄ້າແບບມີສັນຍາແຕກຕ່າງກັນໄປ; ອີງຕາມ LEAP (2007) ໃຫ້ນິຍາມວ່າ ການຜະລິດກະສິກຳເປັນສິນຄ້າແບບມີສັນຍາ ໝາຍເຖິງ ການຕົກລົງ ລະຫວ່າງ ຊາວກະສິກອນ ແລະ ຜູ້ປຸງແຕ່ງ ແລະ/ຫຼື ການຕະຫຼາດ ເພື່ອຜະລິດ ແລະ ສະໜອງຜະລິດຕະພັນ ກະສິກຳຕາມລາຄາທີ່ກຳນົດໄວ້. Teck-Ghee (1992) ໃຫ້ນິຍາມວ່າແມ່ນການຂາຍຜະລິດຕະພັນຜ່ານຕ່ອງໂສ້ການຜະລິດຕາມແນວຕັ້ງ ແລະ ການຕະຫຼາດ. ການກະກຽມ ແມ່ນຕິດພັນກັບຜູ້ຊື້ໃນການສະໜອງການຊ່ວຍເຫຼືອ ການຜະລິດ,ຕົວຢ່າງ ການສະໜອງປັດໃຈການຜະລິດ ແລະ ການຊ່ວຍເຫຼືອທາງດ້ານເຕັກນິກ. ພື້ນຖານຂອງການກະກຽມດັ່ງກ່າວ ແມ່ນພັນທະຂອງ ຊາວກະສິກອນ ທີ່ຈະສະໜອງຜົນຜະລິດ ໃນຈຳນວນ ແລະ ຄຸນນະພາບ ທີ່ກຳນົດໂດຍຜູ້ຊື້ ຊຶ່ງມີພັນທະໃນການຊ່ວຍເຫຼືອ ການຜະລິດຂອງຊາວກະສິກອນ ແລະ ການຊື້ຜະລິດຕະພັນດັ່ງກ່າວ. (Fullbrook, 2011) ເວົ້າວ່າແມ່ນການຕົກລົງການຜະລິດທີ່ມີຜົນບັງຄັບໃຊ້ໃນທາງກົດໝາຍ ຊຶ່ງຊາວກະສິກອນເຫັນດີກ່ຽວກັບລະບອບລາຄາ ແລະ ຈະຜະລິດສິນຄ້າສະໜອງໃຫ້ຜູ້ຊື້ ຊຶ່ງເປັນ ຕົວແທນ, ຕະຫຼາດ, ແລະ ອາດລວມທັງສະໜອງທຶນ ແລະ ເທັກໂນໂລຊີ. ສັນຍາແມ່ນຂໍ້ຕົກລົງທີ່ຜູກມັດໜຶ່ງ ຊຶ່ງສາມາດມີຜົນທາງກົດໝາຍ ແລະ ກົນໄກສຳລັບການຮ້ອງທຸກ ແລະ ຊົດເຊີຍ ທີ່ຍຸດຕິທຳ ເຊັ່ນ:ຜ່ານຂະບວນການຕັດສິນຂອງສານ.

ໃນ ພາສາລາວ, ຄຳເວົ້າທີ່ມີການນຳໃຊ້ຫຼາຍແມ່ນ ການເຮັດສັນຍາຜູກພັນສອງສົ້ນ ຊຶ່ງໝາຍເຖິງການເຮັດສັນຍາຜະລິດ ແລະ ເກັບຊື້ຜົນຜະລິດກະສິກຳ ລະຫວ່າງສອງພາກສ່ວນ-ກຸ່ມ ຫຼື ເປັນບຸກຄົນ ນັກລົງທຶນ[1], ພໍ່ຄ້າ[2] ແລະ ຜູ້ຜະລິດເຊັນສັນຍາການຜະລິດ, ເກັບຊື້ ແລະ ຂາຍຜົນຜະລິດ. ແນວໃດກໍ່ຕາມ;ໃນບົດແນະນຳນີ້, ຄຳວ່າ ຜູ້ລົງທຶນໝາຍວ່າ ບຸກຄົນ, ນິຕິບຸກຄົນ ທີ່ໄດ້ລົງທຶນດ້ານຕ່າງໆ ຊຶ່ງອາດກວມເອົາພໍ່ຄ້າ ຕ່າງໆ ທີ່ໄດ້ມີການລົງທຶນ ດັ່ງນັກລົງທຶນ ແລະ ໃນກໍລະນີ ທີ່ພໍ່ຄ້າມີການລົງທຶນນັ້ນ ເອີ້ນວ່າ: ຜູ້ລົງທຶນລາຍຍ່ອຍ.

#### 2.2 ຮູບແບບຂອງການຜະລິດເປັນສິນຄ້າແບບມີສັນຍາ

---

[1] ຜູ້ລົງທຶນ, ໃນກໍລະນີນີ້ ໝາຍເຖິງຜູ້ໄດ້ລົງທຶນໃນດ້ານຕ່າງໆ ເຊັ່ນ: ການລົງທຶນທາງດ້ານການເງິນ, ເທັກໂນໂລຊີ, ປັດໃຈການຜະລິດ ອື່ນໆ

[2] ພໍ່ຄ້າໝາຍເຖິງພໍ່ຄ້າປະເພດຕ່າງໆຜູ້ທີ່ຕ້ອງການຊື້ຜະລິດຕະພັນໂດຍບໍ່ໄດ້ມີການລົງທຶນແຕ່ຢ່າງໃດ

ການຜະລິດກະສິກຳເປັນສິນຄ້າແບບມີສັນຍາ ໃນລາວມີຫຼາຍຮູບແບບ ແຕກຕ່າງກັນໄປ; ແຕ່ ໂດຍລວມແລ້ວ, ສາມາດຈັດແບ່ງຕາມ 2 ລັກສະນະຫຼັກ ຊຶ່ງຂຶ້ນກັບ:

ກ. ຮູບແບບການພົວພັນລະຫວ່າງ ຜູ້ມີສ່ວນຮ່ວມຫຼັກ ເຊັ່ນ: ຜູ້ລົງທຶນ, ພໍ່ຄ້າ ແລະ ຜູ້ຜະລິດ.

ຂ. ຮູບແບບ ການຮ່ວມທຶນ ແລະ ແບ່ງຄວາມສ່ຽງ ລະຫວ່າງ ຜູ້ລົງທຶນ ແລະ ຜູ້ຜະລິດ.

***ກ. ການຈັດແບ່ງ ຮູບແບບຂອງການຜະລິດກະສິກຳເປັນສິນຄ້າແບບມີສັນຍາ ຕາມຮູບແບບການພົວພັນລະຫວ່າງ ຜູ້ລົງທຶນ ແລະ ຜູ້ຜະລິດ:***

ສາມາດແບ່ງອອກເປັນ 2 ຮູບແບບ ຄື: 1) ການພົວພັນໂດຍກົງ ແລະ 2) ການພົວພັນ ທາງ ອ້ອມ ລະຫວ່າງ ນັກລົງທຶນ ແລະ ຊາວກະສິກອນ. ໃນນັ້ນ, ການພົວພັນທາງອ້ອມ ລວມມີ 1) ນັກລົງທຶນ ແລະ ຊາວກະສິກອນມີການພົວພັນກັນຜ່ານຕົວແທນ, 2) ນັກລົງທຶນ ແລະ ຊາວກະສິກອນມີການພົວພັນກັນໂດຍ ມີຫຼາຍຜູ້ມີສ່ວນຮ່ວມ 3) ຜ່ານພໍ່ຄ້າຄົນກາງ.

***ການພົວພັນໂດຍກົງລະຫວ່າງ ນັກລົງທຶນ ແລະ ຊາວກະສິກອນ ຮູບແບບ:*** ຮູບແບບນີ້ ສ່ວນໃຫຍ່ແມ່ນຜູ້ລົງທຶນຊຶ່ງມີຫ້ອງການ ແລະ ພະນັກງານປະຈຳຢູ່ພື້ນທີ່ ທີ່ບໍລິສັດລົງທຶນ; ແລະ ພໍ່ຄ້າລາຍຍ່ອຍຊຶ່ງພົວພັນ ແລະ ຫຼື ເຮັດສັນຍາ ໂດຍກົງກັບຊາວກະສິກອນເພື່ອຊື້ຜົນຜະລິດໂດຍກົງ. ສຳລັບຜູ້ລົງທຶນ, ການພົວພັນທາງກົງນີ້; ສັນຍາ ຫຼື ຂໍ້ຕົກລົງ ແມ່ນ ໄດ້ຮັບການອຳນວຍຄວາມສະດວກ ຈາກພະນັກງານ ພາກສະໜາມຂອງບໍລິສັດ ຕົວຢ່າງ: ບໍລິສັດຢາສູບລາວ. ນອກນັ້ນ ພະນັກງານຈຳນວນນີ້ ຍັງເປັນຜູ້ຊ່ວຍ ທາງດ້ານບໍລິຫານ, ການຈັດຕັ້ງ ກຸ່ມຜູ້ຜະລິດ, ຄວບຄຸມຄຸນນະພາບ ລວມທັງ ການປະສານງານ ແລະ ແກ້ໄຂບັນຫາ ອື່ນໆທີ່ອາດເກີດຂຶ້ນ. ສຳລັບພໍ່ຄ້າ, ປົກກະຕິແລ້ວພົບວ່າພໍ່ຄ້າເຫຼົ່ານີ້ມີພຽງ ຂໍ້ຕົກລົງທີ່ຈະຊື້ ຜະລິດຕະພັນ ກະສິກຳ ແລະ ປົກກະຕິແມ່ນສະເພາະແມ່ນການຜະລິດລະດູແລ້ງ.

**ຮູບທີ 1:** ຮູບແບບ ການພົວພັນໂດຍກົງລະຫວ່າງ ນັກລົງທຶນ ແລະ ຊາວກະສິກອນ



***ຮູບແບບການພົວພັນລະຫວ່າງນັກລົງທຶນ ແລະ ຊາວກະສິກອນໂດຍຜ່ານຕົວແທນ:*** ຜູ້ລົງທຶນ ຫຼື ພໍ່ຄ້າຜູ້ທີ່ ມີການລົງທຶນສ່ວນຫຼາຍແມ່ນອາໄສຕົວແທນໃນທ້ອງຖິ່ນ ເພື່ອອໍານວຍຄວາມສະດວກ ທຸລະກິດຂອງເຂົາເຈົ້າ ໂດຍສະເພາະແມ່ນການປະສານງານ, ຈັດຕັ້ງ ແລະ ນໍາພາ ກຸ່ມຊາວກະສິກອນໃນການຜະລິດ ລວມທັງ ການແກ້ໄຂບັນຫາອື່ນໆທີ່ຕິດພັນຊາວກະສິກອນທີ່ຢູ່ໃນສັນຍາ. ບັນດາຕົວແທນເຫຼົ່ານີ້ ສ່ວນຫຼາຍແມ່ນອະດີດ ຄະນະບ້ານ, ຫົວໜ້າກຸ່ມຊາວກະສິກອນ, ຍາດພີ່ນ້ອງ, ຜູ້ທີ່ຮູ້ຈັກ ແລະ ບຸກຄົນສໍາຄັນ ຫຼື ອາວຸດໂສທີ່ເປັນທີ່ຮູ້ຈັກ ແລະ ນັບຖືຂອງຊາວບ້ານ. ປົກກະຕິ ຕົວແທນເຫຼົ່ານີ້ ມີສັນຍາ ຫຼື ຂໍ້ຕົກລົງກັບ ຜູ້ລົງທຶນ ແລະ ບາງຄັ້ງເປັນຕົວແທນຜູ້ລົງທຶນໃນການ ເຊັນ ສັນຍາ ກັບ ຊາວກະສິກອນ. ຜູ້ລົງທຶນເປັນຜູ້ຮັບຜິດຊອບກ່ຽວກັບຄ່າໃຊ້ຈ່າຍສໍາລັບການປະສານງານຂອງຕົວແທນ ແລະ ສ່ວນໃຫຍ່ຈະໄດ້ຮັບຜົນປະໂຫຍດຈາກ ແບ່ງສ່ວນຜົນຜະລິດ ຊຶ່ງຜູ້ລົງທຶນ ຄິດໄລ່ເປັນຈໍານວນເງິນໃຫ້. ການປະຕິບັດໃນຮູບແບບພົບຢູ່ການລົງທຶນກ່ຽວກັບຢ່າງພາລາ, ສາລີ, ອ້ອຍ, ຢາສູບ, ຊາ, ໝາກນອດ, ຖົ່ວ, ມັນຝຣັ່ງ ແລະ ອື່ນໆ.

**ຮູບທີ 2:** ຮູບແບບ ການພົວພັນລະຫວ່າງຜູ້ລົງທຶນ ແລະ ຊາວກະສິກອນຜ່ານຕົວແທນ




***ການພົວພັນລະຫວ່າງນັກລົງທຶນ ແລະ ຊາວກະສິກອນຜ່ານຫຼາຍພາກສ່ວນ:*** ການລົງທຶນຂະໜາດໃຫຍ່ ແລະ ຜ່ານລັດຖະບານ ມັກຈະນໍາໃຊ້ຮູບແບບນີ້. ຮູບແບບນີ້ຄ້າຍຄືກັນກັບ ຮູບແບບຜ່ານຕົວແທນແຕ່ ຈໍານວນ ຜູ້ມີສ່ວນຮ່ວມ ເຊັ່ນ: ຂະແໜງການຂອງລັດ ເປັນຕົ້ນແມ່ນ DAFO, P/DIC, P/DPI, ຫ້ອງວ່າການເມືອງ ບາງກໍລະນີລວມທີຄະນະກໍາມະການຄຸ້ມຄອງການລົງທຶນຂັ້ນແຂວງ ແລະ ເມືອງ. ບັນດາຜູ້ມີສ່ວນຮ່ວມເຫຼົ່ານີ້ ເປັນຜູ້ເຊື່ອມຕໍ່ກັບຊາວກະສິກອນ ແລະ ນອກນັ້ນ ຍັງລົງລາຍເຊັນເປັນພະຍານສັນຍາ ຫຼື ບາງຄັ້ງລົງ ລາຍເຊັນເປັນຕົວແທນຂອງຊາວກະສິກອນ. ແນວໃດກໍ່ຕາມຈໍານວນ, ປະເພດ ແລະ ບົດບາດ ຂອງຜູ້ມີສ່ວນຮ່ວມນີ້ແມ່ນແຕກຕ່າງກັນ ໃນແຕ່ລະການຜະລິດ ແລະ ການຈັດຕັ້ງປະຕິບັດຕົວຈິງມັກຈະຫັນໄປສູ່ຮູບແບບ ໃນຮູບທີ 1, 3, 4.

**ຮູບທີ 3**: ການພົວພັນນັກລົງທຶນ ແລະ ຊາວກະສິກອນຜ່ານຫຼາຍພາກສ່ວນ




***ການພົວພັນລະຫວ່າງຜູ້ລົງທຶນ ກັບ ຊາວກະສິກອນໂດຍຜ່ານພໍ່ຄ້າຄົນກາງ:*** ຮູບແບບກໍ່ຄ້າຍຄືກັນກັບຮູບແບບອື່ນໆ ແຕ່ພໍ່ຄ້າ ຊຶ່ງ ໄດ້ມີການພົວພັນ ແລະ ຂໍ້ຕົກລົງ ກັບຊາວກະສິກອນ ກ່ຽວກັບການເກັບຊື້ ສະສົມໄວ້ ແລະ ຂາຍຜະລິດຕະພັນຕໍ່ໃຫ້ຜູ້ລົງທຶນ ຫຼື ພໍ່ຄ້າ ໃນຕະຫຼາດປາຍທາງ. ພໍ່ຄ້າຈໍານວນໜຶ່ງແມ່ນມີການລົງທຶນກ່ອນ (ຜູ້ລົງທຶນລາຍຍ່ອຍ) ເປັນຕົ້ນແມ່ນການສະໜອງປັດໃນການຜະລິດ ແລະ ສ່ວນໜຶ່ງແມ່ນບໍ່ມີການລົງທຶນແຕ່ເກັບຊື້ຜະລິດຕະພັນຈາກຊາວກະສິກອນ ໂດຍບໍ່ມີການລົງທຶນ .

**ຮູບທີ 4**: ຮູບແບບ ການພົວພັນລະຫວ່າງຜູ້ລົງທຶນ ແລະ ຊາວກະສິກອນໂດຍຜ່ານພໍ່ຄ້າຄົນກາງ



***ຂ. ການຈັດແບ່ງ ຮູບແບບຂອງການຜະລິດກະສິກຳເປັນສິນຄ້າແບບມີສັນຍາ ຕາມຮູບແບບຂອງການຮ່ວມທຶນ ແລະ ການແບ່ງຄວາມສ່ຽງ:***

ໃນລາວ ການຜະລິດກະສິກຳເປັນສິນຄ້າແບບມີສັນຍາ; ການລົງທຶນ ໃນຮູບແບບ "2+3" (ຊາວກະສິກອນ ແລະ ນັກລົງທຶນ) ໄດ້ຮັບການສະໜັບສະໜູນ ແລະ ຈັດຕັ້ງປະຕິບັດ ຢ່າງກວ້າງຂວາງ. ພາຍໃຕ້ຮູບແບບນີ້ , ຊາວກະສິກອນ ແມ່ນ ຮັບພິດຊອບສຳລັບ 2 ຢ່າງຄື: ທີ່ດິນ ແລະ ແຮງງານ ໃນຂະນະດຽວກັນ ນັກລົງທຶນແມ່ນ ຮັບພິດຊອບ 3 ຢ່າງຄື: ຕະຫຼາດ, ທຶນ ແລະ ເຕັກໂນໂລຊີ[3]. ແນວໃດກໍ່ຕາມ, ຮູບແບບຂອງການລົງທຶນມະການປ່ຽນແປງໄປມາ ລະຫວ່າງ 2+3, 3+2, 4+1 ແລະ 1+4. ຊຶ່ງມັນຂຶ້ນກັບຄວາມອາດສາມາດຂອງຊາວກະສິກອນ ແລະ ການຕົກລົງລະຫວ່າງ ຊາວກະສິກອນ ກັບຜູ້ລົງທຶນ.

| ຮູບແບບ | ຊາວກະສິກອນສະໜອງ | ຜູ້ລົງທຶນສະໜອງ |
|---|---|---|
| 2+3 | ທີດິນ ແລະ ແຮງງານ | ຕະຫຼາດ, ທຶນ ຫຼື ດ້ານການເງິນ ແລະ ເຕັກໂນໂລຊີ |
| 3+2 | ທີ່ດິນ, ແຮງງານ ແລະ ທຶນ | ຕະຫຼາດ ແລະ ເຕັກໂນໂລຊີ |
| 4+1 | ທີ່ດິນ, ແຮງງານ, ທຶນ ແລະ ເຕັກໂນໂລຊີ | ຕະຫຼາດ |
| 1+4 | ທີດິນ | ຕະຫຼາດ, ທຶນ ຫຼື ດ້ານການເງິນ, ເຕັກໂນໂລຊີ ແລະ ແຮງງານ |

### 2.4 ລັກສະນະຂອງການຜະລິດເປັນສິນຄ້າແບບມີສັນຍາ

ລັກສະນະ ຂອງ ການຜະລິດເປັນສິນຄ້າແບບມີສັນຍາ ສາມາດຈັດແບ່ງ ຕາມລັກສະນະ ຂອງ ສັນຍາ ທີ່ແຕກຕ່າງກັນເຊັ່ນ: ລັກສະນະທີ່ມີການມັດຈຳ, ການກຳນົດລາຄາ ແລະ ໄລຍະຂອງສັນຍາ. ລາຍລະອຽດ ກ່ຽວກັບ ລັກສະນະ ຂອງ ການຜະລິດເປັນສິນຄ້າແບບມີສັນຍາ, ຈຸດດີ ແລະ ຄວາມສ່ຽງ ສຳລັບ ຜູ້ລົງທຶນ ແລະ ຊາວກະສິກອນ ໃນລັກສະນະຕ່າງໆ ສາມາດອະທິບາຍໄດ້ດັ່ງນີ້:

1) ***ລັກສະນະ ການຜະລິດກະສິກຳເປັນສິນຄ້າແບບມີສັນຍາ ທີ່ມີການມັດຈຳເງິນ:*** ແມ່ນຈັດຕັ້ງປະຕິບັດຢູ່ບາງເຂດ ແລະ ບາງທຸລະກິດ. ການມັດຈຳເງິນນີ້ກໍ່ ເພື່ອ ຮັບປະກັນ ແລະ ຊົດເຊີຍ ຊາວກະສິກອນ ໃນກໍລະນີນັກລົງທຶນ ບໍ່ປະຕິບັດການໃຊ້ຈ່າຍ ແລະ ຄວາມຮັບຜິດຊອບອື່ນໆ ຕໍ່ຊາວກະສິກອນຕາມທີ່ກຳນົດໄວ້ໃນສັນຍາ ຫຼື ບໍ່ກົງກັບເວລາ; ຫຼື ປະລະ ທຸລະກິດ ແລະ ອື່ນໆ. ເງິນຈະຖືກສົ່ງຄືນຜູ້ລົງທຶນພາຍຫຼັງທີ່ຜູ້ລົງທຶນໄດ້ສຳເລັດການຈັດຕັ້ງປະຕິບັດສັນຍາ ແລະ ສຳລະຄ່າໃຊ້ຈ່າຍສຳລັບຊາວກະສິກອນຕາມສັນຍາ ຫຼື ຂໍ້ຕົກລົງ ເປັນທີ່ຮຽບຮ້ອຍແລ້ວ. ດັ່ງທີ່ກ່າວມາໃນເບື້ອງຕົ້ນການປະເມີນການ ການຈັດຕັ້ງປະຕິບັດ ສັນຍາແມ່ນປະຕິບັດຕາມແຕ່ລະລະດູການ ແລະ ຫຼື ປະຈຳປີ ເຖິງຈະແມ່ນການລົງທຶນໄລຍະຍາວກໍ່ຕາມ. ເງິນມັດຈຳສ່ວນຈະແມ່ນອົງການຈັດຕັ້ງຂອງລັດ ໂດຍສະເພາະ DAFO ເປັນຜູ້ຄຸ້ມຄອງ. ຕາມການປະເມີນ, ສັດສ່ວນການມັດຈຳແມ່ນນັບແຕ່ 0.5% ຫາ 1% ຂອງງົບປະມານ ການລົງທຶນທັງໝົດ. ແນວໃດກໍ່ຕາມ, ເຖິງແມ່ນລະບົບເງິນມັດຈຳຈະໄດ້ຮັບການຈັດຕັ້ງປະຕິບັດກໍ່ຕາມ ແຕ່ຍັງມີໜ້ອຍກໍລະນີ ແລະ ສ່ວນຫຼາຍ

[3] ເທັກໂນໂລຊີ, ນອກຈາກເຕັກນິກ, ການພັດທະນາຊັບພະຍາກອນມະນຸດ ຍັງກວມເອົາ ອຸປະກອນ ແລະ ປັດໃຈການຜະລິດ

ປະຕິບັດໂດຍການລົງທຶນຂະໜາດໃຫຍ່. ນອກນັ້ນ ການຈັດຕັ້ງປະຕິບັດກໍ່ແຕກຕ່າງກັນໃນແຕ່ລະເຂດ ແລະ ມັນຂຶ້ນກັບ ການຕົກລົງ ຂອງຜູ້ລົງທຶນ, ອີງການຈັດຕັ້ງຂອງລັດ ແລະ ຜູ້ຜະລິດ ໂດຍ ແມ່ນ ພາກລັດ ແລະ ຊາວກະສິກອນ ເປັນຜູ້ສະເໜີ[4], ຄວາມພໍໃຈຂອງຜູ້ລົງທຶນ[5], ຄວາມສາມາດທາງດ້ານການເງິນ[6], ການເຈລະຈາ, ລະບຽບການຈັດຕັ້ງປະຕິບັດ[7] ແລະ ປະສົບປະການ[8]. ເນື່ອງຈາກ ຍັງບໍ່ທັນມີກົນໄກທີ່ຊັດເຈນ, ຂໍ້ແນະນຳ ຫຼື ລະບຽບການ ຫຼື ມາດຖານເທື່ອ; ສະນັ້ນ ກົນໄກ, ຄວາມໂປ່ງໃສ ສຳລັບການຄຸ້ມຄອງເງິນດັ່ງກ່າວເຫັນວ່າຈຳເປັນ ລວມທັງ ຄວາມຮັບຜິດຊອບທີ່ຈະແຈ້ງຂອງພາກສ່ວນທີ່ກ່ຽວຂ້ອງ ວ່າຜູ້ໃດເປັນຜູ້ຮັບຜິດຊອບ ແລະ ຈະຄຸ້ມຄອງ ຮັກສາແນວໃດ. ຂ້າງລຸ່ມນີ້ໄດ້ສັງລວມບັນດາຈຸດດີ ແລະ ຄວາມສ່ຽງຂອງລັກສະນະສັນຍາການຜະລິດໃນຮູບແບບນີ້.

**ຕາຕະລາງ 1:** ການຜະລິດກະສິກຳບັນສິນຄ້າທີ່ມີເງິນມັດຈຳ ແລະ ບໍ່ມີເງິນມັດຈຳ

| | **ສັນຍາທີ່ມີເງິນມັດຈຳ** |
|---|---|
| **ຂໍ້ດີ** | ນັກລົງທຶນ:<br>- ໄດ້ຮັບຄວາມໄວ້ວາງໃຈ ແລະ ຄວາມເປັນມິດ ຈາກຜູ້ຜະລິດ ຫຼາຍຂຶ້ນ<br>- ເສີມສ້າງ ຄວາມໝັ້ນໃຈ ແລະ ຄວາມຮັບຜິດຊອບຂອງຜູ້ຜະລິດໃຫ້ຫຼາຍຂຶ້ນ<br><br>ຊາວກະສິກອນ:<br>- ເປັນການຊຸກຍູ້ຜູ້ລົງທຶນເພີ່ມຄວາມເອົາໃຈໃສ່ຕໍ່ການຈັດຕັ້ງປະຕິບັດສັນຍາ ກໍ່ຄືການຜະລິດ ແລະ ທຸລະກິດ; ແລະ ບໍ່ໜີປະທຸລະກິດ<br>- ຫຼຸດຄວາມສ່ຽງຕໍ່ຊາວກິະສິກອນ ຖ້າຜູ້ລົງທຶນໜີປະທຸລະກິດ<br>- ເປັນການກັ່ນກອງຜູ້ລົງທຶນທີ່ມີຄຸນນະພາບ ແລະ ຫຼື ຫຼຸດຜ່ອນຜູ້ລົງທຶນທີ່ບໍ່ເອົາຈິງເອົາຈັງ<br>- ເພີ່ມຄວາມຮັບປະກັນ, ຄວາມເຊື່ອໝັ້ນຂອງຊາວກະສິກອນຕໍ່ທຸລະກິດ ກໍ່ຄື ຜູ້ລົງທຶນ<br>- ເປັນການຊຸກຍູ້ຜູ້ຜະລິດ ເພີ່ມຄວາມເອົາໃຈໃສ່ຕໍ່ການຈັດຕັ້ງປະຕິບັດສັນຍາ ກໍ່ຄືການຜະລິດ ແລະ ທຸລະກິດ; ແລະ ບໍ່ໜີປະທຸລະກິດ |
| **ຂໍ້ເສຍ** | ນັກລົງທຶນ:<br>- ອາດເຮັດໃຫ້ ນັກລົງທຶນໃໝ່ ຫຼື ນັກລົງທຶນ ຂະໜາດນ້ອຍ ລວມທັງ ຜູ້ທີ່ລົງທຶນໃນພື້ນທີ່ ແລະ ຫຼື ການຜະລິດທີ່ມີຄວາມສ່ຽງ ທໍ້ຖອຍ;<br>- ເພີ່ມມູນຄ່າຕົ້ນທຶນສູງຂຶ້ນ ເພາະ ປົກກະຕິເງິນມັດຈຳຈະຖືກຮັກສາໄວ້ກັບເຈົ້າໜ້າທີ່ທີ່ກ່ຽວຂ້ອງຈົນສຳເລັດລະດູການຜະລິດໜຶ່ງ;<br>- ອາດເພີ່ມພາລະ, ຂໍ້ຫຍຸ້ງຍາກ ແລະ ຄວາມສ່ຽງ ສຳລັບ ນັກລົງທຶນ ແລະ ອາດນຳ |

[4] ປົກກະຕິ ການວາງເງິນມັດຈຳ ແມ່ນຍ້ອນການສະເໜີຂອງພາກລັດ ແລະ ຊາວກະສິກອນ

[5] ບາງກໍລະນີ ຍ້ອນຜູ້ລົງທຶນເຄີຍປະຕິບັດໃນເຂດອື່ນ ຕົວຢ່າງ: ໃນປະເທດຈີນ ລະບົບເງິນມັດຈຳຖືວ່າເປັນເລື່ອງປົກກະຕິ

[6] ສ່ວນໃຫຍ່ ການມັດຈຳເກີດຂຶ້ນໄດ້ແມ່ນຍ້ອນ ຜູ້ລົງທຶນມີງົບປະມານພຽງພໍ ແລະ ຫຼື ບໍ່ມີບັນຫາທາງດ້ານການເງິນ

[7] ບາງກໍລະນີ ຍ້ອນ ພາກລັດ, ຊາວກະສິກອນ ເຄີຍປະສົບກັບບັນຫາທີ່ຜູ້ລົງທຶນປະລະທູລະກິດ, ສະນັ້ນ ຈຶ່ງກຳນົດລະບຽບຂຶ້ນມາ ຊຶ່ງຮຽກຮ້ອງໃຫ້ຜູ້ລົງທຶນຕ້ອງໄດ້ມີເງິນມັດຈຳ ຖ້າຕ້ອງການລົງທຶນໃນພື້ນທີ່ດັ່ງກ່າວ

[8] ບ່ອນທີ່ພາກລັດ, ຊາວກະສິກອນ ເຄີຍປະສົບກັບບັນຫາທີ່ຜູ້ລົງທຶນປະລະທຸລະກິດ, ມັນຈະຮຽກຮ້ອງໃຫ້ຜູ້ລົງທຶນຕ້ອງໄດ້ມີເງິນ ມັດຈຳ

| | |
|---|---|
| | ໄປສູ່ການຫຼຸດລົງກອບ, ພື້ນທີ່ ແລະ ຜະລິດຕະພັນທີ່ຈະລົງທຶນ ລວມທັງຄຸນນະພາບຂອງ ຜະລິດຕະພັນ<br>- ສ່ຽງຕໍ່ການຄຸ້ມຄອງເງິນມັດຈຳ ຊຶ່ງອາດມີການ ນຳໃຊ້ເງິນມັດຈຳໃນທາງອື່ນ ຫຼື ບໍ່ເນາະສົມ<br><br>ຊາວກະສິກອນ:<br>- ອາດສ້າງຂໍ້ຂັດແຍ່ງໃນກຸ່ມຊາວກະສິກອນ ແລະ ການຈັດຕັ້ງທີ່ກ່ຽວຂ້ອງ ຖ້າຫາກເງິນມັດຈຳຫາກບໍ່ຮັກສາໄວ້ໃນທີ່ ຫຼື ອົງການຈັດຕັ້ງທີ່ເນາະສົມ ລວມທັງຂາດຄວາມໂປ່ງໃສໃນການຄຸ້ມຄອງ<br>- ມູນຄ່າຂອງເງິນມັດຈຳ ອາດຈະຖືກທົດແທນດ້ວຍການຈ່າຍ ຫຼື ໃຫ້ ລາຄາຜະລິດຕະພັນຕໍ່າລົງ |

ເຖິງແນວໃດກໍ່ຕາມ, ນອກຈາກ ການມັດຈຳ ຈະເຮັດໃຫ້ ນັກລົງທຶນໃໝ່ ຫຼື ນັກລົງທຶນ ຂະໜາດນ້ອຍ ທໍ້ຖອຍເພາະຕົ້ນທຶນໃນເບື້ອງຕົ້ນຈະສູງ ມັນຍັງເປັນການຈະຈຳກັດການຂະຫຍາຍພື້ນທີ່, ກອບຂະຫຍານລົງທຶນ ແລະ ປະລິມານການຜະລິດນຳອີກ. ນອກນັ້ນ, ເຖິງແມ່ນວ່າ ບາງກໍລະນີ ຜົນຜະລິດອາດ ບໍ່ໄດ້ຕາມລາຄາ, ປະລິມານ ແລະ ຄຸນນະພາບທີ່ຄາດໄວ້ ແຕ່ມັນຊ່ວຍຫຼຸດຄວາມສ່ຽງຕໍ່ປະຊິາຊົນ ຈາກການຜະລິດທີ່ບໍ່ປະສົບຜົນສໍາເລັດ ແລະ ການໜີປະທຸລະກິດຂອງຜູ້ລົງທຶນ.

2) ***ລັກສະນະ ການຜະລິດກະສິກຳເປັນສິນຄ້າແບບມີສັນຍາ ອີງຕາມລະບອບລາຄາ:*** ຕາມທີ່ພົບການກຳນົດລາຄາມີ 2-3 ລັກສະນະ ຫຼື ແບ່ງອອກເປັນ 3 ປະເພດຄື: ລາຄາຕາມທ້ອງຕະຫຼາດ, ລາຄາຄົງທີ່ ແລະ ລາຄາຄໍ້າປະກັນ. ລາຄາຕະຫຼາດ ໝາຍເຖິງລາຄາທີ່ປ່ຽນໄປຕາມລາຄາຕະຫຼາດ. ແນວໃດກໍ່ຕາມ ຄວາມໝາຍຂອງລາຕະຫຼາດຍັງມີລັກສະນະສັບສົນ; ບາງຄັ້ງແມ່ນໝາຍເຖິງທີ່ຕະຫຼາດສຸດທ້າຍທີ່ຕ່າງປະເທດ (ປະເທດໃກ້ຄຽງ) ທີ່ຜົນຜະລິດຈະວາງຂາຍ ຫຼື ບາງກຸ່ມໝາຍເຖິງລາຄາທີ່ຜູ້ລົງທຶນ ກຳນົດຕາມລາຄາຕະຫຼາດພາຍໃນເມືອງ, ແຂວງ ຫຼືເຂດທີ່ໃກ້ຄຽງເປັນບ່ອນອີງ.

ລາຄາຄົງທີ່ໝາຍເຖິງລາຄາທີ່ກຳນົດໃນສັນຍາ ແລະ ການສຳລະແມ່ນປະຕິບັດຕາມລາຄາດັ່ງກ່າວ ຊຶ່ງຈະບໍ່ການປ່ຽນແປງ ເຖິງແມ່ນວ່າ ລາຄາຕາມທ້ອງຕະຫຼາດຈະເພີ່ມຂຶ້ນ ຫຼື ຫຼຸດລົງ. ລາຄາຄົງທີ່ຖືກກຳນົດຂຶ້ນໂດຍອີງໃສ່ຄາລາຂອງສິນຄ້າໃນໄລຍະຜ່ານມາ ສົມທົບກັບການຄາດຄະເນການປ່ຽນແປງໃນອະນາຄົດ ໂດຍຜູ້ລົງທຶນ, ຊາວກະສິກອນ ຫຼື ລວມທັງພາກສ່ວນທີ່ກ່ຽວຂ້ອງ. ໃນຫຼາຍກໍລະນີ, ການກຳນົດລາຄາຄົງທີ່ແມ່ນເພີ່ມຂຶ້ນ 10 ເຖິງ 15% ຫຼື ບາງຄັ້ງເທົ່າເກົ່າ ສົມທຽບກັບ ລາຄາ ຂອງປີທີ່ຜ່ານມາ.

ລາຄາຄໍ້າປະກັນແມ່ນລາຄາກຳນົດຄົງທີ່ໃນສັນຍາ ແຕ່ຈະເພີ່ມຂຶ້ນເມື່ອລາຄາຕາມທ້ອງຕະຫຼາດເພີ່ມຂຶ້ນ; ແລະ ໃນກໍລະນີ ລາຄາຕາມທ້ອງ ຕະຫຼາດຫຼຸດລົງຕໍ່າກວ່າ ລາຄາທີ່ກຳນົດໄວ້ໃນສັນຍາແມ່ນນຳໃຊ້ລາຄາທີ່ກຳນົດໃນສັນຍາສຳລັບການສະສາງ.

ແນວໃດກໍ່ຕາມ, ຂ້າງລຸ່ມນີ້ໄດ້ສັງລວມບັນດາຈຸດດີ ແລະ ຄວາມສ່ຽງຂອງລັກສະນະສັນຍາການຜະລິດໃນຮູບແບບນີ້.

**ຕາຕະລາງ 2:** ສັນຍາທີ່ມີການກຳນົດລາຄາຄົງທີ່ ແລະ ລາຄາຕາມທ້ອງຕະຫຼາດ

| | **ສັນຍາທີ່ມີການກຳນົດລາຄາຄົງທີ່** | **ສັນຍາຕາມລາຄາຕະຫຼາດ** |
|---|---|---|

| | ສັນຍາທີ່ມີການກຳນົດລາຄາຄົງທີ່ | ສັນຍາຕາມລາຄາຕະຫຼາດ |
|---|---|---|
| ຈຸດໄດ້ປຽບ | ນັກລົງທຶນ:<br>- ດີຖ້າຫາກຄວາມຕ້ອງການຂອງຕະຫຼາດ ແລະ ລາຄາ ຄືເກົ່າ ຫຼື ສູງຂຶ້ນ<br><br>ຊາວກະສິກອນ:<br>- ສາມາດຊ່ວຍໄດ້ ໂດຍສະເພາະໃນກໍລະນີຕະຫຼາດ, ລາຄາມີການປ່ຽນແປງເລື້ອຍໆ ຫຼື ບໍ່ແນ່ນອນ ແລະ ຜະລິດຕະພັນໃໝ່;<br>- ສາມາດຄ້ຳປະກັນ ແລະ ຮັບປະກັນລາຍຮັບທີ່ແນ່ນອນ<br>- ໃນກໍລະນີ ລາຄາຄ້ຳປະກັນ, ຊາວກະສິກອນຈະມີລາຍໄດ້ເພີ່ມຂຶ້ນເມື່ອລາຄາເພີ່ມຂຶ້ນ ແລະ ບໍ່ເສຍປຽບ ເຖິງແມ່ນວ່າ ຄາລາຕະຫຼາດຈະຫຼຸດລົງ | ນັກລົງທຶນ:<br>- ຍຸດຕິທຳສຳລັບນັກລົງທຶນ<br>- ມີຜົນກຳໄລເມື່ອຄວາມຕ້ອງການຕະຫຼາດ ແລະ ລາຄາ ເພີ່ມຂຶ້ນ<br><br>ຊາວກະສິກອນ:<br>- ຍຸດຕິທຳສຳລັບຊາວກະສິກອນ<br>- ມີຜົນກຳໄລເມື່ອຄວາມຕ້ອງການຕະຫຼາດ ແລະ ລາຄາ ເພີ່ມຂຶ້ນ<br>- |
| ຈຸດເສຍປຽບ | ນັກລົງທຶນ:<br>- ນັກລົງທຶນ/ພໍ່ຄ້າ ອາດກຳນົດລາຄາຕ່ຳ ຫຼື ສໍ້ໂກງ ລາຄາ;<br>- ເສຍປຽບເມື່ອລາຄາຕະຫຼາດຫຼຸດລົງ;<br>- ໃນກໍລະນີລາຄາຄ້ຳປະກັນ, ນັກລົງທຶນອາດໄດ້ກຳໄລໜ້ອຍລົງເມື່ອ ລາຄາເພີ່ມຂຶ້ນ<br><br>ຊາວກະສິກອນ:<br>- ຊາວກະສິກອນເສຍໂອກາດ ຖ້າ ລາຄາຕະຫຼາດ ເພີ່ມຂຶ້ນ ເກີນລາຄາທີ່ກຳນົດໄວ້ | ນັກລົງທຶນ:<br>- ເສຍຜົນປະໂຫຍດ ຖ້າ ລາຄາ ຕະຫຼາດຫຼຸດລົງ<br><br>ຊາວກະສິກອນ:<br>- ເສຍຜົນປະໂຫຍດ ຖ້າ ລາຄາ ຕະຫຼາດຫຼຸດລົງ ແລະ ອາດເຮັດໃຫ້ມີບັນຫາທາງດ້ານເສດ ຖະກິດ (ໂດຍສະເພາະກຸ່ມຄົນທຸກຈົນ) |

3) ຖ້າເບິ່ງຕາມກອບເວລາຂອງສັນຍາ,ການຜະລິດກະສິກຳເປັນສິນຄ້າແບບມີສັນຍາສາມາດແບ່ງອອກເປັນການຜະລິດກະສິກຳເປັນສິນຄ້າແບບມີສັນຍາແມ່ນມີລັກສະນະລະດູການ, ປະຈຳປີ ແລະ ໄລຍະຍາວ. ຊຶ່ງຂຶ້ນກັບປະເພດຂອງການລົງທຶນ , ປະເພດຂອງພືດ ແລະ ຂໍ້ຕົກລົງ ລະຫວ່າງ ນັກລົງທຶນ ແລະ ຊາວກະສິກອນ ຫຼື ການແນະນຳຈາກອົງການຈັດຕັ້ງຂອງລັດ. ແນວໃດກໍ່ຕາມ, ເຖິງແມ່ນການລົງທຶນໄລຍະຍາວກໍ່ຕາມ, ສັນຍາ ແລະ ການຈັດຕັ້ງປະຕບັດສັນຍາແມ່ນດຳເນີນໄປປະຈຳປີ.ຂ້າງລຸ່ມນີ້ໄດ້ສັງລວມບັນດາ ຈຸດດີ ແລະ ຄວາມສ່ຽງ ຂອງລັກສະນະສັນຍາການຜະລິດໃນຮູບແບບນີ້.

**ຕາຕະລາງ 3:** ສັນຍາໄລຍະຍາວ ແລະ ໄລຍະສັ້ນ

| | **ສັນຍາໄລຍະຍາວ (ໂດຍມີການທົບທວນແຕ່ລະປີ)** | **ໄລຍະສັ້ນ** |
|---|---|---|
| **ຈຸດດີ** | ນັກລົງທຶນ:<br>- ສາມາດວາງ ແຜນ ທຸລະກິດໃນໄລຍະຍາວງ່າຍຂຶ້ນ ແລະ ອາດເພີ່ມສິ່ງຈູງໃຈສໍາລັບການລົງທຶນ<br><br>ຊາວກະສິກອນ:<br>- ອາດໄດ້ຮັບຜົນຜະໂຫຍດເຊັ່ນ: ໂຄງລ່າງພື້ນຖານ ຫຼື ສິ່ງອໍານວຍຄວາມສະດວກຕ່າງໆ (ການລົງທຶນໄລຍະຍາວມັກຈະມີການລົງທຶນສິ່ງອໍານວຍຄວາມສະດວກຫຼາຍ)<br>- ສາມາດຮັບປະກັນ ແລະ ໄດ້ຮັບຜົນປະໂຫຍດ ຢ່າງຕໍ່ເນື່ອງ ທັງດ້ານການເງິນ ແລະ ການສ້າງຄວາມອາດສາມາດ | ຊາວກະສິກອນ:<br>- ຊາວກະສິກອນມີທາງເລືອກ ແລະ ສາມາດປັບປ່ຽນການເຮັດສັນຍາກັບຜູ້ລົງທຶນ ແລະ ພໍ່ຄ້າ ບໍ່ໄດ້ຮັບຜົນ;<br>- ບົກກະຕິລາຄາຈະສູງກວ່າລາຄາສໍາລັບການລົງທຶນໃນໄລຍະຍາວ ຫຼື ແມ່ນແຕ່ລາຄາຕະຫຼາດ;ສາມາດຍືດຍຸ່ນສໍາລັບຊາວກະສິກອນຜູ້ທີ່ ຍາກຮ່ວມກັບ ນັກລົງທຶນ ແລະ ການຜະລິດທີແຕກຕ່າງກັນໄປ |
| **ຄວາມສ່ຽງ** | ນັກລົງທຶນ:<br>- ອາດມີຜົນເສຍຫາຍຕໍ່ ທຸລະກິດ ຖ້າຈໍານວນຂອງຊາວກະສິກອນໃນສັນຍາຫາກມີການປ່ຽນແປງຈໍານວນຫຼາຍ<br><br>ຊາວກະສິກອນ:<br>- ອາດຈໍາກັດຕະຫຼາດ ຫຼື ຜູ້ລົງທຶນອື່ນໆທີ່ອາດເຂົ້າມາທີຫຼັງ ຖ້າບໍ່ມີມາດຕະການ ແລະ ກົນໄກໃນການສົ່ງເສີມການແຂ່ງຂັນ;<br>- ອາດບໍ່ໄດ້ຮັບຜົນກໍາໄລຫຼາຍ ໂດຍສະເພາະແມ່ນຈາກພືດປະຈໍາປີ<br>- ອາດນໍາໄປສູ່ການຜູກຂາດ ແລະ ມີການຄວບຄຸມຕະຫຼາດ. | ນັກລົງທຶນ:<br>- ຍາກສໍາລັບການລົງທຶນຂະໜາດໃຫຍ່ ແລະ ຕ້ອງການຜະລິດຕະພັນທີ່ຕໍ່ເນື່ອງ;<br>- ມີຄວາມສ່ຽງໃນເມື່ອຈໍານວນຂອງ ຊາວກະສິກອນມີການປ່ຽນແປງຫຼາຍ;<br>- ເປັນການຍາກທີ່ຈະປະເມີນຜົນໄດ້ຮັບຈາກ ການລົງທຶນວ່າມີຄວາມຍືນຍົງໃນລະດັບໃດ;<br>- ຍາກທີ່ຈະມີການລົງທຶນປັບປຸງ ເຕັກນິກການຜະລິດ ແລະ ຜະລິດຕະພັນ (ໂດຍສະເພາະພືດອຸດສາຫະກໍາ)<br><br>ຊາວກະສິກອນ:<br>- ເປັນການຍາກທີ່ຈະປະເມີນຜົນໄດ້ຮັບຈາກ ການລົງທຶນວ່າຫມີຄວາມຍືນຍົງສໍາ ໃດ;<br>- ຍາກທີ່ຈະໄດ້ຮັບການສົ່ງເສີມທາງດ້ານເຕັກນິກການຜະລິດ ແລະ ຜະລິດຕະພັນ (ໂດຍສະເພາະພືດອຸດສາຫະກໍາ) |

## 2.5 ຜູ້ມີສ່ວນຮ່ວມຫຼັກ ແລະ ພາລະບົດບາດ

ການຜະລິດກະສິກຳເປັນສິນຄ້າແບບມີສັນຍາ ປະກອບດ້ວຍ ສອງພາກສ່ວນຕົ້ນຕໍຄື: ຊາວກະສິກອນ ແລະ ຜູ້ລົງທຶນ/ພໍ່ຄ້າ ພາຍໃນ ຫຼື ຕ່າງປະເທດ; ສະນັ້ນ, ປັດໃຈໜຶ່ງສຳລັບຄວາມສຳເລັດ ແມ່ນຂຶ້ນກັບວ່າ ການກຳນົດບົດບາດ ແລະ ຄວາມຮັບຜິດຊອບ ຂອງທັງສອງຝ່າຍ ມີຄວາມຈະແຈ້ງຫຼາຍໜ້ອຍພຽງໃດ. ບົດບາດ ແລະ ຄວາມຮັບຜິດຊອບ ຂອງນັກລົງທຶນ ຫຼື ພໍ່ຄ້າ ແລະ ຊາວກະສິກຳສາມາດສັງລວມໄດ້ດັ່ງນີ້:

**ບົດບາດ ແລະ ຄວາມຮັບຜິດຊອບ ຂອງນັກລົງທຶນ ຫຼື ພໍ່ຄ້າ:**

- ***ການກະກຽມເບື້ອງຕົ້ນສຳລັບການຜະລິດເປັນສິນຄ້າແບບມີສັນຍາ:*** ເປັນຕົ້ນວ່າການເກັບກຳຂໍ້ມູນ, ການປະເມີນຄວາມເປັນໄປໄດ້, ການພັດທະນາ ສັນຍາ ແລະ ຊ່ວຍການຈັດກອງປະຊຸມປຶກສາຫາລືກັບຊາວກະສິກອນ ແລະ ອົງການຈັດຕັ້ງທີ່ກ່ຽວຂ້ອງ.
- ***ການສະໜອງປັດໃຈການຜະລິດ ແລະ ການບໍລິການ:*** ການສະໜອງປັດໃຈການຜະລິດ: ແນວພັນ, ປຸຍ, ຢາຂ້າແມງໄມ້ ແລະ ຫຍ້າ, ການກະກຽມດິນ, ບາງອຸປະກອນ ແລະ ໂຄງລ່າງພື້ນຖານທີ່ຈຳເປັນ. ການສະໜອງປັດໃຈການຜະລິດແມ່ນຂຶ້ນກັບປະເພດ ແລະ ຂະໜາດຂອງການລົງທຶນ; ແນວໃດກໍ່ຕາມ, ບາງປັດໃຈການຜະລິດແມ່ນສະໜອງໃຫ້ລ້າ ແຕ່ບາງຄັ້ງແມ່ນຕ້ອງໄດ້ຈ່າຍຕົ້ນທຶນຄືນ ຕາມລາຄາເດີມ ແລະ ຫຼື ຂຶ້ນກັບ ລາຄາວັດຖຸດິບ ຕາມທ້ອງຕະຫຼາດ. ໃນກໍລະນີ ຕ້ອງໄດ້ຈ່າຍຄືນຕົ້ນທຶນ ໃຫ້ຜູ້ລົງທຶນ, ຜູ້ລົງທຶນ ຈະມີການຫັກຈຳນວນເງິນ ຈາກຜົນຜະລິດ ພາຍຫຼັງທີ່ຊາວກະສິກອນໄດ້ຈຳໜ່າຍຜະລິດຕະພັນອອກ.
- ***ເຕັກນິກການຜະລິດ, ເທັກໂນໂລຊີ ແລະ ການສ້າງຄວາມອາດສາມາດ:*** ເນື່ອງຈາກແນວພັນທັງໝົດທີ່ນຳໃຊ້ແມ່ນພັນປະສົມ ແລະ ນຳເຂົ້າ. ສະນັ້ນ ເພື່ອຮັບປະກັນການຜະລິດ ເຕັກນິກ ແລະ ເທັກໂນໂລຊີທີ່ນຳໃຊ້ ຈຳເປັນທີ່ຕ້ອງໄດ້ປະຕິບັດຕາມ ຂໍ້ແນະນຳ ແລະ ຈຳນວນ ແລະ ຄຸນນະພາບ ການຜະລິດ; ເຕັກນິກການຜະລິດ ແລະ ເທັກໂນໂລຊີ ສ່ວນຫຼາຍແມ່ນຖ່າຍທອດໂດຍ ຫຼື ສະໜອງໂດຍຜູ້ລົງທຶນ. ການຝຶກອົບຮົມດ້ານເຕັກນິກ ແລະ/ຫຼື ການຝຶກ ລວມທັງ ສອນສາທິດ ແມ່ນສະໜອງໂດຍ ຜູ້ລົງທຶນ ໂດຍບໍ່ມີການເກັບຄ່າສິ້ນເປືອງ. ບາງເຕັກໂນໂລຊີ ແລະ ອຸປະກອນເທົ່ານັ້ນທີ່ຊາວກະສິກອນຕ້ອງຮັບຜິດຊອບດ້ວຍຕົນເອງ;ແລະບາງກໍລະນີຊາວກະສິກອນ ສາມາດເຂົ້າເຖິງ ເຕັກນິກ, ຂໍ້ມູນການຜະລິດ ແລະ ຮຽນນຳໃຊ້ ດ້ວຍຕົນເອງ.
- ***ຕະຫຼາດ ແລະ ການເຂົ້າເຖິງຕະຫຼາດ:*** ການເຂົ້າເຖິງຕະຫຼາດ ແລະ ຂໍ້ມູນຕະຫຼາດ ຜ່ານມາເຫັນວ່າພົບຂໍ້ຫຍຸ້ງຍາກຫຼາຍສຳລັບຊາວກະສິກອນ. ໃນຂະນະດຽວກັນ ຜູ້ລົງທຶນ ບາງຄັ້ງກໍ່ຖືວ່າເປັນຕະຫຼາດ ແລະ ເປັນຜູ້ເຊື່ອມໂຍງຕະຫຼາດ, ຜູ້ຊື້ ແລະ ຜູ້ບໍລິໂພກ. ສະນັ້ນຜົນຜະລິດຂອງຊາວກະສິກອນແມ່ນຖືກເກັບຊື້ ແລະ ນຳໃຊ້ ຫຼື ຂາຍຕໍ່ຜູ້ລົງທຶນ.
- ***ທຶນ:*** ສ່ວນໃຫຍ່ ການລົງທຶນແມ່ນຜູ້ລົງທຶນເປັນຜູ້ຮັບຜິດຊອບເປັນສ່ວນໃຫຍ່. ໃນນີ້ ລວມມີທຶນສຳລັບການກະກຽມ, ເກັບກຳຂໍ້ມູນ, ອະນວຍຄວາມສະດວກ, ເຕັກໂນໂລຊີ, ການເກັບຊື້ ຜະລິດຕະພັນຂອງຊາວກະສິກອນ, ການປຸງແຕ່ງ, ການຫຸ້ມຫໍ່, ການຂົນສົ່ງ ແລະ ອື່ນໆ. ບາງກໍລະນີຜູ້ລົງທຶນຍັງໃຫ້ທຶນລ່ວງໜ້າສຳລັບຊາວກະສິກອນໃນກໍລະນີຈຳເປັນ ຫຼື ສຸກເສີນ ໂດຍບໍ່ມີດອກເບ້ຍ ຫຼື ດອກເບ້ຍຕໍ່າ (ເມື່ອສົມທຽບກັບທະນາຄານ).

**ບົດບາດ ແລະ ຄວາມຮັບຜິດຊອບ ຂອງຊາວກະສິກອນ:**

ຊາວກະສິກອນມີ ບົດບາດ ແລະ ຄວາມຮັບຜິດຊອບໃນການສະໜອງຂໍ້ມູນທີ່ຕິດພັນກັບເນື້ອທີ່ການຜະລິດ , ແຮງງານ, ຄວາມສົນໃຈ ແລະ ຂໍ້ຄິດເຫັນອື່ນໆ ຂອງຊາວກະສິກອນ.

- ***ການສະໜອງຂໍ້ມູນກ່ຽວກັບເນື້ອທີ່ການຜະລິດ, ແຮງງານ ແລະ ຄວາມສົນໃຈ ຫຼື ຂໍ້ຄິດເຫັນ:*** ໂດຍສະເພາະໃນ ຊ່ວງບາດກ້າວທີ່ 1 ແລະ 2 (ໃນຂໍ້ 3.3); ຂອງຂະບວນການຜະລິດກະສິກຳເປັນສິນຄ້າແບບມີສັນຍາ. ນອກນັ້ນ, ບັນດາຂໍ້ມູນເຫຼົ່ານີ້ຍັງຕ້ອງໄດ້ຢັ້ງຢືນ ຫຼື ກວດຄືນ ກ່ອນທີ່ຈະມີການເຊັນສັນຍາໃນການຜະລິດກະສິກຳເປັນ ສິນຄ້າແບບມີສັນຍາຮ່ວມກັນ.
- ***ການຕົກລົງ ແລະ ສັນຍາຮ່ວມກັນ:*** ໃນບາດກ້າວທີ 4 (ໃນຂໍ້ 3.3); ຊຶ່ງຜູ້ລົງທຶນ ແລະ ການເອື້ອຍອຳນວຍຈາກອົງການຈັດຕັ້ງທີ່ກ່ຽວຂ້ອງຂອງລັດໄດ້ຈັດກອງປະຊຸມສຳລັບປຶກສາຫາລື, ຮັບຮອງ ແລະ ລົງລາຍເຊັນຮ່ວມກັນ. ບາດກ້າວນີ້ຊາວກະສິກອນມີສິດທີ່ຈະຕັດສິນ ວ່າຈະເຊັນສັນຍາ ການຜະລິດກະສິກຳເປັນສິນຄ້າແບບມີສັນຍາ ຫຼື ບໍ່ ໂດຍອີງໃສ່ເງື່ອນໄຂການລົງທຶນຂອງຜູ້ລົງທຶນ ແລະ ຜ່ານການເຈລະຈາ.
- ***ການລົງທຶນ (ທີ່ດິນ ແລະ ແຮງງານ):*** ຊາວກະສິກອນຜູ້ທີ່ເຫັນດີທີ່ຈະຮ່ວມ ການຜະລິດກະສິກຳເປັນສິນຄ້າແບບມີສັນຍາ, ຕາມຫຼັກການແລ້ວ, ຕົວຢ່າງ ຮູບແບບ “2+3”, ຕ້ອງໄດ້ສະໜອງແຮງງານ ແລະ ທີ່ດິນ ຊຶ່ງຖືວ່າເປັນການລົງທຶນ. ເງື່ອນໄຂ ແລະ ຄວາມຮັບຜິດຊອບເຫຼົ່ານີ້ປົກກະຕິແມ່ນໄດ້ລະບຸໃນສັນຍາ.
- ***ການຜະລິດ ແລະ ຂາຍຜະລິດຕະພັນ ໃຫ້ຜູ້ນັກລົງທຶນ:*** ຕາມປົກກະຕິແລ້ວ; ຕາມສັນຍາ, ໃນເມື່ອ ຊາວກະສິກອນໄດ້ຕົກລົງ ແລະ ໄດ້ຮັບປັດໃຈການຜະລິດຈາກຜູ້ລົງທຶນ; ຜົນຜະລິດກະສິກອນຕາມເງື່ອນໄຂ, ຈຳນວນ ແລະ ຄຸນນະພາບທີ່ລະບຸໃນສັນຍາ ຕ້ອງໄດ້ຂາຍໃຫ້ຜູ້ລົງທຶນ.

ນອກນັ້ນ ຍັງຜູ້ມີສ່ວນຮ່ວມອື່ນໆ ເຊັ່ນ: ອົງການຈັດຕັ້ງພາກລັດ[9], ອົງການຈັດຕັ້ງສຳລັບການພັດທະນາ ແລະ ອົງການຈັດຕັ້ງທີ່ບໍ່ຂຶ້ນກັບລັດຖະບານ (DO/GNOs), ກຸ່ມຊາວກະສິກອນ, ແລະ ຕົວແທນຂອງຜູ້ລົງທຶນ.
ບົດບາດ ແລະ ຄວາມຮັບຜິດຊອບຂອງພາກສ່ວນທີກ່ຽວຂ້ອງເຫຼົ່ານີ້ໄດ້ສັງລວມໄວ້ ໃນ ຮູບ ແລະ ຕາຕະລາງ ຂ້າງລຸ່ມນີ້:




**ຕາຕະລາງ 4:** ບົດບາດ ແລະ ຄວາມຮັບຜິດຊອບຂອງຜູ້ມີສ່ວນຮ່ວມຫຼັກອື່ນໆ

[9] ໂດຍລວມ, ອົງການຈັດຕັ້ງຂອງລັດປະກອບທີ່ອຳນວຍຄວາມສະດວກການຜະລິດກະສິກຳເປັນສິນຄ້າແບບມີສັນຍາດ້ວຍ ພະ ແນກ/ຫ້ອງການ ກະສິກຳ ແລະ ປ່າໄມ້ (P/DAFO), ອຸດສາຫະກຳ ແລະ ການຄ້າ (P/DIC), ແຜນການ ແລະ ການລົງທຶນ (P/DPI) ແລະ ຫ້ອງວ່າການ(P/DAO)ໃນລະດັບ ແຂວງ ແລະ ເມືອງ.

| | ບົດບາດ ແລະ ຄວາມຮັບຜິດຊອບຕົ້ນຕໍ | ຄວາມຮັບຜິດຊອບຮ່ວມກັນ ຫຼື ວຽກ ປະສານງານ |
|---|---|---|
| P/DAFO | 1) ສະໜອງ ແລະ ເຜີຍແຜ່ຂໍ້ມູນ ກະສິກຳ (ກົດ ໝາຍ, ລະບຽບ, ພື້ນທີ່ດິນ, ແລະ, ການຜະລິດ ແລະ ເຕັກນິກ ການຜະລິດ, ພະຍາດ ແລະ ແມງໄມ້ລະບາດ, ຕະຫຼາດ ລວມທັງ ຂໍ້ມູນກ່ຽວກັບຊາວກະສິກອນ)<br>2) ກວດກາຕິດຕາມຂະບວນການຜະລິດ<br>3) ¦É¾¤£¸¾´º¾©¦¾´¾©, ±ô¡ºö®»ö´ກ່ຽວ ກັບການ ຜະລິດລວມທັງການສ້າງ¡÷È´°øÉº½ìò©<br>4) ສະກັດກັ້ນ ແລະ ປ້ອງກັນພະຍາດ ແລະ ແມງໄມ້ລະບາດ<br>5) µ˜¤¨õ-°½ìò©ª½°ö-¡½¦ò¡¿,ແຫຼ່ງຜະລິດ,ຂະບວນການ ຜະລິດ, ເຕັກນິກ ແລະ ຄຸນນະພາບ<br>6) ຄວບຄຸມ, ຕິດຕາມກວດກາການນຳເຂົ້າ, ການສົ່ງອອກ, ການນຳໃຊ້ ແລະ ການຄ້າຂາຍ ລວມທັງການຂົນສົ່ງ ເຄມີ ແລະ ປັດໃນການຜະລິດກະສິກຳ<br>7) ສຳຫຼວດ ແລະ ວາງແຜນກະສິກຳ | 1. ທົບທວນ ແລະ ປະກອບຄຳເຫັນແລະ ຄຳແນະນຳຕໍ່-¦ñ--¨¾<br>2. ¡¸©¡¾ªò©ª¾´ Áì½ ¯½À´ó-°ö-(¢½®¸-¡¾-°½ìò© Áì½ ¡¾-¦‰¤ºº¡Œê¼® ¢Ó´ø-¡¾-¦‰¤ºº¡, Áì¡¯È¼-®ö©»¼-, ¡¿-ö© ì½®¼®¡¾-¦‰¤ºº¡ ¦¿ìñ®²õ©¡½¦ò¡¿Œ¡ñ®©È¾-)<br>3. ສົ່ງເສີມ ແລະ §È¸¨--Á-½-¿ -ñ¡-ìö¤êô-- ê†-À¯ñ--Ä¯-Ä©É Áì½ ÎÉ¾-À§ˆº-«õ<br>4. §È¸¨ອຳນວຍຄວາມສະດວກໃນການເຂົ້າ ເຖິງ ແລະ ຫຼື ¦½Îº¤-¢Ó-´ø--ກ່ຽວກັບ-ª½Í¾©, -Àªñ¡-ò¡-¡¾--°½ìò© -Áì½ °ö--°½ìò©<br>5. º¿-¸¨-£¸¾´-¦½©¸¡-Ã--¡¾--À¥ì½¥¾ ເພື່ອໃຫ້ມີຄວາມຍຸດຕິທຳ ແລະ ເທົ່າ ທຽມກັນສຳລັບຜູ້ລົງທຶນ ແລະ ຊາວ ກະສິກອນ<br>6. ລົງລາຍເຊັນໃນສັນຍາໃນນາມເປັນ ພິຍານ<br>7. ¡¸©¡¾-ªò©ª¾´ -Áì½ ¯½-À´ó-- °ö-(¡¾-¥ñ©ª˜¤¯½ªò®ñ©¦ñ-¨¾-¦º¤-¦í-) ຮ່ວມກັນ<br>8. ຊ່ວຍແກ້ໄຂບັນຫາ ແລະ ຂໍ້ຂັດແຍ່ງໃນ ການຈັດຕັ້ງປະຕິບັດສັນຍາ<br>9. ຊ່ວຍສຳຫຼວດ ແລະ ສຶກສາຄວາມເປັນ ໄປໄດ້ໃນການລິເລີ່ມການຜະລິດເປັນ ສິນຄ້າແບບມີສັນຍາ |
| P/DIC | 1) ºº¡Ã®º½-÷¨¾©ການດຳເນີນທຸລະກິດ, ¡¾--¿À¢í¾Œ¦‰¤ºº¡<br>2) ¦½Îº¤¢Ó´ø- Áì½ ªò©ª¾´¡¸©¡¾¡È¼¸¡ñ®´¾©«¾-¦ò-£É¾, ລາຄາ<br>3) ຊອກະຫຼາດ, ຜູ້ຊື້, ຜູ້ລົງທຶນ ພໍ່ຄ້າ ໃໝ່ ແລະ ເຊື່ອມໂຍງກັບ ຊາວກະສິກອນ | |
| P/DPI | 1) ພັດທະນາ ແລະ ສະໜອງ ຂໍ້ມູນກ່ຽວກັບ ການລົງທຶນ<br>2) ກວດສອບ ແລະ ທົບທວນ ຄວາມເປັນໄປໄດ້ ຂອງການ ລົງທຶນ/ນັກລົງທຶນ<br>3) ອຳນວຍຄວາມສະດວກໃນການກະກຽມເອກະສານສຳລັບ ການລົງທຶນ<br>4) ອອກໃບອະນຸມັດໃນການລົງທຶນ(ປະມານຄະນະກຳມະການ ສຳລັບ ການລົງທຶນ ) ລວມທັງ ສັງລວມ ແລະ ຂຶ້ນທະບຽນ ການລົງທຶນ<br>5) ກວດກາຕິດຕາມ ແລະ ປະເມີນຜົນການຈັດຕັ້ງປະຕິບັດ ຂອງຜູ້ລົງທຶນ ລວມທັງ ທຶນຈົດທະບຽນ ແລະ ເງິນມັດຈຳ | |
| P/DAO | 1) ອະນຸມັດການລົງທຶນ (ສຳລັບແຂວງ ແລະ ເມືອງ; ປະທານ ຄະນະກຳມະການການລົງທຶນປົກກະຕິຈະແມ່ນຮອງເຈົ້າເມືອງ , ຮອງເຈົ້າແຂວງ) | |
| ອຳນາດ ການ ປົກຄອງ | 1) ເກັບກຳ ແລະ ສະໜອງ ຂໍ້ມູນ ເສດຖະກິດສັງຄົມຂອງບ້ານ<br>2) ເປັນສື່ກາງປະສານງານກັບ ແລະ ສ້າງຄວາມເຂົ້າໃຈລະຫວ່າງ | |

| | ບົດບາດ ແລະ ຄວາມຮັບຜິດຊອບຕົນຕໍ | ຄວາມຮັບຜິດຊອບຮ່ວມກັນ ຫຼື ວຽກປະສານງານ |
|---|---|---|
| **ບ້ານ** | ຜູ້ລົງທຶນ/ພໍ່ຄ້າ ແລະ ຊາວກະສິກອນ ລວມທັງ ພາກລັດ<br>3) ແລກປ່ຽນການຜະລິດ ເຕັກນິກ ແລະ ຂໍ້ມູນ ຕະຫຼາດ<br>4) ລະດົມຊາວກະສິກອນ ແລະ ອໍານວຍ/ສ້າງກຸ່ມຜູ້ຜະລິດ/ຊາວກະສິກອນ<br>5) ຕິດຕາມກວດກາ ແລະ ປະເມີນຜົນ ການຜະລິດ , ການສະໜອງປັດໃຈການຜະລິດ<br>6) ພັດທະນາລະບຽບ ແລະ ຂໍ້ຕົກລົງຂອງບ້ານລວມທັງການຄຸ້ມຄອງຈັດຕັ້ງປະຕິບັດ<br>7) ແກ້ໄຂ/ອໍານວຍຄວາມສະດວກໃນການແກ້ໄຂ ຂໍ້ຂັດແຍ່ງ | |

## 2.6 ຂໍ້ດີ ແລະ ຂໍ້ເສຍ ຂອງການຜະລິດກະສິກໍາເປັນສິນຄ້າແບບມີສັນຍາ

ການຜະລິດເປັນສິນຄ້າແບບມີສັນຍາໄດ້ເປັນບ່ອນອີງສໍາລັບຊາວກະສິກອນ ແລະ ຜູ້ລົງທຶນໄດ້ ນໍາໃຊ້ຊັບພະຍາກອນເພື່ອລົງທຶນ ແລະ ຮັບຜົນປະໂຫຍດຮ່ວມກັນ. ຂໍ້ດີ ແລະ ຂໍ້ເສຍ ຫຼື ຄວາມສ່ຽງ ກ່ຽວກັບການຜະລິດເປັນສິນຄ້າແບບມີສັນຍາຕໍ່ຊາວກະສິກອນ ແລະ ຜູ້ລົງທຶນສາມາດສະຫຼຸບໄດ້ ດັ່ງຕາຕະລາງ 5.

**ຕາຕະລາງ** 5: ຂໍ້ດີ ແລະ ຂໍ້ເສຍ ຂອງການຜະລິດກະສິກໍາແບບມີສັນຍາ

| | ຊາວກະສິກອນ | ນັກລົງທຶນ |
|---|---|---|
| **ຂໍ້ດີ** | **ຊາວກະສິກອນ**<br>• ໄດ້ຮັບການສະໜອງທາງດ້ານປັດໃຈການຜະລິດ (ຫຼຸດຜ່ອນພາລະກ່ຽວກັບປັດໃຈການຜະລິດ, ເວລາ ແລະ ສິນເຊື່ອ)<br>• ໄດ້ຮັບການຊ່ວຍເຫຼືອທາງດ້ານເຕັກນິກ ການຜະລິດ ແລະ ການບໍລິການອື່ນໆ (ການກຽມດິນ, ການຂົນສົ່ງ...)<br>• ສ້າງຄວາມອາດສາມາດໃນການຜະລິດ ແລະ ການຄຸ້ມຄອງ<br>• ຮັບປະກັນທາງດ້ານຕະຫຼາດ<br>• ມີລາຍຮັບທີ່ໝັ້ນຄົງກວ່າ<br>• ສາມາເຂົ້າເຖິງສິນເຊື່ອ (ເງິນລ່ວງໜ້າ ຫຼື ເຊື່ອມໂຍງກັບທະນາຄານ) | **ນັກລົງທຶນ**<br>• ສາມາດຮັບປະກັນການເກັບຊື້ຜົນຜະລິດທີ່ຕໍ່ເນື່ອງກວ່າ<br>• ໄດ້ຮັບຜະລິດຕະພັນທີ່ມີລັກສະນະ ແລະ ໄດ້ມາດຖານກວ່າ<br>• ເຂົ້າເຖິງທີ່ດິນໄດ້ສະດວກຂຶ້ນ<br>• ອາດໄດ້ຈ່າຍລາຄາສໍາລັບຜົນຜະລິດຕໍ່າກວ່າ<br>• ເຂົ້າເຖິງສິນເຊື່ອ ແລະ ການຊ່ວຍເຫຼືອທາງການເງິນອື່ນໆ ໄດ້ສະດວກຂຶ້ນ<br>• ອາດໄດ້ຈ່າຍຄ່າແຮງງານທີ່ຕໍ່າ◌່ກວ່າ<br>• ສາມາດສືບຕໍ່ ຫຼື ຕໍ່ສັນຍາໃນໄລຍະຍາວໄດ້ |
| **ຂໍ້ເສຍ ຫຼື ຄວາມສ່ຽງ** | **ຊາວກະສິກອນ**<br>• ຜູ້ລົງທຶນອາດຜິດສັນຍາຫາກສະພາບຕະ ຫຼາດບໍ່ມີສະຖຽນລະພາບ ຫຼື ຢາກເອົາກໍາໄລ<br>• ມີຄວາມສ່ຽງກ່ຽວກັບຜົນຜະລິດ ແລະ ບ່ອນກໍລະນີ ຜູ້ລົງທຶນອາດຈະຄາດການຜະລິດຕະຜົນເກີນ ຄວາມເປັນຈິງ<br>• ຕາຕະລາງການເກັບຊື້ແມ່ນຄວບຄຸມໂດຍຜູ້ລົງທຶນສະ | **ນັກລົງທຶນ**<br>• ອາດມີຄວາມສ່ຽງກ່ຽວກັບການລ່ວງສັນຍາ<br>• ຊາວກະສິກອນນໍາໃຊ້ປັດໃຈການຜະລິດ ເພື່ອຈຸດປະສົງອື່ນ ຊຶ່ງເຮັດໃຫ້ມີຜົນຕໍ່ຄຸນນະພາບ ແລະ ຈໍານວນຜົນຜະລິດ |

| ຊາວກະສິກອນ | ນັກລົງທຶນ |
| --- | --- |
| ນັ້ນ ອາດມີຜົນຕໍ່ລາຄາທີ່ຊື້ກັບຊາວກະສິກອນ<br>• ຂາດຄວາມໂປ່ງໃສກ່ຽວກັບການກຳນົດລາຄາ ອາດຕັ້ງໃຈ ຫຼື ບໍ່ໄດ້ຕັ້ງໃຈ ເນື່ອງຈາກຂາດຂໍ້ມູນດ້ານຕະຫຼາດ<br>• ຈຳກັດການຂາຍຜົນຜະລິດສູ່ຕະຫຼາດອື່ນ ຫຼື ຄວບຄຸມ ແລະ ມີການຜູກຂາດ;<br>• ການຫຼຸດລົງຂອງລາຄາໃນໄລຍະຍາວ<br>• ເຄືອຂ່າຍ ຕະຫຼາດໃນເມື່ອກ່ອນອາດສູນເສຍໄປ<br>• ການກະເສດ ແລະ ຄວາມຮູ້ທ້ອງຖິ່ນອາດສູນເສຍໄປ<br>• ມີຄວາມສ່ຽງເນື່ອງຈາກການເຮັດກະສິກຳແບບປູກພືດຊະນິດດຽວ<br>• ໂຄງສ້າງທາງດ້ານສັງຄົມອາດປ່ຽນແປງ<br>• ມີຄວາມສ່ຽງກ່ຽວກັບໜີ້ສິນ<br>• ມີຄວາມສ່ຽງອາດຂຶ້ນກັບຜູ້ທີ່ບໍ່ເຮັດສັນຍາ<br>• ຊາວກະສິກອນເປັນໜີ ້ເນື່ອງຈາກການຜະລິດບໍ່ປະສົບຜົນສຳເລັດ ຫຼື ນັກລົງທຶນ/ພໍ່ຄ້າ ປະຕິເສດທີ່ຈະຊື້ຜະລິດຕະພັນ ;<br>• ຜົນປະໂຫຍດຂອງ ຊາວກະສິກອນ ຍັງຈຳກັດ ຖ້າບໍ່ສາມາດເຂົ້າເຖິງຕະຫຼາດ, ເທັກໂນໂລຊີ ແລະ ທຶນໄດ້ໂດຍກົງ. | • ມີຄ່າສິນເປືອງສູງເມື່ອເຮັດກັບຊາວກະສິກອນຫຼາຍກຸ່ມ<br>• ຊາວກະສິກອນຂາຍຜົນຜະລິດໃຫ້ພໍ່ຄ້າຄົນອື່ນ ຫຼື ນອກສັນຍາຊຶ່ງເຮັດໃຫ້ບໍ່ໄດ້ຜົນຜະລິດຕາມທີ່ຕ້ອງການ ແລະ ຕໍ່ເນື່ອງ;<br>• ຈຳກັດໃນການຊອກຫາແຫຼ່ງສະໜອງຜົນຜະລິດ ອື່ນໆ |

## 2.7 ບົດຮຽນທີ່ຖອດຖອນໄດ້ຈາກການຜະລິດກະສິກຳເປັນສິນຄ້າແບບມີສັນຍາ

ໃນ ສ ປ ປ ລາວ ການສຶກສາຈຳນວນກ່ຽວກັບການຜະລິດເປັນສິນຄ້າແບບມີສັນຍາ ແມ່ນຍັງບໍ່ທັນກວ້າງ ຂວາງ; ການສຶກສາຈຳນວນໜ້ອຍໜຶ່ງ ໄດ້ດຳເນີນ ໂດຍພາກລັດ, ອົງການຈັດຕັ້ງສຳລັບການພັດທະນາ ຫຼື ຜູ້ໃຫ້ທຶນ ແລະ ກຸ່ມວິຊາການກ່ຽວກັບທຸລະກິດກະສິກຳ. ແນວໃດກໍ່ຕາມ, ເພື່ອຊອກຫາບົດຮຽນທີ່ດີເພື່ອນຳມາສົ່ງເສີມ ແລະ ບັນຫາເພື່ອການວາງແຜນແກ້ໄຂ; ການຖອດຖອນບົດຮຽນໃນຕໍ່ໄປນີ້ເນັ້ນໃສ່ ບົດຮຽນທີ່ປະສົບຜົນສຳເລັດ[10], ປັດໃຈທີ່ພາໃຫ້ເກີດຜົນສຳເລັດ ແລະ ສາເຫດທີ່ກໍ່ໃຫ້ເກີດບັນຫາຊຶ່ງສາມາດສັງລວມໄດ້ດັ່ງນີ້:

### 2.7.1 ບັນດາປັດໃຈທີ່ພົວພັນ ແລະ ກໍ່ໃຫ້ເກີດຜົນສຳເລັດ

ປັດໃຈທີ່ພາໃຫ້ເກີດຜົນສຳເລັດ ລວມມີທັງປັດໃຈພາຍໃນ, ພາຍນອກ ແລະ ເງື່ອນໄຂອື່ນໆ. ຂ້າງລຸ່ມແມ່ນການສັງລວມບັນດາປັດໃຈທີ່ນຳໄປສູ່ຄວາມສຳເລັດສຳລັບການຈັດຕັ້ງປະຕິບັດການຜະລິດກະສິກຳແບບມີສັນຍາໃນໄລຍະທີ່ຜ່ານມາ:

[10] ໃນບົດແນະນຳນີ້ ປະສົບຜົນສຳເລັດຂອງ ການຜະລິດເປັນສິນຄ້ າແບບມີສັນຍາ ໝາຍ ເຖິງຊາວກະສິກອນ ແລະ ຜູ້ລົງທຶນສາມາດດຳເນີນທຸລະກິດຮ່ວມກັນໄດ້ຢ່າງໜ້ອຍ 3 ລະດູການ, ຍັງມີສາຍສຳພັນທີ່ດີ ແລະ ມີຄວາມຕັ້ງໃຈທີ່ຈະສືບຕໍ່ລົງທຶນຮ່ວມກັນໃນອະນາຄົດ.

**ປັດໃຈພາຍໃນ:**

1. ***ຍ້ອນມີສັນຍາ ແລະ ຂໍ້ຕົກລົງທີ່ເປັນລາຍລັກອັກສອນ:*** ພົວພັນ ແລະ ກໍ່ໃຫ້ເກີດຜົນສໍາເລັດເພາະວ່າຊ່ວຍສ້າງຄວາມໂປ່ງໃສ, ຄວາມແນ່ນອນ ແລະ ສ້າງຄວາມເຊື່ອໝັ້ນ.
2. ***ການກໍານົດລາຄາຕາມລາຄາທ້ອງຕະຫຼາດ:*** ລາຄາທີ່ກໍານົດສ່ວນຫຼາຍແມ່ນເໝາະສົມກັບທ້ອງຖິ່ນ ຫຼື ຢູ່ໃນລະດັບທີ່ຊາວກະສິກອນບໍ່ຫຼຸດທຶນ
3. ***ການໃຫ້ເງິນລ່ວງໜ້າ (ຈ່າຍຄ່າເຊົ່າທີ່ດິນ, ໃຫ້ສິນເຊື່ອບໍ່ມີດອກເບ້ຍ ແລະ ມີລະບົບເງິນມັດຈໍາ).*** ສະແດງໃຫ້ເຫັນວ່າຜູ້ລົງທຶນມີທຶນທີ່ອາດພຽງພໍ, ມີຄວາມຮັບຜິດຊອບ ແລະ ໝັ້ນໃຈຊາວກະສິກອນ ແລະ ຖ້າບໍ່ປະສົບຜົນສໍາເລັດ ເງິນລ່ວງໜ້ານັ້ນ ແມ່ນນໍາໃຊ້ເພື່ອຊົດເຊີຍໃຫ້ຊາວກະສິກອນ ຊຶ່ງຈະຊ່ວຍໃຫ້ເຂົາເຈົ້າເອົາໃຈໃສ່ຕໍ່ການຈັດຕັ້ງປະຕິບັດໜ້າທີ່ຕາມສັນຍາ.

   ***ມີການຢັ້ງຢືນລະບົບການຜະລິດ.*** ຮັບປະກັນຄຸນນະພາບຂອງຜົນຜະລິດ ແລະ ເງື່ອນໄຂ ຊຶ່ງສາມາດ ເພີ່ມມູນຄ່າ ແລະ ລາຍຮັບໃຫ້ຊາວກະສິກອນສູງ ໃນບາງຕະຫຼາດ.

**ປັດໃຈພາຍນອກ:**

1. ***ການໃຫ້ຄຸນຄ່າໃນການພັດທະນາຄວາມສໍາພັນ ແລະ ຜົນປະໂຫຍດທາງສັງຄົມ:*** ການລົງທຶນທາງດ້ານເວລາໃນການສ້າງຄວາມສໍາພັນ ຊ່ວງ ສິ່ງເຫຼົ່ານີ້ຈະນໍາໄປສູ່ການເຫັນແກ່ຜົນຜະປະໂຫຍດຊຶ່ງກັນ ແລະ ກັນ.
2. ***ຜູ້ອໍານວຍຄວາມສະດວກ ຫຼື ຕົວແທນທີ່ດີ:*** ເຊື່ອມໂຍງ ຫຼື ສ້າງກາລະໂອກາດ ແລະ ເຮັດໃຫ້ ສັນຍາລະຫວ່າງ ຊາວກະສິກອນ ແລະ ຜູ້ລົງທຶນ ງ່າຍ ແລະ ຫຼື ສະດວກຂຶ້ນເພື່ອຜົນຕອບແທນທາງດ້ານເສດຖະກິດ ແລະ ສັງຄົມ
3. ***ຂໍ້ມູນກ່ຽວກັບຕະຫຼາດ:*** ຊ່ວຍຊາວກະສິກອນຕັດສິນໃຈ,ເຈລະຈາ ກັບຜູ້ລົງທຶນ ແລະ ເຮັດໃຫ້ສັນຍາ ຍຸດຕິທໍາ ເພີ່ມຂື້ນ.
4. ***ຮັກສາຄວາມດູນດ່ຽງການຮ່ວມງານກັບພໍ່ຄ້າ ແລະ ນັກລົງທຶນ:*** ການທີ່ຊາວກະສິກອນແຍກຂາຍຜົນຜະລິດສ່ວນໃດໜຶ່ງ ໃຫ້ຜູ້ລົງທຶນ ແລະ ພໍ່ຄ້າທົ່ວໄປ ເປັນກົນໄກໜຶ່ງຊ່ວຍຮັບປະກັນຜົນປະໂຫຍດ ແລະ ຫຼຸດຄວາມສ່ຽງສໍາລັບຊາວກະສິກອນ ແລະ ເງື່ອນໄຂອື່ນໆ.
5. ***DAFOs ຊ່ວຍໃນການເຈລະຈາສໍາລັບຊາວກະສິກອນ ແລະ ຜູ້ລົງທຶນ:*** ຊ່ວຍຄັດເລືອກພືດ ທີ່ເໝາະສົມກັບສະພາບ, ເງື່ອນໄຂຂອງທ້ອງຖິ່ນ; ຊຸກຍູ້ການວາງເງິນມັດຈໍາ ແລະ ກັ່ນກອງຜູ້ລົງທຶນທີ່ມີຄວາມສ່ຽງ.

**ປັດໃຈ ຫຼື ມາດຕະການບັງຄັບອື່ນໆ:**

- ດ້ານເສດຖະກິດ: ຄວາມເຂົ້າໃຈ, ຊື່ສຽງ ແລະ ຜົນຕອບແທນທີ່ດີ ຊ່ວຍໃຫ້ ຜູ້ລົງທຶນ ແລະ ຊາວກະສິກອນຫັນມານໍາໃຊ້ສັນຍາ ເຖິງແມ່ນອາດມີບາງບັນຫາເກີດຂື້ນ.
- ດ້ານສັງຄົມ: ການພົວພັນຂອງສາຍຍາດພີ່ນ້ອງ, ເງື່ອນໄຂ ແລະ ສາຍພົວພັນຂອງສັງຄົມ ທີ່ສ້າງເງື່ອນໄຂ ເຮັດໃຫ້ ຜູ້ລົງທຶນ ແລະ ຊາວກະສິກອນ ປະຕິບັດ ສັນ ຍາແບບຍຸດຕິທໍາຕໍ່ ກັນ ແລະ ກັນ.
- ດ້ານບໍລິຫານ:
  - DAFOs ຮຽກຮ້ອງໃຫ້ຜູ້ລົງທຶນມັດຈໍາເງິນສໍາລັບການຜະລິດ
  - DAFOs, ຄຸ້ມບ້ານເປັນສື່ກາງໃນການໄກ່ເກຍ່ ແລະ ແກ້ໄຂບັນຫາຊ່ວຍ.

- ທາງດ້ານກົດໝາຍ: ການເຂົ້າເຖິງການບໍລິການທາງດ້ານກົດໝາຍຂັ້ນຕົ້ນຍັງຈຳກັດ.

**ດ້ານປະສິດທິຜົນ:**

- ການປະຕິບັດມາດຕະການທາງດ້ານເສດຖະກິດ ແລະ ສັງຄົມເປັນ ມາດຕະການທີ່ງ່າຍ ແລະ ມີປະສິດທິຜົນກວ່າ
- ການປະຕິບັດມາດຕະການທາງດ້ານບໍລິຫານ ແລະ ກົດໝາຍ ມີຄວາມສັບສົນ, ອະທິບາຍຍາກ, ບໍ່ສອດຄ່ອງ , ສິ້ນເປືອງງົບປະມານ ແລະ ມີຄວາມສ່ຽງ ຫຼື ລ່າຊ້າ.

### 2.7.2 ປັດໃຈທີ່ກໍ່ໃຫ້ເກີດບັນຫາ ຫຼື ບໍ່ປະສົບຜົນສຳເລັດ

ນອກຈາກການຜະລິດກະສິກຳເປັນສິນຄ້າແບບມີສັນຍາບໍ່ມີ ຫຼື ປະຕິບັດຕາມລັກສະນະ ແລະ ເງື່ອນໄຂທີ່ພາໃຫ້ເກີດຜົນສຳເລັດດັ່ງທີ່ກ່າວແລ້ວ; ຕາມທີ່ພົບ, ປັດໃຈອື່ນໆທີ່ພົວພັນກັບຄວາມຫຼົ້ມເຫຼວແມ່ນ:

1. ການຜະລິດເກີນຄວາມອາດສາມາດໃນການຮອງຮັບຂອງຊັບພະຍາກອນ (ທີ່ດິນ); ຊຶ່ງກໍ່ໃຫ້ເກີດດິນເຊື່ອມໂຊມ, ຜົນຜະລິດ ແລະ ລາຍຮັບຫຼຸດລົງ;
2. ອົງການຈັດຕັ້ງທີ່ກ່ຽວຂ້ອງບໍ່ສາມາດບັງຄັບໃຊ້ສັນຍາ, ລະບຽບກົດໝາຍ ໃນກໍລະນີ  ນັກລົງທຶນ ປະລະທຸລະກິດທີ່ມີສັນຍາກັບຊາວກະສິກອນ;
3. ຄວາມຮູ້, ຄວາມອາດສາມາດ ກ່ຽວກັບ ການວາງແຜນການຜະລິດ  ແລະ ທຸລະກິດຍັງຕ່ຳ;
4. ຜູ້ມີສ່ວນຮ່ວມມີຄວາມສົນໃນທີ່ແຕກຕ່າງກັນ; ບົດບາດ ແລະ ຄວາມຮັບຜິດຊອບກ່ຽວກັບການເຮັດກະສິກຳເປັນສິນຄ້າແບບມີສັນຍາບໍ່ຈະແຈ້ງ;
5. ຂາດການຕິດຕາມກວດກາ ລວມທັງ  ງົບປະມານໃນການຕິດຕາມກວດກາ ແລະ ຊຸກຍູ້ການຜະລິດຂອງຊາວກະສິກອນ;
6. ສັນຍາບໍ່ຈະແຈ້ງ ແລະ ຫຼື ການຈັດຕັ້ງປະຕິບັດບໍ່ສອດຄ່ອງກັບສັນຍາ.

## ພາກທີ 3: ການອຳນວຍຄວາມສະດວກການຜະລິດເປັນສິນຄ້າແບບມີສັນຍາ

ໂດຍລວມແລ້ວ, ເປົ້າໝາຍຂອງການ ການອຳນວຍຄວາມສະດວກ ໃນການເຮັດການຜະລິດເປັນສິນຄ້າແບບມີສັນຍາ ແມ່ນເພື່ອ ສົ່ງເສີມ ແລະ ຄຸ້ມຄອງການຜະລິດເປັນສິນຄ້າ, ການລົງທຶນ, ສ້າງວຽກເຮັດງານທຳ ແລະ ລາຍຮັບໃຫ້ຊຸມຊົນ ແລະ ສັງຄົມ ແບບຍືນຍົງ. ໂດຍສະເພາະແມ່ນ ການເຮັດສັນຍາ, ການຈັດຕັ້ງປະຕິບັດສັນຍາທີ່ເປັນທຳ, ເທົ່າທຽມກັນ, ໂປ່ງໃສ, ຕ່າງຝ່າຍຕ່າງມີຜົນ ແລະ ຍືນຍົງ.

ຂໍ້ແນະນຳ ແລະ ຕົວຢ່າງ ໃນການອຳນວຍຄວາມສະດວກ ການຜະລິດສິນຄ້າແບບມີສັນຍາ ໃນບົດແນະນຳນີ້ ສຸມໃສ່ລະດັບການຈັດຕັ້ງປະຕິບັດ ໂດຍສະເພາະ ;   1) ພາລະບົດບາດ, 2) ຈຸດຍືນຂອງຕົນເອງຜູ້ອຳນວຍຄວາມສະດວກ, 3) ຂະບວນການຂອງການຜະລິດເປັນສິນຄ້າແບບມີສັນຍາ ແລະ ວິທີການອຳນວຍຄວາມສະດວກໃນແຕ່ລະຂັ້ນຕອນນັ້ນ ແລະ 4) ຄວາມສຳຄັນທາງດ້ານກົດໝາຍຂອງການຜະລິດເປັນສິນຄ້າແບບມີຂໍ້ຜູກມັດໃນສັນຍາ

ແລະ ບໍ່ໄດ້ກວມເອົາການສ້າງເງື່ອນໄຂສະພາບແວດລ້ອມທີ່ເອື້ອຍອຳນວຍ ແລະ ການສົ່ງເສີມການພັດທະນາກະສິກຳ ໂດຍລວມ ໃນລະດັບມະຫາພາກ.

## 3.1 ຈຸດປະສົງ ແລະ ບົດບາດຂອງຜູ້ອຳນວຍຄວາມສະດວກ

ການອຳນວຍຄວາມສະດວກ ການຜະລິດກະສິກຳເປັນສິນຄ້າແບບມີສັນຍາ ເປັນໜຶ່ງໜ້າວຽກທີ່ທ້າທາຍ ໂດຍສະເພາະ ແມ່ນການສົ່ງເສີມ ແລະ ຄຸ້ມຄອງຢ່າງມີປະສິດທິພາບ; ນຳໄປສູ່ການພັດທະນາທີ່ມີຄວາມຍືນຍົງ. ສະນັ້ນມັນຈຳເປັນທີ່ຜູ້ອຳນວຍຄວາມສະດວກຕ້ອງມີຄວາມຮູ້ ແລະ ທັກສະທີ່ແນ່ນອນ, ມີບົດແນະນຳ ແລະ ການຈັດຕັ້ງປະຕິບັດທີ່ດີ. ການຈັດຕັ້ງປະຕິບັດທີ່ບໍ່ດີ ຫຼື ບໍ່ມີປະສິດທິພາບ, ປະສິດທິຜົນ ອາດເຮັດໃຫ້ ຊາວກະສິກອນ, ຜູ້ລົງທຶນ ແລະ ພາກສ່ວນອື່ນໆ ຂາດຄວາມເຊື່ອໝັ້ນ, ບໍ່ເຊື່ອຖື ແລະ ຫຼຸດບົດບາດຂອງ ຜູ້ອຳນວຍຄວາມສະດວກ ແລະ/ຫຼື ອາດສ້າງຂໍ້ຂັດແຍ່ງ ໃນການເຮັດກະສິກຳເປັນສິນຄ້າແບບມີສັນຍາ. ໝາຍຄວາມວ່າການອຳນວຍຄວາມສະດວກ ຫຼື ການເຂົ້າມາກ່ຽວຂ້ອງກັບ ການເຮັດກະສິກຳເປັນສິນຄ້າແບບມີສັນຍາ ຄວນຈະຊ່ວຍຮັບປະກັນຄວາມຍືນຍົງຂອງທຸລະກິດ, ສ້າງສາຍສຳພັນລະຫວ່າງພາກສ່ວນທີ່ກ່ຽວຂ້ອງ, ເພີ່ມມູນຄ່າ; ໃນຂະນະດຽວກັນກໍ່ຊ່ວຍຫຼຸດຜ່ອນຄວາມສ່ຽງ, ຂໍ້ຂັດແຍ່ງ, ພາລະທາງດ້ານການເງິນ ແລະ ອື່ນໆ ຊຶ່ງຈະເຮັດໃຫ້ເປັນທີ່ໄວ້ເນື້ອເຊື່ອໃຈຂອງ ນັກລົງທຶນ, ຊາວກະສິກອນ ແລະ ພາກສ່ວນອື່ນໆ ແລະ ຊື່ສຽງຂອງ ຜູ້ອຳນວຍຄວາມສະດວກ.

**ກອບຮູບທີ 1: ບົດບາດຂອງຜູ້ອຳນວຍຄວາມສະດວກ**

"ສົ່ງເສີມແນວຄວາມຄິດ" ກ່ຽວກັບການຜະລິດແບບມີສັນຍາ

"ອຳນວຍຄວາມສະດວກຂະບວນການ" ຊຶ່ງຈະຊ່ວຍໃຫ້ມີການປຶກສາຫາລືກ່ຽວກັບສະພາບຂອງຜູ້ລົງທຶນ ແລະ ຊາວກະສິກອນ, ກຳນົດ, ຈັດບຸລິມະສິດ, ສ້າງແຜນ ແລະ ແກ້ໄຂບັນຫາເຫຼົ່ານີ້.

"ຮັບປະກັນການສື່ສານທີ່ດີ" ຊຶ່ງຈະຊ່ວຍໃຫ້ເຂົາເຈົ້າສາມາດຕັດສິນໃຈລ່ວງໜ້າ ວ່າຈະຮ່ວມເຮັດສັນຍາຫຼື ບໍ ຫຼື ໃນເງື່ອນໄຂອັນໃດ?

"ບໍ່ລຳອຽງ" ແລະ ໃຫ້ເຂົາເຈົ້າຕັດສິນໃຈຢ່າງມີອິດສະຫຼະ

ຄວາມຮັບຜິດຊອບອັນລະອຽດ ເພີ່ມ ເຕີມ ແມ່ນ ອະທິບາຍ ໃນຕາຕະລາງ 5

ໂດຍອີງໃສ່ຈຸດປະສົງທີ່ກ່າວມາ, ບົດບາດຂອງຜູ້ອຳນວຍຄວາມສະດວກໃນການເຮັດການຜະລິດເປັນສິນຄ້າ ແບບມີສັນຍາຄວນຈະແມ່ນ:

- ຊ່ວຍອອກແບບ ແລະ ຈັດຕັ້ງປະຕິບັດ ເພື່ອບັນລຸຈຸດປະສົງທີ່ກ່າວມາໂດຍສະເພາະແມ່ນສະໜອງຂໍ້ມູນທີ່ໃຫ້ພຽງພໍ ແລະ ຖືກຕ້ອງ;
- ສຶກສາ ແລະ ກວດກາຄວາມເປັນໄປໄດ້ຂອງທຸລະກິດ;
- ຮັບປະກັນສັນຍາທີ່ເປັນທຳ, ສາມາດຈັດຕັ້ງປະຕິບັດ ແລະ ບັງຄັບໃຊ້ທາງດ້ານກົດໝາຍ;
- ຕິດຕາມກວດກາ ແລະ ການປະເມີນຜົນ ການຈັດຕັ້ງປະຕິບັດສັນຍາ ກໍ່ຄືການຜະລິດ
- ອຳນວຍຄວາມສະດວກການດຳເນີນວຽກງານແບບມີສ່ວນຮ່ວມ, ສ້າງສາຍສຳພັນທີ່ດີ ລະຫວ່າງນັກລົງທຶນ, ຊາວກະສິກອນ ແລະ ຜູ້ມີສ່ວນຮ່ວມ ແລະ ການແກ້ບັນຫາ, ຂໍ້ຂັດແຍ່ງ ແລະ,ຄວາມສ່ຽງອື່ນໆ ທີ່ຕິດພັນກັບການເຮັດການຜະລິດເປັນສິນຄ້າແບບມີສັນຍາ.

## 3.2 ຈຸດຢືນຂອງຜູ້ອຳນວຍຄວາມສະດວກ

ຈຸດຢືນຂອງຜູ້ອຳນວຍຄວາມສະດວກມີຜົນຕໍ່ຄວາມສຳເລັດ ຫຼື ນຳໄປສູ່ທາງທີ່ບໍ່ຖືກຕ້ອງ, ເນາະສົມ ແລະ ສ້າງບັນຫາ,ຂໍ້ຂັດແຍ່ງກ່ຽວກັບການເຮັດການຜະລິດເປັນສິນຄ້າແບບມີຂໍ້ຜູກພັນໃນສັນຍາ. ສະນັ້ນຜູ້ອຳນວຍຄວາມສະດວກຈຳເປັນທີ່ຕ້ອງໄດ້ມີຈຸດຢືນທີ່ຖືກຕ້ອງ ແລະ ຈັດເຈນ. ຂ້າງລຸ່ມນີ້ໄດ້ອະທິບາຍ ບົດບາດ ແລະ ຮູບແບບ ຈຸດຢືນຂອງຜູ້ອຳນວຍຄວາມສະດວກທີ່ແຕກຕ່າງກັນ; ໃນນັ້ນ ແຕ່ລະຮູບແບບ ກໍ່ມີຈຸດໄດ້ປຽບ ແລະ ເສຍປຽບ ຫຼື ຈຸດດີ, ຈຸດອ່ອນຕໍ່ຜູ້ລົງທຶນ ແລະ ຊາວກະສິກອນ. ແນວໃດກໍ່ຕາມ, ສິ່ງສຳຄັນຄື ການເລືອກໃຊ້ຮູບແບບ ທີ່ແທດເນາະກັບສະຖານທີ່ ແລະ ເວລາ.

**ຮູບແບບຄວບຄຸມ:** ຜູ້ອຳນວຍຄວາມສະດວກຜັກດັນເຂົ້າມາມີສ່ວນກ່ຽວຂ້ອງໃນທຸລະກິດລະຫວ່າງ ຊາວກະສິກອນ ແລະ ນັກລົງທຶນ. ຜູ້ອຳນວຍຄວາມສະດວກອາດບໍ່ໄດ້ເຂົ້າມາໃນທຸລະກິດ ຕາມທີ່ຂອງນັກລົງທຶນ ແລະ ຊາວກະສິກອນຮຽນຮ້ອງຕ້ອງການ.

**ຮູບແບບປົກກະຕິ:** ຜູ້ອຳນວຍຄວາມສະດວກເປັນຜູ້ສັງເກດການ ແລະ ຊ່ວຍເຫຼືອເມື່ອເຫັນວ່າມີຄວາມຈຳເປັນ ເຊັ່ນວ່າ: ການຜັນຂະຫຍາຍ ແລະ ສົ່ງເສີມການຈັດຕັ້ງປະຕິບັດທີ່ດີເດັ່ນ ຫຼື ປະສົບຜົນສຳເລັດ; ແລະ ແກ້ບັນຫາ, ຂໍ້ຂັດແຍ່ງ ທີ່ອາດເກີດຂຶ້ນ.

**ຮູບແບບອຳນວຍຄວາມສະດວກ** : ຜູ້ອຳນວຍຄວາມສະດວກໃຫ້ການຊ່ວຍເຫຼືອ[11], ອຳນວຍຄວາມສະດວກ ແລະ ສ້າງເງື່ອນໄຂທີ່ເອື້ອອຳນວຍສຳລັບ ການພັດທະນາທຸລະກິດ, ການຜະລິດ, ເຊື່ອມໂຍງການຜະລິດ ແລະ ຕະຫຼາດ ແລະ ສ້າງສາຍສຳພັນລະຫວ່າງ ຜູ້ລົງທຶນ, ຊາວກະສິກອນ ແລະ ພາກສ່ວນທີ່ກ່ຽວຂ້ອງ. ແລະ ຜູ້ອຳນວຍຄວາມສະດວກໄດ້ມີສ່ວນຮ່ວມໃນທຸລະກິດຕາມຄວາມຮຽກຮ້ອງຕ້ອງການຂອງຜູ້ລົງທຶນ, ຊາວກະສິກອນ ລວມທັງພາກສ່ວນທີ່ກ່ຽວຂ້ອງອື່ນໆ.

**ຕາຕະລາງ 5:** ຮູບແບບ, ທາງເລືອກ ແລະ ຄວາມໝາຍ ຂອງແຕ່ລະບົດບາດ, ຈຸດຢືນຂອງຜູ້ອຳນວຍຄວາມສະດວກ




[11] ທາງດ້ານວິຊາການ, ນະໂຍບາຍ ແລະ ການແນະນຳອື່ນໆ.

ຊາວກະສິກອນ

ຜູ້ລົງທຶນ

ຜູ້ອຳນວຍຄວາມ
ສະດວກ



| |
|---|
| **ກອບຮູບທີ 2: ຜູ້ອຳນວຍຄວາມສະດວກ (ຄວາມສ່ຽງ ແລະ ຄວາມໜ້າເຊື່ອຖື)**<br>**ການຈັດຕັ້ງປະຕິບັດໜ້າທີ່ທີ່ບໍ່ດີ:**<br>ການໃຫ້ການບໍລິການ ແລະ ຄຳປຶກສາທີ່ມີຄຸນນະພາບຕ່ຳ ຕໍ່ຊາວກະສິກອນ; ບໍ່ສາມາດປະຕິບັດຕາມສິ່ງທີ່ເວົ້າ ຫຼື ສັນຍາໄວ້; ລຳອຽງ ຫຼື ເລືອກສົ່ງເສີມຝ່າຍໃດຝ່າຍໜຶ່ງ; ເຫັນແກ່ຜົນປະໂຫຍດສ່ວນຕົວ ຫຼາຍກວ່າການສົ່ງເສີມລະບົບການກະສິກຳເປັນສິນຄ້າແບບມີສັນຍາ; ການປະຕິບັດໜ້າທີ່ບໍ່ໄດ້ຕາມຄວາມຄາດຫວັງຕ່າງໆ ເຫຼົ່ານີ້ ຈະເຮັດໃຫ້ເສຍ ບົດບາດ, ຊື່ສຽງ, ຄວາມເຊື່ອໝັ້ນ, ສັດທາ ແລະ ຄວາມນັບຖື ຈາກຜູ້ລົງທຶນ, ຊາວກະສິກອນ, ພາກສ່ວນທີ່ກ່ຽວຂ້ອງ. ໃນທີ່ສຸດການມີສ່ວນຮ່ວມຂອງຜູ້ອຳນວຍຄວາມສະດວກອາດຖືກຈຳກັດ ຫຼື ບໍ່ໄດ້ຮັບການຕ້ອນຮັບ ຫຼື ມີການບັງຄັບເພື່ອມີສ່ວນຮ່ວມ.<br>**ການຈັດຕັ້ງປະຕິບັດໜ້າທີ່ທີ່ດີ:**<br>ຖ້າຜູ້ລົງທຶນ ແລະ ຊາວກະສິກອນໄດ້ຮັບການຊ່ວຍເຫຼືອ, ການເອື້ອອຳນວຍ ແລະ ຄຳປຶກສາ ລວມທັງ ປະສົບການທີ່ດີອື່ນໆ ຈາກ ຜູ້ອຳນວຍຄວາມສະດວກ; ເຂົາເຈົ້າ, ພາກສ່ວນທີ່ກ່ຽວຂ້ອງກໍ່ຈະມີຄວາມເຊື່ອໝັ້ນ, ສັດທາ ແລະ ຄວາມນັບຖື ແລະ ໃນທີ່ສຸດ ຜູ້ອຳນວຍຄວາມສະດວກ ຈະຖືກຕ້ອນຮັບການ ແລະ ເພີ່ມການມີສ່ວນຮ່ວມ ແລະ ຍົກສູງບົດບາດຂອງຜູ້ອຳນວຍຄວາມສະດວກຂື້ນ. |

## 3.3 ຂະບວນການ ການຜະລິດກະສິກຳເປັນສິນຄ້າແບບມີສັນຍາ ແລະ ການອຳນວຍຄວາມສະດວກໃນແຕ່ລະຂັ້ນຕອນ

ຂະບວນການ ຫຼື ວົງຈອນ ການຈັດຕັ້ງປະຕິບັດການຜະລິດກະສິກຳເປັນສິນຄ້າແບບມີສັນຍາເປັນບ່ອນອີງທີ່ສຳຄັນສຳລັບພະນັກງານສົ່ງເສີມ ຫຼື ຜູ້ອຳນວຍຄວາມສະດວກເພື່ອທີ່ຈະຊຸກຍູ້ການຜະລິດແບບມີສັນຍາຢ່າງສະເໝີພາບ ແລະ ປະຕິບັດສັນຍາຢ່າງຍຸດຕິທຳ. ເຖິງແມ່ນວ່າ ຂະບວນການ ຫຼື ຂັ້ນຕອນການຜະລິດເປັນສິນຄ້າແບບມີສັນຍາສາມາດມີຄວາມແຕກຕ່າງກັນໄປຕາມແຕ່ລະກໍລະນີ ແລະ ພື້ນທີ່; ລະຫວ່າງຜູ້ລົງທຶນໃໝ່, ຜູ້ທີ່ໄດ້ຮັບການອະນຸມັດການລົງທຶນ ແລະ ກຳລັງດຳເນີນການຢູ່ ແລະ ພໍ່ຄ້າ; ຂະບວນທີ່ສຳຄັນ ລວມທັງຂໍ້ແນະນຳກ່ຽວກັບ ບົດບາດຂອງຜູ້ອຳນວຍຄວາມສະດວກ, ວິທີການ ແລະ ເຕັກນິກ ການອຳນວຍຄວາມສະດວກ ສາມາດແບ່ງອອກເປັນ 10 ຂັ້ນຕອນ ດັ່ງທີ່ສະແດງໃນ ຮູບທີ 5 ຂ້າງລຸ່ມນີ້.

**ຮູບທີ 5:** ຂະບວນການຜະລິດກະສິກຳເປັນສິນຄ້າແບບມີສັນຍາ




### 3.3.1 ຂັ້ນຕອນທີ 1: ການສະເໜີ ແລະ ຂໍອະນຸມັດການລົງທຶນ

ເປັນຂັ້ນຕອນທຳອິດທີ່ນັກລົງທຶນ ພາຍໃນ ແລະ ຕ່າງປະເທດ ໂດຍສະເພາະຜູ້ຂໍສະເໜີການລົງທຶນໃໝ່ ຊຶ່ງຕາມຫຼັກການແລ້ວຈະສະເໜີຂໍອະນຸມັດດ້ານການລົງທຶນກັບຂະແໜງການທີ່ກ່ຽວຂ້ອງ[12] ກ່ອນເຮັດສັນຍາ ການຜະລິດ ແລະ ເກັບຊື້ກັບຊາວກະສິກອນ. ສຳລັບຜູ້ລົງທຶນ[13]ທີ່ໄດ້ຮັບອະນຸມັດ ແລະ ກຳລັງດຳເນີນການຢູ່ລວມທັງ ພໍ່ຄ້າ[14] ທົ່ວໄປແລ້ວແມ່ນ ບໍ່ໄດ້ຈັດຕັ້ງປະຕິບັດຂັ້ນຕອນນີ້. ແນວໃດກໍ່ຕາມ, ໃນຂັ້ນຕອນນີ້ ບົດບາດຂອງຜູ້ອຳນວຍຄວາມສະດວກໂດຍລວມແລ້ວແມ່ນ ໃຫ້ຄຳເຫັນ, ຄຳແນະນຳ ຕໍ່ ບົດສະເໜີການລົງທຶນແລະ ສົ່ງໃຫ້ແໜງການທີ່ຮັບຜິດຊອບ.

### ການກວດສອບຜູ້ລົງທຶນທີ່ດີ

ຜູ້ລົງທຶນທີ່ດີ[15] ແລະ ມີຄວາມຮັບຜິດຊອບເປັນກຸນແຈຂອງຄວາມສຳເລັດ; ເຖິງແນວໃດກໍ່ຕາມ, ສິ່ງທີ່ຖ້າທາຍກໍ່ຄື ເຮົາຈະຮູ້ ຫຼື ວັດແທກ ປະເດັນທີ່ກ່າວມາໄດ້ແນວໃດ; ແບບຟອມຄຳຖາມກວດສອບຂ້າງລຸ່ມ ຖືກພັດທະນາຂຶ້ນ ຊຶ່ງຄາດວ່າຈະເປັນເຄື່ອງມືທີ່ສາມາດຊ່ວຍໃນການກວດສອບຜູ້ລົງທຶນທີ່ດີ. ແບບກວດສອບນີ້ປະກອບດ້ວຍບັນດາຄຳ

---

[12] ພະແນກ/ຫ້ອງການ ແຜນການ ແລະ ການລົງທຶນ (P/DPI) ກະສິກຳ ແລະ ປ່າໄມ້ (P/DAFO), ອຸດສາຫະກຳ ແລະ ການຄ້າ (P/DIC), ຫ້ອງວ່າການ(P/DAO)ໃນລະດັບແຂວງ ແລະ ເມືອງ.

[13] ຜູ້ລົງທຶນທີ່ໄດ້ຮັບອະນຸມັດ ແລະ ກຳລັງດຳເນີນການຢູ່ບໍລິກະຕິແລ້ວແມ່ນຈະປະຕິບັດໃນຂັ້ນຕອນທີ 5,6: ການເຮັດສັນຍາ ເພາະວ່າ ສ່ວນຫຼາຍແມ່ນ ຈະທົບທວນ ຜູ້ລົງທຶນ ແລະ ຊາວກະສິກອນ ແລະ ເຊັນສັນຍາປະຈຳປີ ເຖິງແມ່ນວ່າ ບາງກໍລະນີຈະເປັນການລົງທຶນໃນໄລຍະຍາວກໍ່ຕາມ.

[14] ເຊັ່ນດຽວກັນກັບພໍ່ຄ້າ ສ່ວນໃຫຍ່ແມ່ນເລີ່ມແຕ່ຂັ້ນຕອນ 5 ຂຶ້ນໄປ

[15]

ຖາມ ທີ່ຊ່ວຍປະເມີນ ຜູ້ລົງທຶນ ໂດຍ ການເກັບ ແລະ ວິໃຈຂໍ້ມູນ ສ່ວນຕົວ, ປະຫັວດຂອງທຸລະກິດການລົງທຶນ, ສະພາບການເງິນ, ຄວາມຈິງໃຈ ແລະ ຄວາມສາມາດອື່ນໆ. ຜູ້ອຳນວຍຄວາມສະດວກ ສາມາດນຳໃຊ້ແບບຟອມທົດສອບນີ້ ເພື່ອກວດສອບຜູ້ລົງທຶນ ໃນຂັ້ນຕອນ ການພົບປະ ແລະ ແລກປ່ຽນໃນເບື້ອງຕົ້ນ. ນອກນັ້ນ, ຊາວກະສິກອນ ກໍ່ສາມາດນຳໃຊ້ແບບກວດສອບນີ້ ເພື່ອປະເມີນຜູ້ລົງທຶນ, ພໍ່ຄ້າກ່ອນຈະເຮັດສັນຍາການຜະລິດກະສິກຳໃຫ້ຜູ້ລົງທຶນ,ພໍ່ຄ້າ.

**ຕາຕະລາງ 6:** ແບບກວດສອບນັກລົງທຶນ

| ລດ | ເນື້ອໃນການກວດສອບ | ຄຳຕອບ | | | ອະທິບາຍເພີ່ມ, ຄຳແນະນຳ |
|---|---|---|---|---|---|
| | | ແມ່ນ/ມີ | ບໍ່ແມ່ນ/ມີ | ບໍ່ແນ່ໃຈ | |
| | **ຂໍ້ມູນສ່ວນຕົວ** | | | | |
| 1 | ເຮົາຮູ້ ຊື່, ສັນຊາດ ແລະ ທີ່ຢູ່ຂອງນັກລົງທຶນ ແລະ ທຸລະກິດລາວບໍ? | ☐ | ☐ | ☐ | |
| 2 | ພວກເຮົາຮູ້ນັກລົງທຶນ ແລະ/ຫຼື ຕົວແທນຂອງນັກລົງທຶນດີ? | ☐ | ☐ | ☐ | |
| 3 | ນັກລົງທຶນ ຫຼື ບໍລິສັດມີຊື່ສຽງ ແລະ ຄວາມໜ້າເຊື່ອຖືບໍ? | ☐ | ☐ | ☐ | |
| | **ປະຫວັດທຸລະກິດ** | | | | |
| 4 | ຜູ້ລົງທຶນໄດ້ລົງທຶນໃນເຂດອື່ນອີກບໍ? | ☐ | ☐ | ☐ | |
| 5 | ເປັນທຸລະກິດທີ່ດີ/ປະສົບຜົນສຳເລັດ/ມີຊື່ສຽງ ແລະ ຫຼາຍຄົນແນະ ນຳບໍ? | | | | |
| | **ການລົງທຶນທີ່ນຳສະເໜີ ແລະ ຄວາມພ້ອມ** | | | | |
| 6 | ຜູ້ລົງທຶນສະເໜີຮູບແບບ, ນະໂຍບາຍການລົງທຶນທີ່ໜ້າສົນໃຈບໍ? | ☐ | ☐ | ☐ | |
| 7 | ລາວມີ ຫຼື ຈະມີຄວາມພ້ອມທີ່ຈະວາງເງິນຄ້ຳປະກັນບໍ? | ☐ | ☐ | ☐ | |
| 8 | ລາວມີ ຫຼື ຈະມີວິຊາການ ແລະ ປະສົບການທີ່ພຽງພໍບໍ? | ☐ | ☐ | ☐ | |
| 9 | ລາວມີໃບຢັ້ງຢືນການດຳເນີນທຸລະກິດ? | ☐ | ☐ | ☐ | |
| 10 | ຜະລິດຕະພັນທີ່ສະເໜີມີຕະຫຼາດຮອງຮັບທີ່ໜ້າເຊື່ອຖືບໍ? | ☐ | ☐ | ☐ | |

### 3.3.2 ຂັ້ນຕອນທີ 2: ການພົບປະເບື້ອງຕົ້ນ ແລະ ການກຳນົດກອບຄວາມຄິດ

ການພົບປະເບື້ອງຕົ້ນລະຫວ່າງນັກລົງທຶນ, ພໍ່ຄ້າ ແລະ ຊາວກະສິກອນ ແລະ ການກຳນົດກອບຄວາມຄິດແມ່ນບາດກ້າວໜຶ່ງ ທີ່ໄດ້ປະຕິບັດ ພາຍຫຼັງທີ່ການຂໍອະນຸ ມັດດ້ານການລົງທຶນໄດ້ຖືກຮັບຮອງ ໂດຍຂະແໜງການທີ່ກ່ຽວຂ້ອງຂອງລັດ ແລ້ວ. ການພົບປະ ແລະ ແລກປ່ຽນ ເກີດຂຶ້ນທາງກົງ ແລະ ທາງອ້ອມ. ທາງກົງ; ນັກລົງທຶນພາຍໃນ ແລະ ຕ່າງປະເທດ, ພໍ່ຄ້າໄດ້ມີການພົບປະ, ແລກປ່ຽນ ແລະ ເກັບກຳຂໍ້ມູນເບື້ອງຕົ້ນໂດຍກົງກັບຊາວກະສິກອນ. ທາງອ້ອມ; ຜູ້ລົງທຶນໄດ້ເກັບກຳຂໍ້ມູນຜ່ານອົງການຈັດຕັ້ງຂອງລັດ, ເອກະຊົນ ລວມທັງອົງການຈັດຕັ້ງທີ່ສົ່ງເສີມການຜະລິດເປັນສິນຄ້າ ຕ່າງໆ. ບາດກ້າວນີ້ແມ່ນການທາບທາມ ແລະ ເກັບກຳຂໍ້ມູນກ່ຽວກັບຄວາມເປັນໄປໄດ້ ແລະ ກຳນົດກອບແນວຄວາມຄິດ ຂອງ ທຸລະກິດ ໃນເບື້ອງຕົ້ນ.

> **ກອບຮູບທີ 3: ບົດບາດຂອງຜູ້ອຳນວຍຄວາມສະດວກ**
>
> " ໃຫ້ຂໍ້ມູນທີ່ຊັດເຈນກ່ຽວກັບພື້ນທີ່ ແລະ ບ້ານທີ່ມີທ່າແຮງ ແລະ ນະໂຍບາຍຂອງລັດຖະບານ"
>
> "ໃຫ້ຄຳເຫັນ, ຂໍ້ແນະນຳສຳລັບການກຳນົດກອບແນວຄວາມຄິດທຸລະກິດ"

### 3.3.3 ຂັ້ນຕອນທີ 3: ກຳນົດພື້ນທີ່ການຜະລິດ ແລະ ຊາວກະສິກອນ ເບື້ອງຕົ້ນ

ການກຳນົດພື້ນທີ່ທຳການຜະລິດ ແລະ ຊາວກະສິກອນ ໄດ້ປະຕິບັດ ພາຍຫຼັງທີ່ການປຶກສາຫາລືໃນເບື້ອງຕົ້ນມີທ່າບວກ ແລະ ກອບແນວຄວາມຄິດໄດ້ຮັບການພັດທະນາ. ສຳລັບ ໂຄງການລົງທຶນ ໂດຍສະເພາະໂຄງການຂະໜາດໃຫຍ່, ພື້ນທີ່ ແລະ ຊຸມຊົນເປົ້າ ໝາຍແມ່ນໄດ້ຮັບການຄັດເລືອກໃນບາດກ້າວ 1 ຫຼື ໃນຊ່ວງບາດກ້າວ 2. ແນວໃດກໍ່ຕາມ, ໃນຊ່ວງນີ້ ຂໍ້ມູນທີ່ຕິດພັນກັບຄວາມເໝາະສົມ ຂອງພື້ນທີ່ ແລະ ຊາວກະສິກອນ ຈະຖືກເກັບກຳໂດຍນັກລົງທຶນ, ພໍ່ຄ້າ ທາງກົງ ຫຼື ທາງອ້ອມ. ໃນທາງອ້ອມ ນັກລົງທຶນ, ພໍ່ຄ້າໄດ້ຮັບ ຂໍ້ມູນຈາກອົງການຈັດຕັ້ງຂອງລັດ, ຫຼື ນັກລົງທຶນ ຫຼື ພໍ່ຄ້າພາຍໃນ. ບາງຄັ້ງນັກລົງທຶນ ແລະ ພໍ່ຄ້າໄດ້ລົງພື້ນທີ່ເພື່ອເກັບກຳຂໍ້ມູນໂດຍກົງກັບ ຊາວກະສິກອນ. ຂໍ້ມູນທີ່ຕ້ອງການບົ່ງກະຕິລວມມີ ປະເພດ, ຂະໜາດ ຂອງພື້ນທີ່, ຄວາມເໝາະສົມຂອງພື້ນທີ່, ສະພາບພູມິອາກາດ, ຊະນິດພືດທີ່ປູກໃນເຂດດັ່ງກ່າວ, ອົງການ ຈັດຕັ້ງ ທີ່ກ່ຽວຂ້ອງ ແລະ ຊາວກະສິກອນ ລວມທັງຄວາມສົນໃຈ, ແຮງງານ, ສິ່ງອຳນວຍຄວາມສະດວກ, ໂຄງລ່າງ ພື້ນຖານ, ຄວາມສ່ຽງ ແລະ ຄ່າໃຊ້ຈ່າຍອື່ນໆທີ່ອາດເກີດຂຶ້ນ ລວມທັງ ແຜນການ ພັດທະນາໃນເຂດດັ່ງກ່າວ.

#### ກວດກາຄວາມພ້ອມຂອງ ຊາວກະສິກອນ

ເຊັ່ນດຽວກັນກັບການກວດສອບຜູ້ລົງທຶນ; ຄວາມພ້ອມຂອງຊາວກະສິກອນ ກໍ່ແມ່ນຕົວຊີ້ບອກໜຶ່ງຂອງຄວາມສຳເລັດ. ຕາຕະລາງ 10 ຂ້າງລຸ່ມນີ້ ເປັນ ບັນຊີກວດສອບຄວາມພ້ອມຂອງຊາວກະສິກອນ. ຜູ້ອຳນວຍຄວາມສະດວກອາດຊ່ວຍຊາວກະສິກອນອາດນຳໃຊ້ບັນດາຄຳຖາມເຫຼົ່ານີ້ ເພື່ອກວດສອບຄວາມພ້ອມຂອງຕົນເອງ. ແບບຟອມຄຳຖາມກວດສອບນີ້ ແມ່ນເຄື່ອງມືກວດສອບເບື້ອງຕົ້ນ, ສາມາດເລືອກປະຕິບັດໄດ້ ແລະ ມັນມີຄວາມຈຳເປັນທີ່ຕ້ອງໄດ້ພິຈາລະນາຫຼາຍຢ່າງເພີ່ມເຕີມ; ແລະ ບໍ່ໄດ້ໝາຍວ່າຊາວກະສິກອນຜູ້ທີ່ບໍ່ໄດ້ຕາມເງື່ອນໄຂເຫຼົ່ານີ້ ຈະບໍ່ສາມາດເຂົ້າຮ່ວມ ການຜະລິດກະສິກຳເປັນສິນຄ້າແບບມີສັນຍາ. ແຕ່ເຄື່ອງມືນີ້ນຳໃຊ້ເພື່ອຮຽນຮູ້ ແລະ ວາງແຜນໃນການແກ້

ໄຂຄວາມສ່ຽງ ຫຼື ຄວາມບໍ່ພ້ອມພຽງບາງຢ່າງ ໂດຍສະເພາະ ຜູ້ທີ່ທຸກຈົນ ອາດຈໍາເປັນຕ້ອງໄດ້ຮັບການສ້າງຄວາມອາດສາມາດ ແລະ ຄວາມພ້ອມທາງດ້ານອື່ນຈໍານວນໜຶ່ງ.

**ຕາຕະລາງ 7:** ແບບກວດສອບ ແລະ ປະເມີນຄວາມພ້ອມຂອງຊາວກະສິກອນ

| ລດ | ເນື້ອໃນການກວດສອບ | ຄໍາຕອບ | | | ອະທິບາຍເພີ່ມ, ຄໍາແນະນໍາ |
|---|---|---|---|---|---|
| | | ແມ່ນ/ມີ | ບໍ່ແມ່ນ/ມີ | ບໍ່ແນ່ໃຈ | |
| 1 | ຜົນຜະລິດທີ່ຜູ້ລົງທຶນສະເໜີເໝາະສົມທີ່ຈະປູກໃນດິນຂອງເຮົາບໍ, ໃນສະພາບອາກາດໃນທ້ອງຖິ່ນ? | ☐ | ☐ | ☐ | |
| 2 | ຮູບແບບການລົງທຶນທີ່ສະເໜີໜ້າສົນໃຈບໍ? | ☐ | ☐ | ☐ | |
| 3 | ເຮົາມີທີ່ດິນພຽງພໍທີ່ຈະປູກບໍ? | ☐ | ☐ | ☐ | |
| 4 | ເຮົາມີປະສົບການ ແລະ ຄຸ້ນເຄີຍກັບການປູກພືດປະເພດນີ້ບໍ? | ☐ | ☐ | ☐ | |
| 5 | ເຮົາຄິດວ່າເຮົາມີແຮງງານພຽງພໍບໍ? | ☐ | ☐ | ☐ | |
| 6 | ມີເວລາພຽງພໍບໍ? | ☐ | ☐ | ☐ | |
| 7 | ເຮົາມີທຶນທີ່ຈະລົງທຶນ ຫຼື ສາມາດກູ້ຢືມນໍາຜູ້ລົງທຶນໄດ້ບໍ? | ☐ | ☐ | ☐ | |
| 8 | ທຸລະກິດນີ້ບໍ່ມີຜົນກະທົບຕໍ່ຄອບຄົວ ແລະ ແຮງງານບໍ? | ☐ | ☐ | ☐ | |
| 9 | ຄິດໄລ່ແລ້ວມີລາຍຮັບ, ຜົນປະໂຫຍດ, ຜົນຕອບແທນສູງກວ່າທຸລະກິດອື່ນ ຫຼື ໜ້າສົນໃຈບໍ? | ☐ | ☐ | ☐ | |
| 10 | ມັນມີຜົນກະທົບຕໍ່ລະບົບການຜະລິດ ຫຼື ກິດຈະກໍາສ້າງລາຍຮັບ ຫຼື ທຸລະກິດອື່ນບໍ່ອື່ນບໍ? | ☐ | ☐ | ☐ | |

### 3.3.4 ຂັ້ນຕອນທີ 4: ປະເມີນຄວາມເປັນໄປໄດ້

ການປະເມີນຄວາມເປັນໄປໄດ້ ປົກກະຕິແລ້ວ ແມ່ນຈັດຕັ້ງປະຕິບັດ ແບບໄວວາ ໂດຍອີງໃສ່ ບັນດາ ຂໍ້ມູນ ທີ່ໄດ້ມາຂ້າງເທິງນັ້ນ. ແລະ ປົກກະຕິການປະເມີນຄວາມເປັນໄປໄດ້ແມ່ນເວົ້າໃສ່ຂົງເຂດທີ່ສໍາຄັນດັ່ງລຸ່ມນີ້:

- ພື້ນທີ່ ແລະ ຄວາມເໝາະສົມຂອງພື້ນທີ່
- ພືດທີ່ສາມາດປູກໄດ້ ແລະ ລາຄາ
- ຈໍານວນ ແລະ ຄ່າແຮງງານ, ຄວາມສົນໃຈຂອງ ຊາວກະສິກອນ
- ໂຄງລ່າງພື້ນຖານ ແລະ ສິ່ງອໍານວຍຄວາມສະດວກ
- ເທັກໂນໂລຊີ /ເຕັກນິກ ລວມທັງຄວາມຮູ້ ແລະ ພູມປັນຍາທ້ອງຖິ່ນ, ຄວາມອາດສາມາດ ແລະ ຄວາມພ້ອມອື່ນໆ
- ອົງການຈັດຕັ້ງທີ່ກ່ຽວຂ້ອງ ອົງການຈັດຕັ້ງທີ່ກ່ຽວຂ້ອງ ແລະ ຕົວແທນທີ່ມີຄວາມເປັນໄປໄດ້
- ນະໂຍບາຍທີ່ກ່ຽວຂ້ອງ

ການປະເມີນຄວາມເປັນໄປຄວາມເປັນໄປໄດ້ນີ້ແມ່ນສ່ວນໜຶ່ງ ທີ່ມີລັກສະນະຕັດສິນຂອງການສຶກສາຄວາມເປັນໄປໂດຍລວມຂອງການລົງທຶນ ຫຼື ການຄ້າ.

## ການກວດກາ ແລະ ທົບທວນຄວາມເປັນໄປໄດ້

ການກວດສອບ ແລະ ທົບທວນຄວາມເປັນໄປໄດ້ນີ້ແມ່ນເພື່ອຫຼີກລ່ຽງຄວາມຫຼົ້ມເຫຼວທີ່ອາດຈະເກີດຂຶ້ນ ແລະ ກະກຽມ, ວິທີການ ແລະ ມາດຕະການໃນການໃນການຫຼຸດຜ່ອນ ແລະ ແກ້ໄຂລ່ວງໜ້າ. ແນວໃດກໍ່ຕາມ, ບົດແນະນຳບໍ່ໄດ້ກວມເອົາວິທີການກວດສອບຄວາມເປັນໄປໄດ້ ແຕ່ເປັນການໃຫ້ຂໍ້ມູນຈຸດທີ່ສຳຄັນທີ່ພາກສ່ວນຄວນຄຳນຶງເຖິງເມື່ອກວດສອບເບິ່ງຄວາມເປັນໄປໄດ້ ດັ່ງທີ່ອະທິບາຍໃນຕາຕະລາງ 8 ຂ້າງລຸ່ມນີ້.

**ຕາຕະລາງ 8:** ຂົງເຂດທີ່ສຳຄັນທີ່ຈຳເປັນທີ່ຕ້ອງໄດ້ມີການປະເມີນ ຄວາມເປັນໄປໄດ້

| **ຂົງເຂດ ແລະ ຂໍ້ມູນສຳລັບການກວດກາຄວາມເປັນໄປໄດ້** |
|---|
| 1) **ຕະຫຼາດ**<br>- ສະຖານທີ່, ປະເພດ, ຂະໜາດຕະຫຼາດ ລວມທັງ ຄວາມຕ້ອງການ, ລາຄາ ຫຼື ຄາດຄະເນ ປະລິມານ, ຄຸນນະພາບ ແລະ ລາຄາ ທີ່ຈະຂາຍ? |
| 2) **ການຄຸ້ມຄອງ ແລະ ບໍລິຫານ**<br>- ແຜນໂຄງຮ່າງການຈັດຕັ້ງ, ປະລິມານ, ຄຸນນະພາບ ແລະ ຈຳນວນພະນັກງານ ລວມທັງ , ຄວາມຮັບຜິດຊອບ ລວມທັງ ພະນັກງານທີ່ປະຈຳສະຖານທີ່. |
| 3) **ດ້ານເສດຖະກິດ**<br>- ຜົນກຳໄລ ລວມທັງຜົນກຳໄລສຸດທິທາງເສດຖະກິດທີ່ວາງແຜນ ຫຼື ຄາດໄວ້. |
| 4) **ດ້ານການຄ້າ**<br>- ປະລິມານ ແລະ ຄຸນນະພາບຂອງ ຜະລິດຕະພັນທີ່ວາງແຜນ ຫຼື ຄາດໄວ້ , ແຮງງານ, ໂຄງລ່າງພື້ນຖານ , ການຂົນສົ່ງ , ປັດໃຈການຜະລິດທີ່ນຳເຂົ້າ ແລະ ການສົ່ງອອກ ຜະລິດຕະພັນ |
| 5) **ທຶນ ແລະ ການເງິນ**<br>- ງົບປະມານໃນການລົງທຶນທີ່ວາງແຜນ ຫຼື ກຳນົດໄວ້ , ແຜນການທາງດ້ານການເງິນ, ການຄາດຄະເນ ແລະ ການໄຫຼວຽນທາງດ້ານການເງິນ ລວມທັງ ແຫຼ່ງທຶນ |
| 6) **ເທັກໂນໂລຊີ ແລະ ເຕັກນິກ**<br>- ຮູບແບບ ຫຼື ວິທີການປູກ , ການຜະລິດ ຂະບວນການ , ການສ້າງຄວາມອາດສາມາດໃຫ້ພະນັກງານ , ເຕັກນິກ , ເທັກໂນໂລຊີ, ກົນຈັກ, ອຸປະກອນ ແລະ ປັດໃຈການຜະລິດ ອື່ນໆ ລວມທັງພູມປັນຍາທ້ອງຖິ່ນ |
| 7) **ສິ່ງແວດລ້ອມ**<br>- ການຄາດຄະເນຜົນກະທົບ ແລະ ມາດຕະການໃນການຫຼຸດຜ່ອນ ແລະ ແກ້ໄຂຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ ຊຶ່ງອາດເກີດຈາກ ການນຳໃຊ້ເຄມີ ລວມທັງປຸຍເຄມີ, ຢາປາບສັດຕູພືດ ແລະ ແມງໄມ້ ລວມທັງຄ່າໃຊ້ຈ່າຍອື່ນໆທີ່ກ່ຽວຂ້ອງກັບການຄຸ້ມຄອງ, ຟື້ນຟູສະພາບສິ່ງແວດລ້ອມ |
| 8) **ສັງຄົມ**<br>- ບັນຫາກ່ຽວກັບສັງຄົມ ແລະ ຜົນກຳໄລ ລວມທັງ ມາດຕະການໃນການຫຼຸດຜ່ອນ ແລະ ແກ້ໄຂບັນຫາ, ຄວາມສ່ຽງທີ່ອາດຈະເກີດຂຶ້ນ |

### 3.3.5 ຂັ້ນຕອນທີ 5: ການຕັດສິນໃຈກ່ຽວກັບພື້ນທີ່ ແລະ ຊາວກະສິກອນ

ການຕັດສິນໃຈກ່ຽວກັບພື້ນທີ່ ແລະ ຊາວກະສິກອນທີ່ຈະເຂົ້າຮ່ວມການຜະລິດກະສິກຳເປັນສິນຄ້າແບບມີສັນຍາແມ່ນອີງໃສ່ການປະເມີນຄວາມເປັນໄປໄດ້ ທີ່ກ່າວມາ. ເມື່ອເຫັນວ່າມີຄວາມເປັນໄປໄດ້; ພື້ນທີ່ເປົ້າ

ໝາຍ, ຈຳນວນບ້ານ ແລະ ຊາວກະສິກອນ ຈະຖືກລະບຸໄວ້ ເພື່ອທາບທາມສຸດທ້າຍ ແລະ ຢັ້ງຢືນການເຂົ້າຮ່ວມການຜະລິດກະສິກຳເປັນສິນຄ້າແບບມີສັນຍາ.

**ກອບຮູບທີ່ 4: ບົດບາດຂອງຜູ້ອຳນວຍຄວາມສະດວກ**
ພາຍຫຼັງທີ່ໃຫ້ຂໍ້ມູນກ່ຽວກັບພື້ນທີ່, ບ້ານທີ່ມີທ່າແຮງ, ນະໂຍບາຍຂອງລັດຖະບານ ລວມທັງ ຄຳເຫັນ, ຂໍ້ແນະນຳດັ່ງທີ່ກ່າວມາແລ້ວ; ການຕັດສິນໃຈ ແມ່ນກ່ຽວກັບຊາວກະສິກອນ ແລະ ພື້ນທີ່ແມ່ນໜ້າທີ່ຂອງຜູ້ລົງທຶນ. ແຕ່ມັນມີຄວາມຈຳເປັນສຳລັບຜູ້ອຳນວຍຄວາມສະດວກທີ່ອາດຈະຕ້ອງໄດ້ລົງກວດກາ ແລະ ເກັບຂໍ້ມູນຄືນວ່າ ພື້ນ ແລະ ຊາວກະສິກອນທີ່ທີ່ຄັດເລືອກແມ່ນຢູ່ໃສ, ມີຄວາມເໝາະສົມ ແລະ ເອກະພາບກັບຊາວກະສິກອນແນວໃດ ລວມທັງທັດສະນະຂອງຊາວກະສິກອນ, ການຈັດຕັ້ງການຜະລິດ ແລະ ຂໍ້ມູນ, ບັນຫາອື່ນໆ ທີ່ອາດຈຳເປັນຕ້ອງໄດ້ເອົາເຂົ້າໃນແຜນການຕິດຕາມກວດກາ.

### 3.3.6 ຂັ້ນຕອນທີ 6: ການພັດທະນາສັນຍາ

ສັນຍາແມ່ນໝາກຫົວໃຈຫຼັກຂອງການຜະລິດກະສິກຳເປັນສິນຄ້າແບບມີສັນຍາ. ສະນັ້ນ, ສັນຍາທີ່ມີຄວາມຍຸດຕິທຳພຽງພໍ, ເປັນທີ່ຍອມຮັບ ແລະ ມີຄວາມເປັນໄປໄດ້ທີ່ຈະຈັດຕັ້ງປະຕິບັດ ໂດຍຜູ້ລົງທຶນ ແລະ ຊາວກະສິກອນ. ເຖິງແມ່ນວ່າ ສັນຍາສ່ວນໃຫຍ່ແມ່ນຮ່າງໂດຍຜູ້ລົງທຶນ; ຊາວກະສິກອນ, ຜູ້ອຳນວຍຄວາມສະດວກ ແລະ ອົງການຈັດຕັ້ງທີ່ກ່ຽວຂ້ອງ ສາມາດຊຸກຍູ້ ໃຫ້ຄຳຄິດເຫັນ ຕໍ່ ຜູ້ລົງທຶນ ເພື່ອເອົາໃຈໃສ່ການພັດທະນາສັນຍາທີ່ມີຄວາມສົມບູນຄົບຖ້ວນ, ຈະແຈ້ງ, ຍຸດຕິທຳ ແລະ ມີສ່ວນຮ່ວມຂອງພາກສ່ວນທີ່ກ່ຽວຂ້ອງ ຫຼື ມີສ່ວນໄດ້ ສ່ວນເສຍ. ສັນຍາຄວນເຮັດເປັນພາສາທີ່ສາມາດອ່ານ ແລະ ເຂົ້າໃຈໄດ້ງ່າຍ ໂດຍຜູ້ລົງທຶນ ແລະ ຊາວກະສິກອນ. ນອກນັ້ນ, ອາດນຳສັນຍາທີ່ເປັນພາສາລາວເປັນບ່ອນອີງໃນການໄກ່ເກ່ຍ ຖ້າຫາກມີບັນຫາເກີດຂື້ນ.ເຖິງແມ່ນວ່າ ສັນຍາສາມາດເປັນໄປໄດ້ທັງສັນຍາທີ່ເປັນລາຍລັກອັກສອນ ຫຼື ປາກເປົ່າ. ປົກກະຕິແລ້ວ ຜູ້ລົງທຶນນຳໃຊ້ ສັນຍາທີ່ເປັນລາຍລັກອັກສອນ ແລະ ພໍ່ຄ້າສ່ວນໃຫຍ່ພົວພັນກັບຊາວກະສິກອນໂດຍນຳໃຊ້ສັນຍາແບບປາກເປົ່າ. ແນວໃດກໍ່ຕາມ, ສັນຍາຄວນເປັນສັນຍາທີ່ເປັນລາຍລັກອັກສອນຫຼາຍກວ່າປາກເປົ່າ.

ການພັດທະນາສັນຍາ ໂດຍສະເພາະແມ່ນສັນຍາທີ່ເປັນລາຍລັກອັກສອນ ປະກອບດ້ວຍ 4 ຂັ້ນຕອນຫຼັກໆ ດັ່ງນີ້:

1) ຮ່າງສັນຍາ,
2) ຂໍຄຳຄິດເຫັນ ແລະ ຂໍ້ແນະນຳຈາກພາກສ່ວນທີ່ກ່ຽວຂ້ອງ,
3) ເຈລະຈາຫາຂໍ້ຕົກລົງ ແລະ
4) ເຊັນສັນຍາຮັບຮອງ.

**ຮ່າງສັນຍາ:**

ເກືອບທຸກກໍລະນີທີ່ ສັນຍາ ຫຼື ຂໍ້ຕົກລົງໄດ້ລິເລີ່ມ ຫຼື ຮ່າງໂດຍ ນັກລົງທຶນ/ພໍ່ຄ້າ. ນັກລົງທຶນຈຳນວນໜຶ່ງວ່າຈ້າງຜູ້ຊ່ຳນານການສະເພາະເປັນຜູ້ຮ່າງສັນຍາໃຫ້ ແຕ່ກໍລະນີນີ້ແມ່ນຍັງມີໜ້ອຍ. ເນື້ອໃນຫຼັກຂອງສັນຍາທີ່ພົບເຫັນລວມມີ

ຮູບແບບຂອງການລົງທຶນ, ລາຄາ, ຄວາມຮັບຜິດຊອບ ຂອງ ນັກລົງທຶນ ແລະ ຊາວກະສິກອນ ລວມທັງ ອົງການຈັດຕັ້ງທີ່ກ່ຽວຂ້ອງ, ໄລຍະເວລາຂອງສັນຍາ, ເງື່ອນໄຂໃນການສະໜອງປັດໃຈການຜະລິດ, ວິທີການ ແລະ ມາດຕະການໃນການແກ້ໄຂບັນຫາໃນກໍລະນີທີ່ການຜະລິດ ແລະ ຜົນຜະລິດໄດ້ຮັບຄວາມເສຍຫາຍອັນເນື່ອງຈາກປັດໃຈທີ່ບໍ່ສາມາດຄວາມຄຸມໄດ້ ຫຼື ປະກົດການທຳມະຊາດເຊັ່ນວ່າ: ໄພທຳມະຊາດ; ໃນກໍລະນີລະເມີດ ຫຼື ບໍ່ປະຕິບັດຕາມສັນຍາ, ເງື່ອນໄຂການປ່ຽນແປງ ຫຼື ຍົກເລີກສັນຍາ ແລະ ຜົນສັກສິດຂອງສັນຍາ. ແນວໃດກໍ່ຕາມ ຕົວແບບ, ເນື້ອໃນ ແລະ ລາຍລະອຽດຂອງສັນຍາແມ່ນແຕກຕ່າງກັນໄປ ຕາມແຕ່ລະປະເພດທຸລະກິດ, ການເອກະພາບຂອງຜູ້ລົງທຶນ ແລະ ຊາວກະສິກອນ.

### ການປະກອບ ຄຳຄິດເຫັນ ແລະ ຂໍ້ແນະນຳ ຕໍ່ຮ່າງສັນຍາ

ພາຍຫຼັງທີ່ສັນຍາໄດ້ຮ່າງສຳເລັດແລ້ວ ຄວນສົ່ງໃຫ້ສົ່ງໄປຫາຂະແໜງການທີ່ກ່ຽວຂ້ອງ ແລະ ຊາວກະສິກອນເພື່ອປະກອບຄຳຄິດເຫັນ ລວມທັງປຶກສາຫາລື ກ່ອນຈະມີການລົງລາຍເຊັນຮັບຮອງ. ການປະກອບຄຳຄິດເຫັນ ແລະ ຂໍ້ແນະນຳຕໍ່ຮ່າງສັນຍາປະກອບມີສອງລະດັບ; ຂັ້ນເມືອງ ແລະ ບ້ານ.

ໃນຂັ້ນເມືອງ ຂະແໜງການຮັບຜິດຊອບ[16] ຫຼື ຜູ້ລົງທຶນ ຈະເປັນຜູ້ ສົ່ງຮ່າງສັນຍາຫາຂະແໜງການທີ່ກ່ຽວຂ້ອງອື່ນໆຂອງພາກລັດ ເພື່ອ ກວດກາ, ໃຫ້ຄຳຄິດເຫັນ ແລະ ຂໍ້ແນະນຳ. ພາຍຫຼັງທີ່ໄດ້ຮັບຄຳຄິດເຫັນ ແລະ ຂໍ້ແນະນຳຈາກຂະແໜງງານທີ່ກ່ຽວຂ້ອງ; ຂະແໜງການຮັບຜິດຊອບຈະເປັນຜູ້ສັງລວມ ແລະ ຈັດກອງປະຊຸມປຶກສາຫາ ກ່ຽວກັບບັນດາຄຳຄິດເຫັນ ແລະ ຂໍ້ແນະນຳ ແລະ ເອກະພາບກັບຂະແໜງການກ່ອນຈະສົ່ງບັນດາຄຳຄິດເຫັນ ແລະ ຂໍ້ແນະນຳກັບຄືນໃຫ້ຜູ້ລົງທຶນ, ຖ້າມີ. ຫຼື ຖ້າຫາກຮ່າງສັນຍານັ້ນ ສາມາດຮັບຮອງໄດ້ໃນຂັ້ນເມືອງ; ຮ່າງສັນຍາດັ່ງກ່າວຈະຖືກສົ່ງໄປບ້ານເພື່ອປຶກສາຫາລື ແລະ ຂໍຂໍ້ຄິດເຫັນໃນຂັ້ນບ້ານ.

ໃນຂັ້ນບ້ານ, ການປະກອບຄຳຄິດເຫັນ ແລະ ປຶກສາຫາລືຄວນມີກອງປະຊຸມປຶກສາຫາລືຂັ້ນບ້ານ ແລະ ຮ່ວມກັບບັນດາຂະແໜງການທີ່ກ່ຽວຂ້ອງ ລວມທັງຜູ້ລົງທຶນ ຫຼື ຕົວແທນຂອງຜູ້ລົງທຶນ ຫຼື ຂະແໜງການທີ່ກ່ຽວຂ້ອງ ແລະ ຊາວກະສິກອນ.

### ການກວດສອບ ແລະ ທົບທວນສັນຍາ

ເນື່ອງຈາກສັນຍາບໍ່ໄດ້ມີໂຄງສ້າງມາດຖານ ແຕ່ສັນຍາສ່ວນໃຫຍ່ກວມເອົາບັນດາເນື້ອໃນ ແລະ ອົງປະກອບສະເພາະ. ການກວດກາ ແລະ ທົບທວນຢ່າງລະອຽດຈຶ່ງຈຳເປັນ. ແນວໃດກໍ່ຕາມ, ໂດຍລວມແລ້ວການກວດກາ ແລະ ທົບທວນສັນຍາປະກອບດ້ວຍ 2 ລັກສະນະຄື: 1) ການກວດສອບເບິ່ງໂຄງສ້າງ, ເນື້ອໃນ ແລະ ອົງປະກອບຂອງສັນຍາ; 2) ກວດກາບັນດາລາຍລະອຽດຂອງສັນຍາ ລວມທັງ ພາສາ, ຄຳສັບ, ນິຍາມທີ່ນຳໃຊ້. ແນວໃດກໍ່ຕາມ, ແບບກວດສອບຂ້າງລຸ່ມນີ້ ເນັ້ນໃສ່ການກວດສອບເບິ່ງໂຄງສ້າງ, ເນື້ອໃນ ແລະ ອົງປະກອບຂອງສັນຍາ.

---

[16] ດັ່ງທີ່ກ່າວມາ ສ່ວນໃຫຍ່ຜູ້ລົງທຶນສົ່ງຮ່າງສັນຍາໃຫ້ DAFO ຫຼື ບາງຄັ້ງ ແຜນການ, ການຄ້າ, ຫ້ອງວ່າການ; ແລະ ຫ້ອງການເຫຼົ່ານີ້ຈະເປັນຜູ້ສົ່ງຕໍ່ເພື່ອຂໍຄຳເຫັນຈາກຂະແໜງການທີ່ກ່ຽວຂ້ອງອື່ນໆ

## ຕາຕະລາງ 9: ແບບກວດສອບສັນຍາ

| ລດ | ເນື້ອໃນການກວດສອບ | ຄຳຕອບ | | | ອະທິບາຍເພີ່ມ, ຄຳແນະນຳ |
|---|---|---|---|---|---|
| | | ແມ່ນ/ມີ | ບໍ່ແມ່ນ/ມີ | ບໍ່ແນ່ໃຈ | |
| 1 | ສັນຍາໄດ້ກຳນົດຈຸດປະສົງ ແລະ ກອບເວລາຈະແຈ້ງບໍ? | ☐ | ☐ | ☐ | |
| 2 | ໄດ້ລະບຸທີ່ຢູ່ ແລະ ຂໍ້ມູນສຳລັບການຕິດຕໍ່ພົວພັນລະອຽດບໍ? | ☐ | ☐ | ☐ | |
| 3 | ໄດ້ກຳນົດ ຫຼື ລະບຸໜ້າທີ ແລະ ຄວາມຮັບຜິດຊອບຂອງຜູ້ທີ່ມີຄວາມຮັບຜິດຊອບຂອງພາກສ່ວນທີ່ກ່ຽວຂ້ອງຈະແຈ້ງບໍ? | ☐ | ☐ | ☐ | |
| 4 | ຮູບແບບການລົງທຶນລະອຽດ, ປະລິມານ ແລະ ຄຸນນະພາບການຜະລິດ ແລະ ການເກັບຊື້ໄດ້ລະບຸຈະແຈ້ງບໍ? | ☐ | ☐ | ☐ | |
| 5 | ມາດຖານ ແລະ ຄຸນນະພາບຜະລິດຕະພັນ ລວມທັງລັກສະນະອື່ນທີ່ຈະຄັດແຍກໄດ້ລະບຸຈະແຈ້ງບໍ? | ☐ | ☐ | ☐ | |
| 6 | ຊະນິດພືດທີ່ຕ◌້ອງການລົງທຶນ/ປູກ, ສະຖານທີ່ປູກໄດ້ກຳນົດຈະແຈ້ງບໍ? | ☐ | ☐ | ☐ | |
| 7 | ລະບຸຂະບວນການ, ເຕັກນິກ ແລະ ແຜນການຜະລິດລະອຽດ ລວມທັງຄາດຄະເນຜົນຜະລິດ | ☐ | ☐ | ☐ | |
| 8 | ໄດ້ລະບຸຈຳນວນ, ມາດຖານ ແລະ ລາຄາຕໍ່ຫົວໜ່ວຍຜົນຜະລິດລະອຽດ, ຈະແຈ້ງບໍ? | ☐ | ☐ | ☐ | |
| 9 | ປະເພດລາຄາ (ຕາມເກດ/ມາດຖານ,ຄຸນນະພາບ, ຕະຫຼາດ ແລະ ແຕ່ລະໄລຍະ) ລວມທັງວິທີກຳນົດລາຄາໄດ້ລະບຸລະອຽດຈະແຈ້ງບໍ? | ☐ | ☐ | ☐ | |
| 10 | ສະຖານທີເກັບຊື້ ແລະ ຄວາມຮັບຜິດຊອງຂອງຂະແໜງການທີ່ກ່ຽວຂ້ອງໄດ້ກຳນົດລະອຽດ ຈະແຈ້ງບໍ? | ☐ | ☐ | ☐ | |
| 11 | ໄດ້ກຳນົດວິທີການ, ເງື່ອນໄຂ ແລະ ທາງເລືອກສຳລັບການປັບປຸງ ຫຼື ດັດປັບ ແລະ ສີ້ນສຸດສັນຍາບໍ? | ☐ | ☐ | ☐ | |
| 12 | ມີການກຳນົດວິທີການ ແລະ ທາງເລືອກສຳລັບການໄກ່ເກ◌່ຍ, ແກ້ໄຂຂໍ້ຂັດແຍ່ງ ແລະ ບັນຫາບໍ? | ☐ | ☐ | ☐ | |
| 13 | ກຳນົດປັດໃຈການຜະລິດ ແລະ ເງື່ອນໄຂຂອງການສະໜອງ: ປຸຍ, ຢາຂ້າຫຍ້າ,ຢາຂ້າແມງໄມ້, ຖົງຢາງ, ການກະກຽມດິນ, ແຮງງານ, ອຸປະກອນ...ລະອຽດ ແລະຜູ້ໃດຮັບຜິດຊອບຫຍັງບໍ?, | ☐ | ☐ | ☐ | |
| 14 | ໄດ້ກຳນົດມາດຕະການລະອຽດຖ້າຜູ້ໃດລະເມີດສັນຍາ ແລະມາດຕະການ ສາມາດປະຕິບັດຫຼື ບັງຄັບໃຊ້ໄດ້ບໍ? | ☐ | ☐ | ☐ | |
| 15 | ໄດ້ກຳນົດມາດຕະການ ແລະ ຄວາມຮັບຜິດຊອບຂອງຝ່າຍຕ່າງໆ ສຳລັບການແກ້ໄຂບັນຫາ ທີ່ອາດເກີດຂື້ນ ຍ້ອນເຫດສຸດວິໃສ ເຊັ່ນ: ໄພພິບັດບໍ? | ☐ | ☐ | ☐ | |

| ລດ | ເນື້ອໃນການກວດສອບ | ຄໍາຕອບ | | | ອະທິບາຍເພີ່ມ, ຄໍາແນະນໍາ |
|---|---|---|---|---|---|
| | | ແມ່ນ/ມີ | ບໍ່ແມ່ນ/ມີ | ບໍ່ແນ່ໃຈ | |
| 16 | ພາກສ່ວນທີ່ລົງລາຍເຊັນຮ່ວມໃນບົດສັນຍາ ແລະ ພະຍານ ເໝາະສົມແລ້ວບໍ? | ☐ | ☐ | ☐ | |
| 17 | ບັນດາເນື້ອໃນຂອງສັນຍາຄົບຖ້ວນ, ລະອຽດ ຈະແຈ້ງ, ເຂົ້າໃຈ ແລະ ຍອມຮັບໄດ້ບໍ? | ☐ | ☐ | ☐ | |
| 18 | ທ່ານ ຫຼື ຕົວແທນຂອງທ່ານ, ໄດ້ຮັບ ແລະ ເກັບຮັກສາ ສັນຍາທີ່ເຊັນແລ້ວໄວ້ບໍ? | ☐ | ☐ | ☐ | |
| 19 | ກຳນົດລະອຽດພາກສ່ວນທີ່ມີສ່ວນຮ່ວມ,ສິດ ແລະ ໜ້າທີ່ ແລະ ຄວາມຮັບຜິດຊອບ | ☐ | ☐ | ☐ | |
| 20 | ມີເອກະສານແນບທ້າຍ (ແຜນການ ແລະ ການຕິດຕາມ ກວດກາຜະລິດ, ການເກັບຊື້ ແລະ ຂົນສົ່ງ) ບໍ? | ☐ | ☐ | ☐ | |

ການກວດກາເນື້ອໃນຂອງສັນຍາກໍ່ເຊັ່ນກັນ, ອາດມີປະຕິບັດແຕກຕ່າງກັນໄປ ແລະ ບໍ່ມີຫຼັກການ ຫຼື ວິທີການທີ່ເປັນມາດຖານ. ແນວໃດກໍ່ຕາມ, ຫຼັງຈາກການກວບສອບແລ້ວພົບວ່າ ໂຄງສ້າງ, ເນື້ອໃນ ຫຼື ອົງປະກອບຂອງສັນຍາ; ຍັງຈໍາເປັນທີ່ຕ້ອງໄດ້ເບິ່ງລາຍລະອຽດ ເງື່ອນໄຂ, ວິທີການ, ມາດຕະການທີ່ຕິດພັນແຕ່ລະເນື້ອໃນ ຫຼື ອົງປະກອບ ລວມທັງ ບ່ອນອ້າງອີງ, ການອະທິບາຍຄໍາສັບ. ໃນການກວດສອບລາຍລະອຽດນີ້ ຜູ້ອໍານວຍຄວາມສະດວກອາດນໍາໃຊ້ 6 Ws (ແມ່ນຫຍັງ, ເປັນຫຍັງ, ຢູ່ໃສ, ເມືອໃດ, ໃຜເປັນຜູ້ຮັບຜິຊອບ ຫຼື ກ່ຽວຂ້ອງ ແລະ ດ້ວຍວິທີ ແລະ ເຕັກນິກໃດ?) ລວມທັງ ນໍາຍາມ, ຫຼັກການໃນກົດໝາຍທີ່ກ່ຽວຂ້ອງ ເພື່ອເປັນບ່ອນອີງ.

### 3.3.7 ຂັ້ນຕອນທີ 7: ການເຈລະຈາ ແລະ ຕົກລົງເອກະພາບກ່ຽວກັບສັນຍາ

ການເຈລະຈາເປັນບາດກ້າວທີ່ມີຄວາມສໍາຄັນຫຼາຍ ແລະ ຜູ້ອໍານວຍຄວາມສະດວກມີບົດສໍາຄັນທີ່ຕ້ອງໄດ້ຈັດຕັ້ງປະຕິບັດ. ການເຈລະຈາກ່ຽວກັບເງື່ອນໄຂ ແລະ ປະເດັນຕ່າງໆ ສາມາດຈັດຕັ້ງປະຕິບັດໄດ້ໃນກອງປະຊຸມເບື້ອງຕົ້ນ. ແຕ່ສໍາຄັນໄປກວ່ານັ້ນ ຄືການທົບທວນຮ່າງສັນຍາ ແລະ ປັບປຸງເປັນຮ່າງສັນຍາສະບັບສຸດທ້າຍກ່ອນເຊັນສັນຍາ. ການເຈລະຈາສ່ວນໃຫຍ່ແມ່ນຈັດຂຶ້ນໃນຮູບແບບກອງປະຊຸມປຶກສາຫາລືຮ່ວມກັບພາກສ່ວນທີ່ມີສ່ວນກ່ຽວຂ້ອງຕ່າງໆ. ຜູ້ອໍານວຍຄວາມສະດວກຄອບອໍານວຍຄວາມສະດວກຂະບວນການເຈລະຈາ ຫຼາຍກວ່າທີ່ຈະຕັດສິນປະເດັນ ແລະ ເງື່ອນໄຂຕ່າງໆໃນສັນຍາ ແລະ ນໍາໄປສູ່ ສະພາບເງື່ອນໄຂທີ່ຕ່າງຝ່າຍຕ່າງໄດ້ຜົນຢ່າງຈະແຈ້ງ ແລະ ສາມາດບັນລຸຂໍ້ຕົກລົງຮ່ວມກັນໄດ້. ໃນການເຈລະຈາສ່ວນໃຫຍ່ແມ່ນຕິດພັນກັບລາຄາ, ຄວາມເຂົ້າໃຈທີ່ເປັນເອກະພາບກ່ຽວກັບການກໍານົດຄຸນນະພາບ ແລະ ການວັດແທກ, ຂັ້ນຕອນ, ວິທີ ແລະ ເຕັກນິກກ່ຽວກັບການຜະລິດ ແລະ ຮູບແບບການລົງທຶນ .

#### 1) ການກໍານົດລາຄາ

ລາຄາທີ່ຍຸດຕິທໍາເປັນສິ່ງສໍາຄັນທີ່ສຸດສໍາລັບສອງຝ່າຍ; ເພື່ອກໍານົດລາຄາທີ່ຍຸດຕິທໍານັ້ນ ຈໍາເປັນຕ້ອງໄດ້ ຮັບຮູ້ກໍ່ຄືວິທີການສໍາລັບການກໍານົດລາຄາ. ຕາມຫຼັກການແລ້ວ ລາຄາຈະຖືກຕັ້ງຂຶ້ນ ໂດຍອີງໃສ່ງົບປະມານທີ່ລົງທຶນ; ລາຄາໃນ

ຕະຫຼາດແຫ່ງຕ່າງໆ (ທີ່ຜ່ານມາ, ປະຈຸບັນ ແລະ ຄາດຄະເນໃນອະນາຄົດ);ສະພາບຄວາມຕ້ອງການ ຫຼື ຜົນກຳໄລທີ່ຕ້ອງການ ແລະ ຄວາມສ່ຽງໃນການລົງທຶນ. ໃນຄວາມເປັນຈິງ ຜູ້ລົງທຶນຈຳນວນຫຼາຍໄດ້ພິຈາລະນາຄວາມສ່ຽງຕ່າງໆ ໂດຍສະເພາະແມ່ນ ການຂົນສົ່ງ, ຄວາມບໍ່ແນ່ນອນຂອງລາຄາໃນຕະຫຼາດແຫ່ງຕ່າງໆ. ໃນຄະນະດຽວກັນຊາວກະສິກອນ ສ່ວນຫຼາຍກຳນົດລາຄາພື້ນຖານ ໂດຍ ພິຈາລະນາຄ່າແຮງງານ, ທີ່ດິນທີ່ນຳໃຊ້ເຂົ້າໃນການຜະລິດ ແລະ ຄວາມສ່ຽງກ່ຽວກັບກຳການຜະລິດ ລວມທັງ ຜົນກຳໄລທີ່ຄາດໄວ້. ແນວໃດກໍ່ຕາມ, ມັນເປັນການຍາກທີ່ຈະໃຫ້ນິຍາມ ຫຼື ວັດແທກ ລາຄາ ທີ່ຍຸດຕິທຳທັງໝົດ ເພາະວ່າການໃຫ້ນິຍາມ ແລະ ການວັດແທກອາດແຕກຕ່າງກັນໄປຕາມແຕ່ລະມູມມອງ, ການປະເມີນ ແລະ ຍອມຮັບ ລວມທັງ ຂໍ້ມູນອື່ນໆ. ແນວໃດກໍ່ຕາມ, ຮູບທີ 6 ຂ້າງລຸ່ມນີ້ໃຫ້ຕົວຢ່າງ ບັນດາເງື່ອນໄຂຕ່າງໆທີ່ຕ້ອງເປັນຕ້ອງໄດ້ນຳມາພິຈາລະນາ ແລະ ເພື່ອໃຫ້ມີຄວາມສົມດູນ ກັນລະຫວ່າງສອງຝ່າຍໃນການກຳນົດລາຄາ.

**ຮູບທີ 6**: ຕົວຢ່າງເງື່ອນໄຂໃນການກຳນົດລາຄາ




ແນວໃດກໍ່ຕາມ, ໃນຫຼາຍຂົງເຂດ ແລະ ກໍລະນີ ທີ່ຜູ້ລົງທຶນເອົາປຽບ ຊາວກະສິກອນໃນການເຈລະຈາ ແລະ ຊາວກະສິກອນຈຳຕ້ອງໄດ້ຍອມຮັບກັບລາຄາທີ່ຕ່ຳ ໂດຍສະເພາະແມ່ນຊາວກະສິກອນຜູ້ທີ່ທຸກຍາກ, ມີທາງເລືອກຈຳກັດສຳລັບການສ້າງລາຍຮັບ, ບໍ່ສາມາດເຂົ້າເຖິງຕະຫຼາດ ແລະ ຫຼື ຂາດຂໍ້ມູນກ່ຽວກັບຕະຫຼາດ ແລະ ອຳນາດໃນການຕໍ່ລອງ. ໃນກໍລະນີນີ້ ຜູ້ອຳນວຍຄວາມສະດວກຈຳເປັນຕ້ອງໄດ້ ຮັບປະກັນວ່າການເຈລະຈາເປັນໄປໃນທາງທີ່ເທົ່າທຽມກັນ, ມີຄວາມຍຸດຕະທຳ ແລະ ແບ່ງຄວາມສ່ຽງ ແລະ ຜົນປະໂຫຍດຢ່າງສະເໝີພາບກັນ ເທົ່າທີ່ເປັນໄປໄດ້.

ດັ່ງທີ່ກ່າວມາໃນເບື້ອງຕົ້ນ, ຄາລາທີ່ກຳນົດມີ 3 ຮູບແບບຄື: ລາຄາຄົງທີ່, ລາຄ້ຳປະກັນ ແລະ ລາຄາຕະຫຼາດ; ການປ່ຽນແປງຂອງລາຄາມີຄວາມໝາຍ ແລະ ຜົນກະທົບຕໍ່ຜູ້ລົງທຶນ ແລະ ຊາວກະສິກອນສະແດງໃຫ້ເຫັນດັ່ງຮູບນີ້:

**ຕາຕະລາງ 10:** ລາຄາ, ການປ່ຽນແປງ ແລະ ຄວາມໝາຍສໍາລັບນັກລົງທຶນ ແລະ ຊາວກະສິກອນ

| ປະເພດລາຄາ | ການປ່ຽນແປງຂອງລາຄາຕາມທ້ອງຕະຫຼາດ | ນັກລົງທຶນ | ຊາວກະສິກອນ |
|---|---|---|---|
| **ລາຄາຕາມທ້ອງຕະຫຼາດ** | ⇧ | 🙂 | 🙂 |
| | ⇩ | ☹ | ☹ |
| **ລາຄາຄໍ້າປະກັນ** | ⇧ | 🙂 | 😐 |
| | ⇩ | ☹ | 😐 |
| **ລາຄາຄົງທີ່** | ⇧ | 🙂 | 🙂 |
| | ⇩ | ☹ | 😐 |

ນອກຈາກນັ້ນກໍ່ຕ້ອງຄໍານຶງເຖິງປະເດັນອື່ນໆ ເປັນຕົ້ນແມ່ນ:

- ມີທາງເລືອກ ແລະ ໂອກາດອື່ນທີ່ຈະສ້າງລາຍຮັບບໍ່ໃຫ້ຊຸມຊົນ ຫຼື ຜູ້ລົງທຶນບໍ່? ຫຼື ມີຜົນປະ ໂຫຍດອື່ນທີ່ສາມາດທົດແທນ ຫຼື ຊົດເຊີຍບໍ່? ຖ້າຫາຝ່າຍໃດຝ່າຍໜຶ່ງເສຍປຽບ
- ອາດມີການຜ່ອນສັ້ນຜ່ອນຍາວ ແລະ ເບິ່ງຜົນໃນໄລຍະຍາວ
- ອາດດີກວ່າບໍ່ໄດ້ຫຍັງເລີຍ ຫຼື ໄດ້ຕາມທີ່ຕັ້ງໃຈ ແຕ່ອາດຈະມີເງື່ອນໄຂທີ່ຫຍຸ້ງຍາກ ຫຼື ທ້າທາຍ

### 2) ຄຸນນະພາບ ຫຼື ມາດຖານຂອງຜະລິດຕະພັນ

ຄຸນນະພາບ ແລະ ມາດຕະຖານຂອງສິນຄ້າ ແມ່ນໜຶ່ງໃນປະເດັນທີ່ສໍາຄັນທີ່ນໍາມາປຶກສາຫາລືໃນຊ່ວງການເຈລະຈາ. ລາຄາແມ່ນກໍານົດຕາມຄຸນນະພາບຂອງຜະລິດຕະພັນ ຫຼື ຜົນຜະລິດ. ແນວໃດກໍ່ຕາມ ສິ່ງທີ່ສໍາຄັນກໍ່ຄື ນັກລົງທຶນ ແລະ ຊາວກະສິກອນ ຄວນເຂົ້າໃຈເປັນເອກະພາບກັນ ກ່ຽວກັບ ຕົວວັດແທກຄຸນນະພາບ ຫຼື ສະເປັກຂອງຜະລິດຕະພັນ ເຊັ່ນວ່າ: ຄວາມແກ່, ຄວາມອ່ອນ, ອາຍຸ ຫຼື ໄລຍະເວລາທີ່ເໝາະສົມສໍາລັບການເກັບກູ້, ນໍ້າໜັກ (ດິບ ຫຼື ແຫ້ງ), ຂະໜາດ, ຮູບຮ່າງ, ສີສັນ, ກິ່ນ, ຄວາມຊຸ່ມ, ລົດຊາດ, ການເຈືອປົນຂອງວັດຖຸ ຫຼື ສານ ແລະ ການຫຸ້ມຫໍ່ ອື່ນໆ. ຜູ້ລົງທຶນຄວນໃຫ້ການຊ່ວຍເຫຼືອທາງດ້ານເຕັກນິກ ແລະ ສ້າງຄວາມອາດສາມາດໃຫ້ຊາວກະສິກອນ ໂດຍສະເພາະແມ່ນການຜະລິດ, ການເກັບກູ້, ການປຸງແຕ່ງ, ການຫຸ້ມຫໍ່, ເກັບຮັກສາ ລວມທັງການຂົນສົ່ງ. ນອກນັ້ນມັນຍັງຈໍາເປັນທີ່ຕ້ອງໄດ້ເອກະພາບກັນແຜນການ ຕິດຕາມກວດກາ ແລະ ປະເມີນຄຸນນະພາບຂອງຜະລິດຕະພັນ ຫຼື ຜົນຜະລິດ. ຕາຕະລາງຂ້າງລຸ່ມນີ້ແມ່ນຕົວຢ່າງແຜນການກວດກາຄຸນນະພາບຂອງຜະລິດຕະພັນໃດໜຶ່ງ.

**ຕາຕະລາງ 11:** ຕົວຢ່າງແຜນການກວດກາຄຸນນະພາບ

| ລດ | ຊື່ຂອງຜະລິດຕະພັນ | ມາດຕະຖານຄຸນນະພາບ ຫຼື ມາດຕະຖານທີ່ກຳນົດໄວ້ | ຕົວວັດແທກ ຄຸນນະພາບ ແລະ ມາດຕະຖານ | ວິທີການ ແລະ ເຄື່ອງມື | ຊ່ວງເວລາ | ສະຖານທີ່ | ຜູ້ຮັບຜິດຊອບ ຫຼື ຄວຍມີສ່ວນຮ່ວມ | ໝາຍເຫດ |
|---|---|---|---|---|---|---|---|---|
| 1 | ຜະລິດຕະພັນ 1 | **ນໍ້າໜັກ ຕໍ່ຫົວໜ່ວຍ** , ຂະ ໜາດ, ຮູບຮ່າງ, ສີ, ກິ່ນ, ລົດຊາດ , ຄວາມຊຸ່ມຊື່ນ, ສິ່ງເຈືອປົນ, ສິ່ງຫຸ້ມຫໍ່ ອື່ນໆ | | | | | | ຕົວຢ່າງການອະທິບາຍເພີ່ມເຕີມ ບັດໃຈທີ່ບໍ່ສາມາດຫຼື ຫຍຸ້ງຍາກໃນການວັດແທກ |

### 3) ການຜະລິດ

ອີງໃສ່ຄຸນນະພາບ ແລະ ມາດຕະຖານທີ່ຕ້ອງການ, ຜູ້ລົງທຶນ ແລະ ຊາວກະສິກອນ ຈຳເປັນທີ່ຕ້ອງເຂົ້າໃຈ ແລະ ມີການຕົກລົງກ່ຽວກັບ ຂັ້ນຕອນ ແລະ ເຕັກນິກ ການຜະລິດ. ຂັ້ນຕອນການຜະລິດໝາຍເຖິງການກະກຽມພື້ນທີ່, ການສະໜອງປັດໃຈການຜະລິດ, ການເຮັດສວນກ້າ ແລະ ສາທິດ, ການປູກ, ການບົວລະບັດຮັກສາ, ການເກັບກ່ຽວ, ການເກັບຮັກສາ. ໃນຄະນະດຽວກັນ ເຕັກນິກການຜະລິດໝາຍເຖິງເຕັກນິກ ແລະ ວິທີການຕ່າງໆຂອງແຕ່ລະຂັ້ນຕອນການຜະລິດ. ແນວໃດກໍ່ຕາມ, ມັນຈຳເປັນຕ້ອງໄດ້ມີແຜນການລະອຽດ ວ່າມີກິດຈະກຳຫຍັງແດ່ທີ່ຕ້ອງໄດ້ປະຕິບັດ? ມີຈັກຂັ້ນຕອນ? ແລະ ນຳໃຊ້ເຕັກນິກ ແລະ ວິທີການຫຍັງ? ເມື່ອໃດ? ຢູ່ໃສ ? ໃຜເປັນເຈົ້າການ ແລະ ມີໃຜຄວນເຂົ້າຮ່ວມ? ຜູ້ລົງທຶນ ແລະ ຜູ້ມີສ່ວນຮ່ວມ ຈະໃຫ້ການຊ່ວຍເຫຼືອຫຍັງແດ່?. ຕາຕະລາງຂ້າງລຸ່ມນີ້ ເປັນຕົວຢ່າງໜຶ່ງສຳລັບແຜນການຕິດຕາມກວດກາ ຂັ້ນຕອນ ແລະ ເຕັກນິກການຜະລິດ.

**ຕາຕະລາງ 12:** ຕົວຢ່າງ ຕາຕະລາງກວດສອບຂັ້ນຕອນ ແລະ ເຕັກນິກການຜະລິດ

| ລດ | ກິດຈະກຳ | ວິທີການ, ເຕັກນິກ ແລະ ເຄື່ອງມື | ຊ່ວງເວລາ | ການສະໜັບສະໜູນ ແລະ ກວດກາ ຕິດຕາມຈາກນັກລົງທຶນ | ວິທີການໃນການສື່ສານ | ໝາຍເຫດ |
|---|---|---|---|---|---|---|
| 1 | ກະກຽມພື້ນທີ່ | | | | | |
| 2 | ສະໜອງປັດໃຈການຜະລິດ 1 | | | | | |
| 3 | ກ້າແກ່ນ,ຊໍາ ເບ້ຍ ຫຼື ອະນຸບານ | | | | | |
| 4 | ສະໜອງປັດໃຈ | | | | | |

| | | |
|---|---|---|
| | ການຜະລິດ 2 | |
| | ປູກ | |
| | ສະໜອງປັດໃຈ | |
| | ການຜະລິດ 3 | |
| 5 | ບົວລະບັດຮັກສາ | |
| 6 | ເກັບກູ້ | |
| 7 | ເກັບມ້ຽນ | |

ຄຽງຄູ່ກັບການກຳນົດແຜນຕິດຕາມກວດກາການຜະລິດທີ່ຈະແຈ້ງນັ້ນ, ແຜນການເກັບຊື້ ແລະ ຂົນສົ່ງກໍ່ຈຳເປັນທີ່ຕ້ອງປຶກສາຫາລື ແລະ ກຳນົດຢ່າງຈະແຈ້ງເຊັ່ນກັນ. ແຜນດັ່ງກ່າວ ອາດລະບຸ ປະເພດຜົນຜະລິດທີ່ ທີ່ຜູ້ລົງທຶນຈະເກັບຊື້, ຈຳນວນ, ສະຖານທີ່, ຄາດຄະເນເວລາ, ຈຳນວນຄັ້ງ, ວິທີການຈ່າຍ (ຕົວຢ່າງ: ເງິນສົດ, ສິນເຊື່ອ, ໄລຍະເວລາສຳລັບສິນເຊື່ອ ລວມທັງ ຈຳນວນຄັ້ງທີ່ຕ້ອງຈ່າຍ ອື່ນໆ.

### 3.3.8 ຂັ້ນຕອນທີ 8: ການຕົກລົງ ແລະ ເຊັນສັນຍາ

ພາຍຫຼັງທີ່ໄດ້ມີການປຶກສາຫາລື ແລະ ເຈລະຈາກ່ຽວກັບເນື້ອໃນ ແລະ ເງື່ອນໄຂຂອງສັນຍາພື້ນຖານ ຜ່ານການມີສ່ວນຮ່ວມຂອງພາກສ່ວນທີ່ກ່ຽວຂ້ອງແລ້ວ; ບາດກ້າວຕໍ່ໄປກໍ່ແມ່ນການເຊັນສັນຍາ. ສັນຍາຄວນຕ້ອງໄດ້ເຊັນ[17]ໂດຍຜູ້ລົງທຶນ ແລະ ຊາວກະສິກອນ. ຜູ້ທີ່ມີສ່ວນຮ່ວມອື່ນໆ ອາດລົງລາຍເຊັນ ເປັນພະຍານໄດ້ ແຕ່ບົດບາດ ແລະ ຄວາມຮັບຜິດຊອບຂອງພາກສ່ວນດັ່ງກ່າວຄວນກຳນົດຈະແຈ້ງໃນສັນຍາ.

ແນວໃດກໍ່ຕາມ, ມີຫຼາຍກໍລະນີທີ່ນາຍບ້ານ ແລະ ອົງການທີ່ກ່ຽວຂ້ອງຂອງລັດ ລົງລາຍແທນຊາວກະສິກອນ. ບາງຄັ້ງເຊັນໂດຍຕົວແທນເຊັ່ນ:ຫົວໜ້າກຸ່ມຜູ້ຜະລິດ ແລະ ເອົາບັນຊີລາຍຊື່ຊາວກະສິກອນ ທີ່ເປັນສະມາ ຊິກກຸ່ມ ທີ່ຈະເຂົ້າການຜະລິດແບບມີສັນຍາ ຄັດຕິດເປັນເອກະສານແນບທ້າຍຂອງສັນຍາ. ຜ່ານມາມີ ພຽງສ່ວນໜ້ອຍໜຶ່ງທີ່ຜູ້ລົງທຶນ ແລະ ຊາວກະສິກອນລົງລາຍເຊັນໂດຍກົງ.

#### "ຄິດກ່ອນເຊັນສັນຍາ"

ເຖິງວ່າຈະມີການກວດກາສັນຍາແລ້ວກໍ່ຕາມ, ຂະບວນການຕັດສິນໃຈຂ້າງລຸ່ມນີ້ອາດຈຳເປັນ ເພື່ອການກວດກາຄືນ. "ຄິດກ່ອນເຊັນສັນຍາ" ເປັນເຄື່ອງມືໜຶ່ງ ຊຶ່ງອາດສາມາດຊ່ວຍຊາວກະສິກອນ ໃນການຕັດ ສິນໃຈສຸດທ້າຍວ່າຈະເຂົ້າຮ່ວມການຜະລິດແບບມີສັນຍາ ຫຼື ບໍ? ເຄື່ອງມືດັ່ງກ່າວພະຍາຍາມຍົກຄຳຖາມທີ່ເປັນແນວທາງສຳລັບຊາວກະສິກອນທີ່ຈະຕັດ ສິນໃຈສຸດທ້າຍວ່າຈະເຂົ້າຮ່ວມການຜະລິດແບບມີສັນຍາ. ເຄື່ອງມືນີ້ ເນັ້ນໃສ່ ການທົບທວນຄືນ 3 ອົງປະກອບຫຼັກຄື: ປະເມີນຜູ້ລົງທຶນ, ການປະເມີນຕົນເອງຂອງຊາວກະສິກອນ, ເງື່ອນໄຂ ແລະ ຄວາມຄວາມຄົບຖ້ວນຂອງສັນຍາໂດຍລວມ.

[17] ໃນກໍລະນີທີ່ຜູ້ລົງທຶນ ແລະ ຊາວກະສິກອນບໍ່ສາມາດເຊັນດ້ວຍຕົນເອງ, ແລະ ຈຳເປັນຕ້ອງມອບໃຫ້ຕົວແທນເປັນຜູ້ລົງລາຍເຊັນແທນນັ້ນ ຜູ້ລົງທຶນ ແລະ ຊາວກະສິກອນ ຄວນຕ້ອງໄດ້ຂຽນເອກະສານມອບສິດທີ່ເປັນລາຍລັກອັກສອນ ອະທິບາຍເຖິງເຫດຜົນ ແລະ ເຊັນຢັ້ງຢືນການມອບສິດໃຫ້.

**ຮູບທີ 7:** ຂະບວນການຕັດສິນໃຈກ່ອນການເຊັນສັນຍາເຂົ້າຮ່ວມການຜະລິດກະສິກຳເປັນສິນຄ້າແບບມີຂໍ້ຜູກພັນໃນສັນຍາສຳລັບຊາວກະສິກອນ



### 3.3.9 ຂັ້ນຕອນທີ 9: ການຈັດຕັ້ງປະຕິບັດສັນຍາ

ສັນຍາຈະໄດ້ຮັບການຈັດຕັ້ງປະຕິບັດພາຍຫຼັງທີ່ໄດ້ເຊັນຮ່ວມກັນ; ຊຶ່ງການຈັດຕັ້ງປະຕິບັດກໍ່ແມ່ນອີງໃສ່ ເນື້ອໃນທີ່ໄດ້ຕົກລົງກັນໃນສັນຍາ ລວມທັງ ບົດບາດ ແລະ ຄວາມຮັບຜິດຊອບຂອງທຸກພາກສ່ວນທີ່ກ່ຽວຂ້ອງ. ແນວໃດກໍ່ຕາມ, ເມື່ອລິເລີ່ມຈັດຕັ້ງປະຕິບັດ ຜູ້ອໍານວຍຄວາມສະດວກຈໍາເປັນຕ້ອງຮັບປະກັນວ່າວຽກງານ ການຕິດຕາມກວດກາກໍ່ຄວນຈະລິເລີ່ມເຊັ່ນກັນ ແລະ ມີການສື່ສານເປັນປົກກະຕິລະຫວ່າງຜູ້ລົງທຶນ, ຊາວ ກະສິກອນ ແລະ ພາກສ່ວນທີ່ກ່ຽວຂ້ອງ; ແລະ ຖ້າຫາກເຫັນວ່າ ມີການຈັດຕັ້ງປະຕິບັດ ທີ່ບໍ່ເປັນ ໄປຕາມ ແຜນ, ບໍ່ສອດຄ່ອງ ຫຼື ບັນຫາ ໃນຊ່ວງການຈັດຕັ້ງປະຕິບັດ ກໍ່ຄວນ ໃຫ້ຂໍ້ມູນ, ນໍາມາປຶກສາຫາລືກັນ ແລະ ແກ້ໄຂບັນຫາຮ່ວມກັນ. ສໍາລັບການຕິດຕາມກວດກາ ເບິ່ງໃນຕາຕະລາງ 12 ແລະ ການແກ້ໄຂບັນຫາໃນ ຂໍ້ ສ ແລະ ຊ ໃນທ້າຍບົດແນະນໍານີ້.

### 3.3.10 ຂັ້ນຕອນທີ 10: ການຕິດຕາມກວດກາ, ການປະເມີນຜົນ ແລະ ງົບປະມານ

ການຕິດຕາມກວດກາ ແມ່ນ ກິດຈະກໍາຫຼັກທີ່ຊ່ວຍໃຫ້ ແລະ ຮັບປະກັນການຈັດຕັ້ງປະຕິບັດເປັນໄປຕາມສັນຍາ ແລະ ຂໍ້ຕົກລົງກັນ ລວມທັງ ການແກ້ໄຂບັນຫາ ແລະ ຂໍ້ຂັດແຍ່ງ ທີ່ອາດຈະເກີດຂື້ນໃນຊ່ວງ ການຈັດຕັ້ງປະຕິບັດສັນຍາ. ສະນັ້ນ ກອບໜ້າວຽກ ແລະ ງົບປະມານ ລວມທັງແຜນການຕິດຕາມກວດກາ ແລະ ການປະເມີນຜົນຕ້ອງໄດ້ເອກະພາບກັນໃນຊ່ວງເຈລະຈາ ແລະ ກ່ອນເຊັນສັນຍາຮ່ວມກັນ ແລະ ແຜນການຕິດຕາມກວດກາ ແລະ ການປະເມີນຜົນລວມທັງງົບປະມານ ແລະ ຄວາມຮັບຜິດຊອບຂອງພາກສ່ວນຕ່າງໆຈໍາເປັນຕ້ອງໄດ້ລະບຸໄວ້ ຫຼື ຄັດຕິດໄວ້ກັບສັນຍາ.

ການຕິດຕາມກວດກາ ແລະ ການປະເມີນຜົນການຈັດຕັ້ງປະຕິບັດສັນຍາ ອາດກວມເອົາການຕິດຕາມກວດ ກາ ແລະ ການປະເມີນຜົນກິດຈະກໍາໃນແຕ່ລະຂັ້ນຕອນການຜະລິດ; ການສະໜອງ ແລະ ນໍາໃຊ້ປັດໃຈການຜະລິດ; ຄຸນນະພາບ; ການຊື້-ຂາຍ ແລະ ລາຄາ, ການຂົນສົ່ງ ແລະ ການສົ່ງອອກ. ນອກນັ້ນ ຍັງຕ້ອງໄດ້ປະເມີນ ຜົນກະທົບທາງດ້ານ ເສດຖະກິດ-ສັງຄົມ, ສິ່ງແວດລ້ອມ ແລະ ຄວາມເພິ່ງພໍໃຈຂອງຜູ້ລົງທຶນ ແລະ ຊາວກະສິກອນ. ແນວໃດກໍ່ຕາມ ຝ່າຍຕ່າງໆຈໍາເປັນທີ່ຕ້ອງໄດ້ເອກະພາບກັນວ່າການການຕິດຕາມ ກວດກາ ແລະ ປະເມີນຜົນຄວນຈະປະຕິບັດຈັກຄັ້ງ, ເມື່ອໃດ? ເພື່ອຫຍັງ? ດ້ວຍວິທີໃດ? ຢູ່ໃສ? ແມ່ນໃຜຮັບຜິດຊອບຫຍັງ? ໃຊ້ງົບປະມານເທົ່າໃດ ແລະ ໃຜຮັບຜິດຊອບ?. ຕາຕະລາງຂ້າງລຸ່ມນີ້ ເປັນຕົວຢ່າງໜຶ່ງສໍາລັບແຜນການຕິດຕາມກວດກາ

**ຕາຕະລາງ 13:** ຕົວຢ່າງແຜນການຕິດຕາມກອດກາ

| ລດ | ຈຸດປະສົງຂອງການກອດກາຕິດຕາມ | ກິດຈະກໍາ ແລະ ປະເດັນທີ່ຈໍາເປັນຕ້ອງໄດ້ຕິດມຕາມກອດກາ | ວິທີການ/ເຕັກນິກ, ເຄື່ອງມື ແລະ ອຸປະກອນທີ່ນໍາໃຊ້, | ຢູ່ໃສ | ເມື່ອໃດ | ໂດຍຜູ້ໃດ ແລະ ຜູ້ເຂົ້າຮ່ວມຄວນມີໃຜແດ່ | ງົບປະມານເທົ່າໃດ ແລະ ຮັບພິດຊອບ |
|---|---|---|---|---|---|---|---|
| 1 | ເພື່ອຮັບປະກັນວ່າການກະກຽມດິນເປັນໄປຕາມແຜນການ (ການຜະລິດ)ທີ່ຕົກລົງກັນ-ຕາຕະ ລາງ 11 | ການກະກຽມດິນ | ລົງກອດກາຕົວຈິງພາກສະໜາມ ໂດຍອີງໃສ່ແຜນການຜະລິດເປັນບ່ອນອີງໃນການກອດກາຕິດຕາມ-ຕາຕະລາງ 11 | ບ້ານເປົ້າໝາຍ ຫຼື ບ້ານກ | ລະຫວ່າງ ຫຼື ພາຍຫຼັງທີ່ກະກຽມດິນ | ຜູ້ລົງທຶນ ຫຼື ຕົວແທນ, ນາຍບ້ານ, ພະນັກງານກະສິກໍາ-ສົ່ງເສີມ, ຊາວກະສິກອນ | ຜູ້ລົງທຶນ, ຫຼື ແຕ່ລະພາກສ່ວນຮັບພິດຊອບຄ່າໃຊ້ຈ່າຍຂອງຕົນເອງ |
| 2 | | ການສະໜອງປັດໃຈການຜະລິດ | - | | | | |
| 3 | | ການພັດທະນາສອນກ້າ ແລະ ປູກ | | | | | |
| 4 | | ການປູກ | | | | | |
| 5 | | ການບໍາລຸງຮັກສາ | | | | | |
| 6 | | ການເກັບກ່ຽວ | | | | | |
| 7 | | ການເກັບມ້ຽນ | | | | | |
| 8 | | ການເກັບຊື້ ແລະ ສໍາລະ | | | | | |
| 9 | | ການຂົນສົ່ງ ແລະ ສົ່ງອອກ | | | | | |

ໃນການຈັດຕັ້ງປະຕິບັດຕົວຈິງ, ງົບປະມານສໍາລັບ ການຕິດຕາມ ກອດກາ ແລະ ປະເມີນຜົນແມ່ນຜູ້ລົງລົງທຶນເປັນຜູ້ຮັບພິດຊອບ; ແນວໃດກໍ່ຕາມ ມັນເປັນສິ່ງຖ້າທາຍຫຼາຍ ສໍາລັບ ຜູ້ລົງທຶນຂະໜາດນ້ອຍ, ມີງົບປະມານຈໍາກັດ, ແລະ ລົງທຶນ ໃສ່ພືດຕາມລະດູການ ຫຼື ປະຈໍາປີ ທີ່ຈະແບ່ງງົບປະມານ ສໍາລັບ ການຕິດຕາມ ກອດກາ ແລະ ປະເມີນຜົນ. ສະນັ້ນ, ປະເດັນນີ້ຄວນຈະມີການປຶກສາຫາລື ແລະ ເອກະພາບກັນຢ່າງລະອຽດ.

ນອກຈາກການຕິດຕາມກອດກາ ແລະ ປະເມີນຜົນ ແຕ່ລະໄລຍະ; ການປະເມີນຜົນການຈັດຕັ້ງປະຕິບັດການຜະລິດແບບມີສັນຍາສາມາດຈັດຂຶ້ນປະຈໍາປີ ໃນຮູບແບບກອງປະຊຸມປະເມີນຜົນວຽກງານກະສິກໍາປະຈໍາປີ ຊຶ່ງຜ່ານມາພົບເຫັນການຈັດຕັ້ງປະຕິບັດໃນລັກສະນີ້ໃນບາງເມືອງ. ກອງປະຊຸມດັ່ງກ່າວແມ່ນໄດ້ເຊື້ອເຊີນບັນດາຜູ້ມີສ່ວນຮ່ວມ ຊຶ່ງລວມທັງຜູ້ລົງທຶນ, ຊາວກະສິກອນ, ອົງການຈັດຕັ້ງຂອງລັດ ຕ່າງໆ ເພື່ອປຶກສາຫາລືກ່ຽວກັບຜົນສໍາເລັດ, ຕົວແບບໃນການຜະລິດ ແລະ ສ້າງລາຍຮັບ, ຈຸດອ່ອນ ແລະ ຂໍ້ຄົງຄ້າງທີ່ຕິດພັນກັບ ການຈັດຕັ້ງປະຕິບັດ ສັນຍາ, ການ

ຜະລິດ ຫຼື ການຜະລິດກະສິກຳເປັນສິນຄ້າແບບມີສັນຍາໂດຍລວມ. ນອກນັ້ນ ຍັງເປັນການສະເໜີ, ປຶກສາຫາລື ກ່ຽວກັບແຜນຕໍ່ໜ້າ ແລະ ມາດຕະການໃນການແກ້ໄຂຂໍ້ຄົງຄ້າງໃນປີຜ່ານມາ.

### 3.4 ຄວາມສຳຄັນທາງດ້ານກົດໝາຍຕໍ່ການຜະລິດກະສິກຳເປັນສິນຄ້າແບບມີສັນຍາ

ມັນບໍ່ມີກົດໝາຍສະເພາະກ່ຽວກັບການຜະລິດກະສິກຳເປັນສິນຄ້າແບບມີສັນຍາ; ແຕ່ວຽກງານດັ່ງກ່າວແມ່ນຕິດພັນກັບຫຼາຍກົດໝາຍ ແລະ ກົດລະບຽບທີ່ມີຢູ່; ມັນຂຶ້ນກັບກອບ, ຈຸດປະສົງຂອງສັນຍາ, ປະເພດ ແລະ ຂະໜາດຂອງທຸລະກິດ ແລະ ຄູ່ສັນຍາ. ການຜະລິດກະສິກຳເປັນສິນຄ້າທີ່ນຳໃຊ້ສັນຍາທີ່ເປັນລາຍລັກອັກສອນແມ່ນມີຂໍ້ຜູກມັດ ແລະ ມີຜົນບັງຄັບໃຊ້ທາງກົດໝາຍ. ການເຂົ້າໃຈກ່ຽວກັບກົດໝາຍທີ່ກ່ຽວຂ້ອງຈະຊ່ວຍໃຫ້ຜູ້ອຳນວຍຄວາມສະດວກສາມາດເຊື່ອມສານ, ອ້າງອີງ, ການກຳນົດບັນດາວິທີການ, ຂໍ້ມູນລະອຽດຂຶ້ນ, ສອດຄ່ອງ ແລະ ສາມາດບັງຄັບໃຊ້ຕາມກົດໝາຍ. ໂດຍລວມແລ້ວ ບັນດານິຕິກຳທາງດ້ານກົດໝາຍທີ່ກ່ຽວຂ້ອງຕົ້ນຕໍກັບການຜະລິດເປັນສິນຄ້າແບບມີສັນຍາ ລວມມີ 5 ຂົງເຂດຕົ້ນຕໍ ຄື: ຂົງເຂດການຜະລິດ; ທຸລະກິດ, ການຄ້າ ແລະ ການລົງທຶນ; ສັນຍາ; ການແກ້ໄຂບັນຫາ ແລະ ອື່ນໆ.

**ຂົງເຂດການຜະລິດ:**

1. ກົດໝາຍວ່າດ້ວຍກະສິກຳ, ເລກທີ 01-98/ສພຊ, ລົງວັນທີ 10 ຕຸລາ 1998
2. ກົດໝາຍວ່າດ້ວຍແຮງງານ, ເລກທີ 06/ສພຊ, ລົງວັນທີ 27 ທັນວາ 2006
3. ກົດໝາຍວ່າດ້ວຍການປົກປັກຮັກສາສິ່ງແວດລ້ອມ
4. ກົດໝາຍວ່າດ້ວຍທີ່ດິນ, ເລກທີ 04/ສພຊ, ລົງວັນທີ 21 ຕຸລາ 2003

**ຂົງເຂດການເຮັດສັນຍາ:**

5. ກົດໝາຍວ່າດ້ວຍຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາ, ເລກທີ 1/ສພຊ, ລົງວັນທີ 8 ທັນວາ 2008
6. ກົດໝາຍວ່າດ້ວຍການຄ້ຳປະກັນການປະຕິບັດສັນຍາ, ເລກທີ 06/ສພຊ, ລົງວັນທີ 20 ພຶດສະພາ 2005

**ຂົງເຂດທຸລະກິດ, ການຄ້າ ແລະ ການລົງທຶນ:**

7. ກົດໝາຍວ່າດ້ວຍສົ່ງເສີມການລົງທຶນ, ເລກທີ 02/ສພຊ, ລົງວັນທີ 8 ກໍລະກົດ 2009
8. ກົດໝາຍວ່າດ້ວຍວິສາຫະກິດ, ສະບັບເລກທີ 11/ສພຊ, ລົງວັນທີ 9 ພະຈິກ 2005
9. ກົດໝາຍວ່າດ້ວຍການລົງທຶນຂອງລັດ ເລກທີ 08/ສພຊ 26 ພະຈິກ 2009
10. ກົດໝາຍວ່າດ້ວຍທຸລະກິດ ເລກທີ 03/ສພຊ 18 ກໍລະກົດ 1994

**ການແກ້ໄຂຂໍ້ຂັດແຍ່ງ:**

11. ກົດໝາຍວ່າການແກ້ໄຂຄຳຮ້ອງທຸກ, ເລກທີ 07/ສພຊ, ລົງວັນທີ 9 ພະຈິກ 2005
12. ກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ, ເລກທີ 6/ສພຊ, ລົງວັນທີ 17 ທັນວາ 2010
13. ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ, ເລກທີ 02/ສພຊ, ລົງວັນທີ 17 ພຶດສະພາ 2004

**ຂົງເຂດອື່ນໆ:**

14. ລັດຖະທຳມະນູນ, ເລກທີ 25/ສພຊ, ລົງວັນທີ 6 ພຶດສະພາ 2003

15. ກົດໝາຍວ່າດ້ວຍກຳມະສິດ, ເລກທີ 01/90/ສປສ 1990

16. ກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ, ເລກທີ 03/ສພຊ, ລົງວັນທີ 21 ຕຸລາ 2003

17. ກົດໝາຍວ່າດ້ວຍທະບຽນສານ, ເລກທີ 11/ສພຊ, ລົງວັນທີ 26 ພະຈິກ 2009

ໃນນັ້ນ, ກົດໝາຍ ແລະ ປະເດັນຫຼັກທີ່ຄວນໃສ່ໃຈ ໃນຊ່ວງອຳນວຍຄວາມສະດວກແມ່ນ:

***ກ. ກ່ຽວກັບບົດບາດຂອງຜູ້ອຳນວຍຄວາມສະດວກ***

ໃນມາດຕາ 49 ຫາ 64 ຂອງກົດໝາຍວ່າດ້ວຍກະສິກຳໄດ້ກ່າວວ່າເຈົ້າໜ້າທີ່ກະສິກຳຕ້ອງໄດ້ສະໜອງຂໍ້ມູນ ແລະ ການຊ່ວຍເຫຼືອທາງດ້ານເຕັກນິກໃຫ້ຊາວກະສິກອນໂດຍການມີສ່ວນຮ່ວມຂອງຊາວກະສິກອນ. ເຈົ້າໜ້າທີ່ຄວນຫຼີກເວັ້ນການຕັດສິນໃຈແທນຊາວກະສິກອນ ໂດຍປາສະຈາກການມີສ່ວນຮ່ວມ, ການເຫັນດີ ແລະ ຢັ້ງຢືນ (ໂດຍສະເພາະເປັນລາຍລັກອັກສອນ) ຈາກຊາວກະສິກອນ.

***ຂ. ຫຼັກການໃນການຈັດຕັ້ງປະຕິບັດສັນຍາ***

ສັນຍາຄວນຈັດຕັ້ງປະຕິບັດຕາມຫຼັກການພື້ນຖານ[18]ດັ່ງນີ້:

- ດ້ວຍຄວາມສະໝັກໃຈ: ຜູ້ທີ່ເຮັດສັນຍາບໍ່ຄວນຖືກບັງຄັບໃຫ້ເຊັນສັນຍາ;
- ມີຄວາມສະເໝີພາບ: ຜູ້ທີ່ເຮັດສັນຍາມີສິດສະເໝີພາບກັນ;
- ມີຄວາມຊື່ສັດ, ການຮ່ວມມື ແລະ ມີຄວາມຈິງໃຈຕໍ່ກັນ;
- ເຄົາລົບ ແລະ ປະຕິບັດ ຕາມລະບຽບກົດຫມາຍ ແລະ ຮີດຄອງປະເພນີອັນດີງາມຂອງຊາດລາວ.

***ຄ. ເງື່ອນໄຂຂອງສັນຍາ***

ສັນຍາ ຕ້ອງເຮັດຂຶ້ນໃຫ້ຄົບຖ້ວນຕາມເງື່ອນໄຂ[19] ດັ່ງນີ້:

- ຄວາມສະຫມັກໃຈຂອງຄູ່ສັນຍາ;
- ຄວາມສາມາດທາງດ້ານການປະພຶດຂອງຄູ່ສັນຍາ;
- ວັດຖຸປະສົງຂອງສັນຍາ ຕ້ອງໃຫ້ຈັດເຈນ, ມີຈິງ ແລະ ຖືກຕ້ອງຕາມກົດຫມາຍ;
- ເຫດຜົນຂອງສັນຍາ ຕ້ອງໃຫ້ຖືກຕ້ອງຕາມກົດຫມາຍ.
- ຮູບການຂອງສັນຍາ ຕ້ອງໃຫ້ສອດຄ່ອງກັບການກຳນົດຂອງກົດຫມາຍ.

***ງ. ຂະບວນການຮ່າງສັນຍາ***

- ຊາວກະສິກອນໄດ້ຮັບຂໍ້ມູນລ່ວງໜ້າກ່ອນຕັດສິນໃຈ
- ກ່ອນເຮັດສຳເລັດສັນຍາຕ້ອງໄດ້ຜ່ານຂະບວນການປຶກສາຫາລື, ການເຈລະຈາ ແລະ ຕັດສິນໃຈຮ່ວມກັນກ່ຽວກັບເນື້ອໃນ ແລະ ເງື່ອນໄຂຂອງສັນຍາ
- ຜູ້ທີ່ລົງລາຍເຊັນແທນຊາວກະສິກອນຕ້ອງໄດ້ຜ່ານການເຫັນດີ ແລະ ການຢັ້ງຢືນທີ່ເປັນລາຍລັກອັກສອນຈາກຊາວກະສິກອນເສຍກ່ອນ. ສັນຍາທີ່ຊາວກະສິກອນ ຫຼື ຕົວແທນຂອງຊາວກະສິກອນບໍ່ໄດ້ລົງລາຍເຊັນ ຫຼື ບໍ່ໄດ້ຮັບການເຫັນດີ ແລະ ຢັ້ງຢືນຈາກຊາວກະສິກອນຖືວ່າຊາວກະສິກອນບໍ່ມີຂໍ່ຜູກມັດໃນສັນຍາ ແລະ ບໍ່ມີພັນທະທີ່ຈະປະຕິບັດຕາມສັນຍາດັ່ງກ່າວ.

---

[18]ມາດຕາ 5 ຂອງກົດໝາຍຂໍ້ຜູ້ພັນໃນສັນຍາ ແລະ ນອກສັນຍາ, ສະບັບປີ 2008

[19]ມາດຕາ 10 ຂອງກົດໝາຍຂໍ້ຜູ້ພັນໃນສັນຍາ ແລະ ນອກສັນຍາ, ສະບັບປີ 2008

- ພາສາທີ່ໃຊ້ໃນສັນຍາຄວນອະທິບາຍຈະແຈ້ງ ແລະ ເຂົ້າໃຈສຳລັບທຸກຝ່າຍ. ຖ້າສັນຍາບໍ່ຂຽນເປັນພາສາລາວ, ຈຳຕ້ອງໄດ້ແປເປັນພາສາລາວ ແລະ ເກັບໄວ້ກັບທຸກຝ່າຍ.

***ຈ. ອົງປະກອບຫຼັກຂອງສັນຍາ***

ໂດຍລວມແລ້ວ ຈຸດປະສົງ, ລາຄາ, ໄລຍະຂອງການຈັດຕັ້ງປະຕິບັດ ແລະ ຄວາມຮັບຜິດຊອບຂອງຄູ່ສັນຍາ ເປັນອົງປະກອບຫຼັກຂອງສັນຍາ ປະເພດຕ່າງໆ. ແນວໃດກໍ່ຕາມ, ຢ່າງໜ້ອຍ ສັນຍາຄວນປະກອບດ້ວຍເນື້ອໃນລະອຽດຂອງບັນດາຫົວຂໍ້[20]ລຸ່ມນີ້:

- ຊື່, ນາມສະກຸນ ແລະ ບ່ອນຢູ່ຂອງຄູ່ສັນຍາ;
- ວັດຖຸປະສົງ, ລາຄາ, ກຳນົດເວລາປະຕິບັດ, ການຊຳລະ, ການນຳສົ່ງ;
- ຂອບເຂດ, ປະລິມານ ແລະ ຄຸນນະພາບຂອງເປົ້າໝາຍ;
- ສະຖານທີ່ຂອງການປະຕິບັດສັນຍາ ແລະ ພັນທະໃນການແຈ້ງໃຫ້ແກ່ກັນຊາບ;
- ຜົນສະທ້ອນຂອງການລະເມີດສັນຍາ;
- ຮູບການ ແລະ ອົງການແກ້ໄຂຂໍ້ຂັດແຍ່ງ;
- ເງື່ອນໄຂຂອງການປ່ຽນແປງ ແລະ ການສິ້ນສຸດສັນຍາກ່ອນກຳນົດ.

***ສ. ການແກ້ໄຂ ຂໍ້ຂັດແຍ່ງ ແລະ ການຂັດກັບສັນຍາ***

ການຂັດກັບສັນຍາ ແລະ ຂໍ້ຂັດແຍ່ງລະຫວ່າງຊາວກະສິກອນ ແລະ ຜູ້ລົງທຶນອາດເກີດຂຶ້ນໃນຊ່ວງຈັດຕັ້ງປະຕິບັດສັນຍາ. ມັນເປັນສິ່ງສຳຄັນທີ່ສຸດທີ່ບັນຫາດັ່ງກ່າວຈະຕ້ອງໄດ້ຖືກແກ້ໄຂຢ່າງເນາະສົມ ແລະ ມີປະສິດທິພາບ. ສະນັ້ນ, ຂະບວນການ ແລະ ມາດຕະການໃນການແກ້ໄຂຂໍ້ຂັດແຍ່ງຈຳເປັນຕ້ອງໄດ້ຕົກລົງເຫັນດີກັນໃນຊ່ວງເຈລະຈາ ແລະ ກຳນົດໄວ້ໃນສັນຍາ. ການແກ້ໄຂຂໍ້ຂັດແຍ່ງກ່ຽວກັບສັນຍາ ແມ່ນບົນພື້ນຖານການຕົກລົງກັນໄວ້ໃນສັນຍາ ໃນມາດຕາກ່ຽວກັບ ວິທີການແກ້ໄຂຂໍ້ຂັດແຍ່ງ ຊຶ່ງຄູ່ສັນຍາສາມາດ ກະທຳໄດ້ ໂດຍຜ່ານສາມທາງເລືອກ ຄື:

- ການປຶກສາຫາລື, ຕົກລົງ ແລະ ສ້າງຄວາມເຂົ້າໃຈຮ່ວມກັນຂອງສອງຝ່າຍ ; ຜູ້ລົງທຶນ ແລະ ຊາວກະສິກອນ
- ທັງສອງຝ່າຍຕົກລົງເຫັນດີ ແລະ ແກ້ໄຂບັນຫາຮ່ວມກັນ ໂດຍມີການຈັດຕັ້ງຂັ້ນເມືອງເປັນຜູ້ຊ່ວຍໄກ່ເກ່ຍ;
- ທັງສອງຝ່າຍຕົກລົງເຫັນດີ ແລະ ແກ້ໄຂບັນຫາຮ່ວມກັນ ໂດຍມີທະນາຍຄວາມເປັນຜູ້ຊ່ວຍໄກ່ເກຍ;
- ການໄກ່ເກ່ຍ ຫລື ຕັດສິນ ດ້ວຍຄະນະກຳມະການຈາກສຳນັກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດປະຈຳຢູ່ພະແນກຍຸຕິທຳແຂວງ, ນະຄອນ ຫລວງ ຫລື ປະຈຳກະຊວງຍຸຕິທຳ ແລະ
- ຕັດສິນໂດຍສານປະຊາຊົນ, ຊຶ່ງຄູ່ສັນຍາ ທັງສອງຝ່າຍ ຫລືຝ່າຍໃດໜຶ່ງອາດມີຜູ້ຕາງໜ້າທາງດ້ານກົດໝາຍ ຫຼື ທະນາຍຄວາມ

***ຊ. ການຮ້ອງທຸກ ແລະ ການແກ້ໄຂ***

ການຮ້ອງທຸກຄວນຂຽນເປັນລາຍລັກອັກສອນ ແລະ ປະກອບດ້ວຍເນື້ອໃນຕົ້ນຕໍດັ່ງລຸ່ມນີ:

- ຊື່ ແລະ ທີ່ຢູ່ຂອງບຸກຄົນ ແລະ ນິຕິບຸກຄົນທີ່ທ່ານຕ້ອງການຮ້ອງທຸກກັບ;
- ຊື່ ແລະ ນາມສະກຸນ, ອາຍຸ, ທີ່ຢູ່ຂອງບຸກຄົນທີ່ຕ້ອງການຮ້ອງທຸກ. ຖ້າເປັນກຸ່ມຄວນມອບໝາຍໃຫ້ຜູ້ໃດຜູ້ໜຶ່ງເປັນຕົວແທນໃນການຮ້ອງຂໍ, ຮ້ອງທຸກ ຫຼື ຮ້ອງຟ້ອງ. ຜູ້ທີ່ຮ້ອງທຸກຕ້ອງມີສິດ, ຖານະຖືກ ຕ້ອງຕາມກົດໝາຍ;

[20] ມາດຕາ 16 ຂອງກົດໝາຍຂໍ້ຜູ້ພັນໃນສັນຍາ ແລະ ນອກສັນຍາ, ສະບັບປີ 2008

- ປະເດັນທີ່ຕ້ອງການຮ້ອງທຸກ ຫຼື ແກ້ໄຂ ພ້ອມດ້ວຍເຫດຜົນ, ຂໍ້ມູນຫຼັກຖານທີ່ກ່ຽວຂ້ອງ ແລະ ການປຶກສາຫາລືໃນຜ່ານມາ ຖ້າມີ;
- ສະຖານທີ່, ວັນທີ່, ເດືອນ, ປີ ແລະ ລົງລາຍເຊັນ ຫຼື ຈ້ຳໂປ້ມືຂອງຜູ້ຮ້ອງທຸກ ຫຼື ຜູ້ຕາງໜ້າທາງກົດ ໝາຍ.

ໃນກໍລະນີທີ່ມີການຮ້ອງທຸກແບບປາກເປົ່າ, ເຈົ້າໜ້າທີ່ທີ່ກ່ຽວທີ່ຮັບຄຳຮ້ອງທຸກຕ້ອງໄດ້ບັນທຶກຕາມເນື້ອໃນທີ່ກ່າວມາຂ້າງເທິງນັ້ນເປັນລາຍລັກອັກສອນ.ເຈົ້າໜ້າທີ່ ທີ່ມີສິດໃນການແກ້ໄຂການຮ້ອງທຸກລວມມີ:

- ອົງການຈັດຕັ້ງຂອງລັດທີ່ລົງລາຍເຊັນໃນສັນຍາໃນນາມພະຍານ ແລະ ເຈົ້າໜ້າທີ່ ທີພົວພັນກັບການຜະລິດກະສິກຳເປັນສິນຄ້າແບບມີສັນຍາ;
- ສານ, ອະທິໄອຍະການ ແລະ ອົງການຈັດຕັ້ງສືບສວນ;
- ສະພາແຫ່ງຊາດ (ໃນກໍລະນີທີ່ມີການຮຽກຮ້ອງຄວາມເປັນທຳ).

ການແກ້ໄຂຄຳຮ້ອງທຸກຄວນເປັນໄປຕາມບາດກ້າວຂ້າງລຸ່ມນີ້:

- ທົບທວນ ແລະ ພິຈາລະນາຄຳຮ້ອງ, ຂໍ້ມູນ, ຫຼັກຖານທີ່ສະເໜີມາ ພ້ອມທັງກວດສອບ, ເກັບກຳຂໍ້ມູນ ແລະ ຫຼັກຖານເພີ່ມເຕີມຖ້າເຫັນວ່າຈຳເປັນ;
- ອອກຜົນຂອງການຕັດສິນໃຈກ່ຽວກັບການຮ້ອງທຸກ;
- ແຈ້ງຜົນຂອງການຕັດສິນໃຈ;
- ຈັດຕັ້ງປະຕິບັດການຕັດສິນໃຈ.

ການແກ້ໄຂການຮ້ອງທຸກຄວນຈັດຕັ້ງປະຕິບັດພາຍໃນ 20 ວັນພາຍຫຼັງທີ່ໄດ້ຮັບການຮ້ອງທຸກ (ມາດຕາ 19 ຂອງກົດໝາຍວ່າດ້ວຍການຮ້ອງທຸກ) ແລະ ການຮ້ອງຂໍຄວາມຍຸດຕິທຳຄວນແກ້ໄຂພາຍໃນ 30 ວັນ (ມາດຕາ 27 ຂອງກົດໝາຍວ່າດ້ວຍການຮ້ອງທຸກ).

## ເອກະສານອ້າງອີງ


*. Fullbrook D., 2011. Smallholder production agreements in the Lao PDR: qualifying success, LEAP*
*Eaton C. and Shepherd. W. A., 2001. Contract farming: Partnerships for growth. FAO Agriculture Services Bulletin 145*
*Glover D., Lim-Teck G., 1992. Contract Farming in Southeast Asia,: three countries study.*
*Fullbrook D., 2007. Contract Farming in Lao PDR: Cases and Questions, LEAP*


## For more information, Please contact


National Agriculture and Forestry Extension Services (NAFES)
Laos Extension for Agriculture Project (LEAP)
P O Box 9159, Hoay Njang
Vientiane
Tel: + 856 21 740253
Email: **leap4@laoex.org**, **cetdu@laoex.org**